# ຍຸດທະສາດການທ່ອງທ່ຽວ 2006-2020 ຂອງ ສປປ ລາວ#

## ພາກທີ I
## ສະພາບການທົ່ວໄປ

I. ສະພາບການທ່ອງທ່ຽວສາກົນ ແລະ ຂອງ ສປປ ລາວໃນ ໄລຍະຜ່ານມາ :

1. ສະພາບການທ່ອງທ່ຽວໂລກ :

ການທ່ອງທ່ຽວເປັນຂະແໜງການອຸດສາຫະກຳໜຶ່ງ ທີ່ມີການຂະຫຍາຍຕົວຢ່າງວ່ອງໄວ ແລະ ກວ້າງຂວາງ ຢູ່ບັນດາປະເທດໃນໂລກ. ໃນຍຸກປັດຈຸບັນ ຫຼາຍປະເທດໃນທົ່ວໂລກໄດ້ເອົາໃຈໃສ່ເປັນພິເສດ ຕໍ່ການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ ແລະ ຖືເປັນຂະແໜງການເສດຖະກິດປາຍແຫຼມເພື່ອພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຂອງປະເທດຕົນທັງນີ້ຍ້ອນວ່າ:

- ການທ່ອງທ່ຽວໄດ້ນຳເອົາເງິນຕາຕ່າງປະເທດເຂົ້າມາໃນປະເທດ.
- ຊຸກຍູ້ການລົງທຶນທາງທຸລະກິດທີ່ກ່ຽວຂ້ອງໂດຍທາງກົງແລະທາງອ້ອມເຊັ່ນ: ທຸລະກິດການນຳທ່ຽວ, ທຸລະກິດການພັກແຮມ, ທຸລະກິດບໍລິການອາຫານ, ການຂົນສົ່ງ, ການຂາຍເຄື່ອງທີ່ລະນຶກ ແລະ ອື່ນໆ.
- ຊຸກຍູ້ການລົງທຶນໃສ່ການສ້າງພື້ນຖານໂຄງລ່າງເຊັ່ນ: ຖະໜົນຫົນທາງ, ສະໜາມບິນ, ທ່າເຮືອໂດຍສານ, ລະບົບໂທລະຄົມມະນາຄົມ, ໄຟຟ້າ, ນ້ຳປະປາ ແລະ ອື່ນໆ.
- ສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນ ໃນຂະແໜງບໍລິການ ແລະ ການຜະລິດເປັນຕົ້ນແມ່ນການສົ່ງອອກກັບທີ່.
- ພາໃຫ້ມີການສະສົມເງິນຕາ ແລະ ມີການໝູນວຽນເງິນຕາພາຍໃນປະເທດເປັນຢ່າງດີ ແລະ ການກະຈາຍລາຍໄດ້ໄປສູ່ທ້ອງຖິ່ນ, ຊົນນະບົດຫ່າງໄກສອກຫລີກ.

ໂດຍເຫັນໄດ້ຄວາມສຳຄັນຂອງອຸດສະຫະກຳການທ່ອງທ່ຽວ ໃນປີ 1975 ອົງການທ່ອງທ່ຽວໂລກ (UN-WTO) ໄດ້ຮັບການສ້າງຕັ້ງຂຶ້ນ ເພື່ອປ່ຽນແທນສະຫະພັນການທ່ອງທ່ຽວສາກົນທີ່ສ້າງຂຶ້ນ ໃນປີ 1925 ໃນເວລານັ້ນ ມີສະມາຊິກພຽງແຕ່ 109 ປະເທດ. ຮອດປີ 2005 ອົງການທ່ອງທ່ຽວໂລກ ມີສະມາຊິກທັງໝົດ 150 ປະເທດ 7 ເຂດປົກຄອງຕົນເອງ ແລະ ສະມາຊິກຮ່ວມຈາກ ພາກສ່ວນທຸລະກິດ ແລະ ສະຖາບັນການສຶກສາອີກ 300 ແຫ່ງ ໃນນັ້ນ ສປປ ລາວ ກໍ່ໄດ້ເຂົ້າເປັນສະມາຊິກຖາວອນ ຂອງອົງການທ່ອງທ່ຽວໂລກ ໃນປີ 1971 ເປັນຕົ້ນມາ.

ໃນປີ 2003 ອົງການທ່ອງທ່ຽວໂລກ (UN-WTO) ໄດ້ຖືກຮັບຮອງເປັນ ອົງການວິຊາການສະເພາະຂອງ ອົງການສະຫະປະຊາຊາດ ທີ່ຮັບຜິດຊອບດ້ານການທ່ອງທ່ຽວ ໂດຍມີພາລະບົດບາດສຳຄັນໃນ ການກຳນົດນະໂຍບາຍການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວສາກົນ, ການພັດທະນາການທ່ອງທ່ຽວແບບຍືນຍົງ ດ້ວຍຈຸດປະສົງປະກອບສ່ວນເຂົ້າ ໃນການພັດທະນາເສດຖະກິດ, ຖ່າຍທອດເຕັກໂນໂລຊີທັນສະໄໝ, ຊຸກຍູ້ການພັດທະນາຮ່ວມກັນຂອງພາກລັດ ແລະ ພາກເອກກະຊົນ, ຊ່ວຍເຫຼືອດ້ານວິຊາການ ກ່ຽວກັບການສ້າງແຜນແມ່ບົດພັດທະນາການທ່ອງທ່ຽວ ໃຫ້ແກ່ບັນດາປະເທດສະມາຊິກ,

ການວິເຄາະ ຜົນກະທົບດ້ານເສດຖະກິດ, ສັງຄົມ, ວັດທະນະທຳ ແລະ ສິ່ງແວດລ້ອມ ເພື່ອເປັນເອກະສານທາງດ້ານວິຊາການແກ່ບັນດາປະເທດສະມາຊິກ.

ການສ້າງຕັ້ງອົງການທ່ອງທ່ຽວໂລກ (UN-WTO) ໄດ້ມີຜົນອັນດີໃຫ້ແກ່ອຸດສະຫະກຳການທ່ອງທ່ຽວຂອງໂລກ ໂດຍສະເພາະການແກ້ໄຂສະຖານະການ ໃນເວລາເກີດວິກິດການ ທີ່ສົ່ງຜົນກະທົບອັນບໍ່ດີຕໍ່ ອຸດສະຫະກຳການທ່ອງທ່ຽວ ເຊັ່ນ : ການກໍ່ການຮ້າຍ, ໄພພິບັດທາງທຳມະຊາດ, ການເກີດພະຍາດລະບາດ ແລະ ອື່ນໆ. ພ້ອມກັນນັ້ນ ກໍສ້າງມາດຕະຖານການບໍລິການ, ການຮັກສາຄວາມປອດໄພຂອງນັກທ່ອງທ່ຽວ.

ຈາກການເອົາໃຈໃສ່ພັດທະນາ ແລະ ສົ່ງເສີມການທ່ອງທ່ຽວຢ່າງຕັ້ງໜ້າໄດ້ເຮັດໃຫ້ ຈຳນວນນັກທ່ອງທ່ຽວໃນທົ່ວໂລກນັບມື້ນັບເພີ່ມຂຶ້ນຄື : ໃນ ປີ 1990 ຈຳນວນນັກທ່ອງທ່ຽວສາກົນໃນໂລກມີ 455 ລ້ານຄົນ, ມີລາຍຮັບຈາກການທ່ອງທ່ຽວທັງໝົດ 264 ຕື້ໂດລາ ສະຫະລັດ, ມາຮອດປີ 2000 ເພີ່ມຂຶ້ນ ເປັນ 687 ລ້ານຄົນ, ມີລາຍຮັບ 473 ຕື້ໂດລາສະຫະລັດ, ໃນປີ 2005 ມີຈຳນວນ 805 ລ້ານຄົນ ມີລາຍຮັບ 640 ຕື້ໂດລາສະຫະລັດ ແລະ ຄາດຄະເນເຖິງປີ 2020 ຈະເພີ່ມຂຶ້ນເປັນ 1 ຕື້ 560 ລ້ານຄົນ ແລະ ຈະສ້າງລາຍຮັບ ເປັນຈຳນວນ 1.550 ຕື້ໂດລາສະຫະລັດ.

## 2. ສະພາບການທ່ອງທ່ຽວຂອງພາກພື້ນ ອາຊີ-ປາຊີຟິກ, ອາຊຽນ ແລະ ອະນຸພາກພື້ນແມ່ນ້ຳຂອງ

ການທ່ອງທ່ຽວຢູ່ພາກພື້ນອາຊີ-ປາຊີຟິກ ມີອັດຕາການຂະຫຍາຍຕົວ ປະມານ 7% ຕໍ່ປີ ຄືໃນປີ 2000 ມີນັກທ່ອງທ່ຽວ 111 ລ້ານຄົນ, ປີ 2002 ມີ 120 ລ້ານຄົນ, ປີ 2003 ມີ 114 ລ້ານຄົນ, ຈຳນວນ ນັກທ່ອງທ່ຽວຫລຸດລົງໃນປີ 2003 ນີ້ ຍ້ອນເກີດພະຍາດທາງເດີນຫາຍໃຈກະທັນຫັນ (ພະຍາດຊາຣສ), ແຕ່ຕໍ່ມາ ໃນປີ 2004 ຈຳນວນນັກທ່ອງທ່ຽວກໍເພີ່ມຂຶ້ນເປັນ 145 ລ້ານຄົນ ແລະ ໃນປີ 2005 ມີ 154 ລ້ານຄົນ.

ບັນດາປະເທດອາຊຽນ ກໍແມ່ນຂົງເຂດໜຶ່ງ ທີ່ການທ່ອງທ່ຽວມີການຂະຫຍາຍຕົວສູງເຊັ່ນກັນ ບັນດາ ປະເທດອາຊຽນ ແມ່ນມີແນວທາງນະໂຍບາຍ ແລະ ສັນຍາຮ່ວມມືກັນຢ່າງຮອບດ້ານລວມທັງຂະແໜງການທ່ອງທ່ຽວ ເພື່ອສ້າງໃຫ້ອາຊຽນມີຄວາມເຂັ້ມແຂງ, ຫລຸດຜ່ອນຄວາມແຕກໂຕນກັນລະຫວ່າງ ບັນດາປະເທດສະມາຊິກອາຊຽນເກົ່າ ແລະ ໃໝ່, ມີສະຖຽນລະພາບ ແລະ ມີຄວາມສະຫງົບ. ບັນດາປະເທດສະມາຊິກອາຊຽນເກົ່າ ແມ່ນມີເງື່ອນໄຂສະດວກ ແລະ ສະພາບແວດລ້ອມທີ່ເອື້ອອຳນວຍ ເປັນຕົ້ນແມ່ນເຂົາເຈົ້າໄດ້ສ້າງ ແລະ ພັດທະນາພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກຢ່າງຫລວງຫລາຍ, ລະບຽບການເຂົ້າ-ອອກ, ການເດີນທາງ, ສະຖານທີ່ພັກພາອາໄສຢູ່ພາຍໃນປະເທດໄດ້ມີການ ພັດທະນາເປັນຢ່າງດີ, ການບໍລິການທີ່ມີຄຸນນະພາບ ແລະ ມີການໂຄສະນາຊຸກຍູ້ສົ່ງເສີມການທ່ອງທ່ຽວຢ່າງກວ້າງຂວາງ ສ່ວນບັນດາປະເທດສະມາຊິກໃໝ່ ເຖິງແມ່ນວ່າພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກອື່ນໆຍັງບໍ່ທັນພຽບພ້ອມກໍ່ຕາມ ແຕ່ກໍຖືໄດ້ວ່າບັນດາປະເທດເຫລົ່ານີ້ ເປັນຈຸດປາຍທາງການທ່ອງທ່ຽວໃຫມ່ທີ່ສ້າງຄວາມສົນໃຈ ໃຫ້ແກ່ນັກທ່ອງທ່ຽວນັບມື້ນັບຫລາຍຂຶ້ນ. ບັນດາປະເທດສະມາຊິກໃຫມ່ກໍ່ມີນະໂຍບາຍ ສົ່ງເສີມການທ່ອງທ່ຽວທີ່ສອດຄ່ອງກັບ ສະພາບການທ່ອງທ່ຽວ

ໃນໄລຍະໃຫມ່ຂອງຍຸກປັດຈຸບັນ ເລີ່ມແຕ່ປີ 1990 ອາຊຽນ ໄດ້ປະຕິບັດໂຄງການ ສົ່ງເສີມການທ່ອງທ່ຽວຮ່ວມກັນ ພາຍໃຕ້ຄຳຂວັນ "ອາຊຽນຈຸດປາຍທາງທ່ອງທ່ຽວໜຶ່ງດຽວ". ເພື່ອເຮັດໃຫ້ນະໂຍບາຍ ແລະ ມາດຕະການສົ່ງເສີມການທ່ອງທ່ຽວອາຊຽນເຊື່ອມໂຍງເຂົ້າກັນ, ບັນດາທ່ານ ຜູ້ນຳອາຊຽນໄດ້ ລົງນາມໃນສັນຍາທ່ອງທ່ຽວອາຊຽນ ( ASEAN Tourism Agreement ) ໃນວັນທີ 4 ພະຈິກ 2002 ທີ່ພະນົມເປັນປະເທດກຳປູເຈຍ ໂດຍມີຈຸດປະສົງ ເພື່ອແນໃສ່ສົ່ງເສີມການຮ່ວມມືດ້ານ ການທ່ອງທ່ຽວ ແລະ ອຸດສາຫະກຳທ່ອງທ່ຽວພາຍໃນອາຊຽນ ໃຫ້ມີຄວາມເຂັ້ມແຂງ ແລະ ສາມາດ ແຂ່ງຂັນກັບສາກົນ. ພ້ອມດຽວກັນນັ້ນສັນຍາດັ່ງກ່າວຍັງແນໃສ່ ເພື່ອກຳຈັດສິ່ງກີດຂວາງຕ່າງໆ ແລະ ສ້າງສິ່ງອຳນວຍຄວາມສະດວກຊຶ່ງກັນ ແລະ ກັນເປັນຕົ້ນການຍົກເວັ້ນວີຊາເຂົ້າ-ອອກປະເທດ ສຳລັບ ພົນລະເມືອງຂອງ ປະເທດສະມາຊິກອາຊຽນດ້ວຍກັນ, ການໂຄສະນາ ແລະ ສົ່ງເສີມການທ່ອງທ່ຽວ ອາຊຽນຮ່ວມກັນ (VAC), ການ ຮ່ວມມືລະຫວ່າງພາກລັດກັບພາກເອກກະຊົນເປັນຕົ້ນ: ການຮ່ວມມືກັບສະມາຄົມທຸລະກິດທ່ອງທ່ຽວອາຊຽນ, ສະມາຄົມທຸລະກິດ ໂຮງແຮມແລະຮ້ານອາຫານອາຊຽນ, ສະມາຄົມການບິນ ອາຊຽນ ແລະ ອື່ນໆ. ພ້ອມກັນນັ້ນກໍໄດ້ມີການຮ່ວມມືໃນ ການພັດທະນາຊັບພະຍາກອນມະນຸດ, ການຍົກລະດັບມາດຕະຖານຂອງການບໍລິການ, ການເດີນທາງ ພາຍໃນອາຊຽນ ແລະ ການລົງທຶນໃນ ທຸລະກິດການທ່ອງທ່ຽວ ແລະ ສິ່ງອຳນວຍຄວາມສະດວກອື່ນໆ.

ພ້ອມນັ້ນກໍໄດ້ມີການຮ່ວມມືໃນການພັດມະນາຊັບພະຍາກອນມະນຸດ ຜົນຂອງການຮ່ວມມືລະຫວ່າງ ປະເທດອາຊຽນໃນຂະແໜງທ່ອງທ່ຽວໄດ້ສະແດງອອກຄື: ໃນປີ 2005 ອາຊຽນ ໄດ້ມີນັກທ່ອງທ່ຽວສາກົນ ເຖິງ 50 ລ້ານຄົນ, ໃນນັ້ນ ມາເລເຊຍ ມີເຖິງ 15,7 ລ້ານຄົນ, ໄທ 11,7 ລ້ານຄົນ, ສິງກະໂປ 8,3 ລ້ານ ຄົນ, ອິນໂດເນເຊຍ 5,3 ລ້ານຄົນ, ຫວຽດນາມ 3,8 ລ້ານຄົນ, ຟິລິປິນ 2,3 ລ້ານຄົນ, ກຳປູເຈຍ 1,4 ລ້ານ ຄົນ, ລາວ 1,1ລ້ານຄົນ, ບຣູໄນ 1 ລ້ານຄົນ, ມຽນມາ 656 ພັນ ຄົນ. ຂົງເຂດອາຊຽນນີ້ຖືວ່າເປັນເຂດທີ່ ການທ່ອງທ່ຽວພົ້ນເດັ່ນທຽບກັບ ເຂດຄາຣິບບຽນ ແລະ ເມດີເຕຣານຽນ.

ນອກຈາກການຮ່ວມມືໃນກອບອາຊຽນແລ້ວ ກໍໄດ້ມີໂຄງການຮ່ວມມືດ້ານເສດຖະກິດ ເຊັ່ນດຽວກັນໃນກອບ 6 ປະເທດອະນຸພາກພື້ນແມ່ນ້ຳຂອງ ( ຈີນ ແຂວງຢູນນານ ແລະ ແຂວງກວາງຊີ), ມຽນມາ, ໄທ, ລາວ, ກຳປູເຈຍ ແລະ ຫວຽດນາມ ໂດຍແມ່ນທະນາຄານພັດທະນາອາຊີ ເປັນຜູ້ລິເລີ່ມ ແລະ ເປັນໃຈກາງປະສານງານ ໂດຍເລີ່ມແຕ່ປີ 1993 ເປັນຕົ້ນມາ, ໃນນັ້ນລວມທັງໂຄງການຮ່ວມມືດ້ານການທ່ອງທ່ຽວດ້ວຍ ຊຶ່ງໄດ້ຮັບການ ຈັດຕັ້ງປະຕິບັດ ຢ່າງຕໍ່ເນື່ອງເປັນຕົ້ນ :

1) ແຜນງານສົ່ງເສີມໃຫ້ອະນຸພາກພື້ນແມ່ນ້ຳຂອງກາຍເປັນຈຸດປາຍທາງທ່ອງທ່ຽວອັນດຽວກັນໂດຍໄດ້ຮ່ວມກັນປະຕິບັດກິດຈະກຳ ການສົ່ງເສີມການທ່ອງທ່ຽວເຊັ່ນ: ການຈັດງານເທດສະການ, ກອງປະຊຸມສຳມະນາ, ຈັດການທັດສະນະສຶກສາໃຫ້ແກ່ບໍລິສັດທ່ອງທ່ຽວ ແລະ ສື່ມວນຊົນຈາກສາກົນ, ສ້າງເວບໄຊສ໌ ທ່ອງທ່ຽວ GMS, ເຂົ້າຮ່ວມງານວາງສະແດງສາກົນ ແລະ ຜະລິດອຸປະກອນໂຄສະນາຕ່າງໆ.

2) ແຜນງານພັດທະນາຊັບພະຍາກອນມະນຸດໃນຂະແໜງການທ່ອງທ່ຽວ ໂດຍການຈັດຝຶກອົບຮົບຄູຝຶກ ດ້ານການທອ່ງທ່ຽວ, ການຝຶກອົບຮົມດ້ານການຄຸ້ມຄອງການທ່ອງທ່ຽວ, ຄຸ້ມຄອງໂຮງແຮມ, ການສົ່ງເສີມ ການຕະຫລາດທ່ອງທ່ຽວ ແລະ ຫົວຂໍ້ອື່ນໆ.

3) ແຜນງານສົ່ງເສີມການທ່ອງທ່ຽວແບບອະນຸລັກປະຊາຊົນມີສ່ວນຮ່ວມ ເພື່ອພັດທະນາການທ່ອງທ່ຽວ ແບບຍືນຍົງ ຊຶ່ງແຕ່ລະປະເທດສະມາຊິກກໍໄດ້ມີນະໂຍບາຍພັດທະນາ ແລະ ມີຫລາຍໂຄງການໄດ້ປະສົບຜົນ ສໍາເລັດເປັນຢ່າງດີ. ສໍາລັບ ສປປ ລາວ ແມ່ນໄດ້ຮັບການສະໜັບສະໜູນດ້ານງົບປະມານ ແລະ ດ້ານວິຊາ ການ ຈາກປະເທດເພື່ອນມິດ, ສະຖາບັນການເງິນ ແລະ ອົງການຈັດຕັ້ງສາກົນເຊັ່ນ : ທະນາ ຄານພັດທະນາ ອາຊີ, ທະນາຄານ ໂລກ, EU, SNV, New Zealand AID, GTZ, DED, UNESCO, WTO, ຝຣັ່ງ ແລະ ອື່ນໆ.

4) ແຜນງານອໍານວຍຄວາມສະດວກແກ່ນັກທ່ອງທ່ຽວໃນການເດີນທາງເຂົ້າ-ອອກ ແລະພໍານັກຢູ່ພາຍ ໃນປະເທດອະນຸພາກພື້ນແມ່ນໍ້າຂອງໂດຍການເອົາໃຈໃສ່ປັບປຸງລະບົບການກວດກາຄົນເຂົ້າ-ອອກ ປະເທດ ຢູ່ຕາມດ່ານສາກົນ, ການອະນຸມັດວິຊາກັບດ່ານ ແລະ ການເກັບຄ່າທໍານຽມຕ່າງໆ.

ມາເຖິງປັດຈຸບັນນີ້ບັນດາປະເທດອະນຸພາກພື້ນແມ່ນໍ້າຂອງໄດ້ເຊັນສັນຍານໍາກັນຫລາຍສະບັບເຊັ່ນ: ສັນຍາວ່າດ້ວຍການຂົນສົ່ງສິນຄ້າ ແລະ ການໄປມາຫາສູ່ຂອງພົນລະເມືອງ, ສັນຍາກ່ຽວກັບການເຊື່ອມຕໍ່ລະບົບໂທລະຄົມມະນາຄົມ, ລະບົບໄຟຟ້າ, ການປັບປຸງລະບົບການບໍລິຫານຄຸ້ມຄອງບຸກຄະລາກອນ.

ສໍາລັບກອບການຮ່ວມມືດ້ານຍຸດທະສາດເສດຖະກິດ ຂອງບັນດາປະເທດຕາມແມ່ນໍ້າເອລະວະດີ,ເຈົ້າ ພະຍາ ແລະ ແມ່ນໍ້າຂອງຫຼື (ACMECS) ກໍໄດ້ມີຫລາຍແຜນງານທີ່ໄດ້ຕົກລົງກັນ ແລະ ກໍາລັງຈັດຕັ້ງປະຕິ ບັດຮ່ວມກັນຢ່າງຕັ້ງໜ້າ.

ການຮ່ວມມືດ້ານການທ່ອງທ່ຽວໃນກອບຂອງໂລກ, ພາກພື້ນ, ອະນຸພາກພື້ນໄດ້ເຮັດໃຫ້ພວກເຮົາໄດ້ ຮັບຜົນປະໂຫຍດນັບມື້ນັບຫລາຍຂຶ້ນຊຶ່ງເປັນການປະກອບສ່ວນອັນສໍາຄັນ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມໃນ ປະເທດພວກເຮົາ.

## 3. <u>ສະພາບການທ່ອງທ່ຽວໃນ ສປປ ລາວ</u> :

### 3.1. <u>ນະໂຍບາຍເປີດກວ້າງກ່ຽວກັບການທ່ອງທ່ຽວຂອງລັດຖະບານ</u>

ພາຍຫລັງກອງປະຊຸມໃຫຍ່ຄັ້ງທີ IV ຂອງພັກໃນປີ 1986 ທີ່ໄດ້ກໍານົດແນວທາງການປ່ຽນແປງໃໝ່ຮອບດ້ານ ແລະ ການເປີດກວ້າງການຮ່ວມມືກັບຕ່າງປະເທດ, ການທ່ອງທ່ຽວໄດ້ຄ່ອຍໆ ເຂົ້າມາມີບົດບາດໃນການພັດທະນາເສດຖະກິດ-ສັງຄົມຂອງປະເທດພວກເຮົາ. ລັດຖະບານໄດ້ກໍານົດ ແລະ ປະກາດ ຈັດຕັ້ງປະຕິບັດ ການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ ວັດທະນະທໍາ, ທໍາມະຊາດ ແລະ ປະຫວັດສາດ ເພື່ອ

ຮອງຮັບໃຫ້ແກ່ການທ່ອງທ່ຽວ ແລະ ການບໍລິການອື່ນໆ ໃຫ້ມີການຂະຫຍາຍຕົວ, ລັດຖະບານໄດ້ທຸ້ມເທ ໃສ່ການພັດທະນາ ພື້ນຖານໂຄງລ່າງຢ່າງຫລວງຫລາຍ ດ້ວຍການສ້າງເສັ້ນທາງຄົມມະນາຄົມໃຫ້ເຊື່ອມຈອດກັນໃນທົ່ວປະເທດ ແລະ ເຊື່ອມຈອດກັນກັບບັນດາປະເທດເພື່ອນບ້ານບໍ່ວ່າຢູ່ ພາກເໜືອ, ພາກກາງ ແລະ ພາກໃຕ້. ໃນໄລຍະ 4-5 ປີຜ່ານມາ ລັດຖະບານກໍໄດ້ມີຄວາມພະຍາຍາມສູງ ເພື່ອຂະຫຍາຍດ່ານເຂົ້າ-ອອກປະເທດ ໃຫ້ຫລາຍຂື້ນເພື່ອເຊື່ອມໂຍງກັບບັນດາປະເທດຕ່າງໆ ໃນໂລກ, ຍົກເວັ້ນວີຊາໃຫ້ ແກ່ປະເທດອາຊຽນຈຳນວນໜຶ່ງ ແລະ ຂະຫຍາຍສະໜາມບິນເພື່ອຮອງຮັບ ການຂະຫຍາຍຕົວຂອງການທ່ອງທ່ຽວ. ປັດຈຸບັນ ສປປລາວ ມີດ່ານສາກົນທົ່ວປະເທດທັງໝົດ 16 ແຫ່ງ (ເອກະສານຂັດຕິດຊ້ອນທ້າຍ), ສາມາດເອົາວີຊາກັບດ່ານໄດ້ 13 ແຫ່ງ; ມີສະໜາມບິນສາກົນ 3 ແຫ່ງ ຢູ່ນະຄອນຫລວງວຽງຈັນ, ເມືອງຫລວງພະບາງ ແລະ ເມືອງປາກເຊ. ການຍົກເວັ້ນວີຊາໃຫ້ແກ່ ບັນດາປະເທດອາຊຽນແມ່ນໄດ້ເຮັດກັບ 7 ປະເທດແລ້ວ ນອກຈາກອິນໂດເນເຊຍ ແລະ ມຽນມາ, ໄດ້ກຳນົດ ວີຊາ ກັບ ດ່ານຈາກ 15 ວັນຕໍ່ຄັ້ງ ໃນເມື່ອກ່ອນ ເປັນ 30 ວັນຕໍ່ຄັ້ງ ຕາມຄຳສັ່ງເລກທີ 15/ນຍ ສະບັບ ລົງວັນທີ 20/06/2006.

ເຖິງຢ່າງໃດກໍຕາມບັນດາດ່ານສາກົນໃນທົ່ວປະເທດບໍ່ທັນມີແບບແຜນການຄຸ້ມຄອງທີ່ເປັນເອກະພາບກັນ ແລະ ບໍ່ສາມາດກຳນົດໄດ້ວ່າ ດ່ານສາກົນເຫລົ່ານັ້ນແມ່ນຂື້ນກັບການຄຸ້ມຄອງຂອງ ພາກສ່ວນໃດ, ການເກັບຄ່າ

ບໍລິການຢູ່ໃນແຕ່ລະດ່ານ ກໍບໍ່ຄືກັນ ແລະ ມີລັກສະນະສວຍໂອກາດ ສ່ວນຫລາຍແມ່ນບໍ່ປະຕິບັດຕາມຄຳສັ່ງ ຂອງນາຍົກລັດຖະມົນຕີສະບັບ ເລກທີ 02/ນຍ, ລົງວັນ ທີ 27/11/2002 ວ່າດ້ວຍການເກັບຄ່າທຳນຽມ ຕ່າງໆໃນທົ່ວປະເທດ. ສິ່ງເຫລົ່ານີ້ໄດ້ສ້າງຄວາມລຳຄານໃຈໃຫ້ແກ່ສັງຄົມບໍ່ນ້ອຍ.

ແຜນງານພັດທະນາພື້ນຖານໂຄງລ່າງເພື່ອຮັບໃຊ້ການທ່ອງທ່ຽວໂດຍການໃຫ້ທຶນ ກູ້ຢືມ ແລະ ຊ່ວຍເຫລືອ ລ້າ ຈາກສະຖາບັນການເງິນສາກົນ ແລະ ບັນດາ ປະເທດຜູ້ຊ່ວຍທຶນເປັນຕົ້ນ ການສ້າງເສັ້ນທາງອາ 3, ທາງເລກ 8, ທາງເລກ 9, ເລກ 12, ທາງເລກ 18 ເບ , ການສ້າງຂົວຂ້າມແມ່ນ້ຳຂອງ, ການປັບປຸງ ແລະ ກໍ່ ສ້າງທາງເຂົ້າຫາ ແຫລ່ງທ່ອງທ່ຽວ, ການປັບປຸງ ແລະ ກໍ່ສ້າງສະໜາມບິນ, ການກໍ່ສ້າງ ລະບົບ ໄຟຟ້າ, ນ້ຳປະປາ, ໂທລະສັບ ແລະ ອື່ນໆ. ນອກຈາກນັ້ນກໍມີການເຊື່ອມໂຍງດ້ານການບິນ ລະຫວ່າງຕົວເມືອງ ທີ່ເປັນແຫລ່ງທ່ອງທ່ຽວສຳຄັນ ຂອງແຕ່ລະປະເທດ.

ຈາກການປະຕິບັດນະໂຍບາຍພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ ທີ່ກ່າວມານັ້ນ, ໄດ້ເຮັດໃຫ້ຂະແໜງການທ່ອງທ່ຽວ ມີການຂະຫຍາຍຕົວຢ່າງວ່ອງໄວ. ເວົ້າລວມແລ້ວ ນັບແຕ່ປີ 1990 ເຖິງ ປີ 2005 ຈຳນວນນັກທ່ອງທ່ຽວ ທີ່ເຂົ້າມາ ສປປ ລາວ ມີອັດຕາເພີ່ມຂື້ນສະເລ່ຍ 27,61% ຕໍ່ປີຄື : ໃນປີ 1990 ມີນັກທ່ອງທ່ຽວເຂົ້າມາທ່ຽວປະເທດເຮົາພຽງແຕ່ 14.400 ຄົນ, ປີ 1991 ມີ 37.113 ຄົນ, ສ້າງລາຍຮັບໄດ້ 2.250.000 ໂດລາສະຫະລັດ, ປີ 1999 - 2000 ໄດ້ມີການຈັດຕັ້ງປີທ່ອງທ່ຽວລາວ ອັນໄດ້ເຮັດໃຫ້ຕົວເລກນັກທ່ອງທ່ຽວ

ເພີ່ມຂຶ້ນຢ່າງກະໂດດຂັ້ນ ຄື ໃນປີ 2000 ມີເຖິງ 737.208 ຄົນ ສ້າງລາຍຮັບໄດ້ 113.898.285 ໂດລາສະຫະລັດ ຈັດຢູ່ໃນອັນດັບ ທີ 1 ຂອງບັນ ດາຂະແໜງການເສດຖະກິດສົ່ງອອກ, ປີ 2004 ພາຍຫລັງການເປັນ ເຈົ້າພາບ ຈັດງານທ່ອງທ່ຽວອາຊຽນ ຕົວເລກນັກທ່ອງທ່ຽວ ກໍ່ໄດ້ກະໂດດຂຶ້ນອີກເປັນບາດ ກ້າວທີ 2 ເຖິງ 894.806 ຄົນ, ສ້າງລາຍ ຮັບໄດ້ 118.947.707 ໂດລາສະຫະລັດ ຈັດຢູ່ໃນອັນດັບ 1 ເຊັ່ນດຽວກັນ. ໃນປີ 2005, ຕົວເລກ ນັກທ່ອງທ່ຽວ ເຂົ້າມາ ໃນປະເທດເຮົາ ມີເຖິງ 1,1 ລ້ານຄົນ.ໂດຍອີງຕາມອັດຕາການຂະຫຍາຍຕົວຂອງ ຈຳນວນ ນັກທ່ອງທ່ຽວ ໃນໄລຍະຜ່ານມາ ແລະ ຖ້າວ່າການທ່ອງທ່ຽວດຳເນີນ ໄປຕາມເກນປົກກະຕິແລ້ວ, ຮອດປີ 2010 ຄາດວ່າ ຈະມີນັກທ່ອງທ່ຽວເຖິງ 1,6 ລ້ານຄົນ, ປີ 2015 ຈະເຖິງ 2,2 ລ້ານຄົນ ແລະ ປີ 2020 ຈະເຖິງ 3 ລ້ານ ຄົນ, ຊຶ່ງຈະສ້າງລາຍຮັບສະເລ່ຍ 250 - 350 ລ້ານໂດລາ ສະຫະລັດຕໍ່ປີ.

<u>ດ້ານກົງຈັກການຈັດຕັ້ງ ແລະ ພະນັກງານໃນຂະແໜງການທ່ອງທ່ຽວ.</u>

ແຕ່ປີ 1990 ເປັນຕົ້ນມາລັດຖະບານໄດ້ພະຍາຍາມປັບປຸງກົງຈັກການຈັດຕັ້ງຢ່າງຕໍ່ເນື່ອງ ດ້ວຍການສັບ ຊ້ອນຂະແໜງການທ່ອງທ່ຽວໄປສັງກັດຢູ່ຂະແໜງການນັ້ນ ຂະແໜງການນີ້ໄປງມາງ ເຮັດໃຫ້ກົງຈັກການ ຈັດຕັ້ງ ບໍ່ມີຄວາມສະຫງົບເທົ່າທີ່ຄວນ, ຈົນຮອດປີ 1992 ຈຶ່ງມີດຳລັດເລກທີ 100/ນຍ, ລົງວັນທີ 23/12/1992 ກຳນົດໃຫ້ຂະແໜງການທ່ອງທ່ຽວ ເປັນອົງການທ່ອງທ່ຽວແຫ່ງຊາດທຽບເທົ່າກັບກົມໜຶ່ງ. ແຕ່ຕໍ່ມາຮອດປີ 2004 ລັດຖະບານໄດ້ມີດຳລັດເລກທີ 91/ນຍ, ລົງວັນທີ 30/06/2004 ໂດຍໄດ້ຍົກລະດັບ ອົງການທ່ອງທ່ຽວ ແຫ່ງຊາດເປັນທະບວງ, ຊຶ່ງມີລັດຖະມົນຕີ ເປັນ ປະທານ ແລະ ມີງົບປະມານ ຍົກຂຶ້ນເປັນຂັ້ນ I, ນີ້ແມ່ນເຫດການ ທີ່ມີຄວາມໝາຍຕັດສິນສຳລັບ ການພັດທະນາການທ່ອງທ່ຽວ ໃນຍຸກໂລກາພິວັດ ແລະ ການເຊື່ອມໂຍງເສດ ຖະກິດກັບບັນດາປະເທດໃນພາກພື້ນ ແລະ ໃນໂລກ.

ການສ້າງກົດໝາຍກ່ຽວກັບການທ່ອງທ່ຽວຊຶ່ງຖືກຮັບຮອງຢູ່ກອງປະຊຸມສາມັນຄັ້ງທີ 8 ຂອງສະພາແຫ່ງ ຊາດຊຸດທີ V ທີ່ຈັດຂຶ້ນໃນເດືອນພະຈິກປີ 2005 ໄດ້ເພີ່ມທະວີບົດບາດ ແລະ ຄວາມສຳຄັນສູງຂຶ້ນກ່ຽວກັບອຸດ ສາຫະກຳທ່ອງທ່ຽວລາວຕໍ່ພາຍໃນ ແລະ ຕ່າງປະເທດ.

ໃນ 2 ປີຜ່ານມາໂດຍອີງໃສ່ດຳລັດເລກທີ 91/ນຍ, ອົງການທ່ອງທ່ຽວແຫ່ງຊາດໄດ້ປັບປຸງ ຕົນເອງທັງ ໃນດ້ານໂຄງປະກອບການຈັດຕັ້ງກໍຄືການສັບຊ້ອນພະນັກງານຂັ້ນຕ່າງໆຄືນໃໝ່ ເພື່ອຍົກປະສິດທິພາບຂອງ ການຄຸ້ມຄອງ ບໍລິຫານວຽກງານທ່ອງທ່ຽວທີ່ນັບມື້ນັບຂະຫຍາຍຕົວ. ການປັບປຸງການຈັດຕັ້ງ ຍັງໄດ້ຫັນລົງ ສູ່ແຂວງ ແລະ ເມືອງຊຶ່ງຢູ່ບາງແຂວງ ກໍ່ໄດ້ມີການມອບສຳນັກງານໃໝ່ ໃຫ້ຢ່າງສົມໜ້າສົມຕາ ເພື່ອໃຫ້ ແຂກຄົນເຂົ້າໄປຫາສະດວກສະບາຍຍິ່ງຂຶ້ນ. ຫລາຍແຂວງ ກໍໄດ້ເປີດກອງປະຊຸມທ່ອງທ່ຽວ ເພື່ອປູກຈິດສຳ ນຶກກ່ຽວກັບວຽກງານທ່ອງທ່ຽວຕໍ່ບັນດາຂະແໜງການ, ກໍຄືຜູ້ປະກອບການທຸລະກິດທ່ອງທ່ຽວຕ່າງໆ.

ເຖິງຢ່າງໃດກໍຕາມກົງຈັກການຈັດຕັ້ງ ຂອງອົງການທ່ອງທ່ຽວແຫ່ງຊາດໃນທົ່ວປະເທດ ແມ່ນໄດ້ຮັບການ

ປັບປຸງໂດຍລວມ, ແຕ່ການຈັດຕັ້ງ ແລະ ບຸກຄະລາກອນໃນທົ່ວປະເທດ ຍັງບໍ່ທັນເຂັ້ມແຂງ ແລະ ພຽງພໍກັບຄວາມຕ້ອງການເຊັ່ນ: ຢູ່ຂັ້ນສູນກາງການປັບປຸງສັບຊ້ອນກົງຈັກ ແລະ ການກຳນົດພາລະບົດບາດຂອງແຕ່ລະກົມກອງຍັງເປັນວຽກໜັກໜ່ວງພໍສົມຄວນ, ຢູ່ຂັ້ນແຂວງ ຍັງເປັນ ຫ້ອງການທ່ອງທ່ຽວ ທີ່ຂຶ້ນກັບຫ້ອງວ່າການແຂວງຢູ່ ແລະ ຂັ້ນເມືອງຍັງບໍ່ທັນມີພະນັກງານທ່ອງທ່ຽວ ເປັນພຽງແຕ່ຜູ້ປະສານງານທ່ອງທ່ຽວເທົ່ານັ້ນຈຶ່ງເຮັດ ໃຫ້ການທ່ອງທ່ຽວ ຢູ່ບາງແຂວງ ແລະ ເມືອງບໍ່ໄດ້ຮັບການພັດທະນາເທົ່າທີ່ຄວນ.

## 3.3. ການວາງແຜນ ແລະ ພັດທະນາແຫລ່ງທ່ອງທ່ຽວ.

### 3.3.1. ການວາງແຜນພັດທະນາແຫຼ່ງທ່ອງທ່ຽວ

ໂດຍປະຕິບັດຕາມແນວທາງຂອງພັກ ແລະ ລັດຖະບານກ່ຽວກັບການພັດທະນາແຫລ່ງທ່ອງທ່ຽວທາງ ດ້ານວັດທະນະທຳ,ທຳມະຊາດ ແລະ ປະຫວັດສາດ ອົງການທ່ອງທ່ຽວແຫ່ງຊາດໄດ້ປະສານສົມທົບ ກັບ ຂະແໜງການທີ່ກ່ຽວຂ້ອງ ແລະ ອຳນາດການປົກຄອງທ້ອງຖິ່ນ ແລະ ໄດ້ຄົ້ນຄວ້າວາງແຜນ ແລະ ສ້າງໂຄງການພັດທະນາແຫລ່ງທ່ອງທ່ຽວໃນຂອບເຂດທົ່ວປະເທດເພື່ອຈັດລະດັບ ຄວາມສຳຄັນຂອງແຕ່ລະແຫລ່ງ ແນໃສ່ການພັດທະນາ, ປົກປັກຮັກສາ ແລະ ລົງທຶນ ຊຶ່ງມາເຖິງປັດຈຸບັນນີ້ ໄດ້ສຳຫລວດ ແລະ ຂຶ້ນ ບັນຊີແລ້ວມີຈຳນວນ 985 ແຫ່ງ, ໃນນັ້ນ ມີແຫຼ່ງທ່ອງທ່ຽວ ວັດທະນະທຳ 257 ແຫ່ງ, ແຫຼ່ງທ່ອງທ່ຽວ ທຳມະຊາດ 570 ແຫ່ງ ແລະ ແຫຼ່ງທ່ອງທ່ຽວ ປະຫວັດສາດ 162 ແຫ່ງ, ໄດ້ເປີດບໍລິການນຳໃຊ້ ແລ້ວ 364 ແຫ່ງ (ບັນຊີລະອຽດຕິດຂັດມາພ້ອມ). ປັດຈຸບັນມີບັນດາແຫຼ່ງທ່ອງທ່ຽວທີ່ໂດດເດັ່ນເປັນນິ່ງ ເມືອງ ແລະ ມີຊື່ສຽງໂດ່ງດັງ ລະດັບຊາດ ແລະ ລະດັບສາກົນ ຄື: ພະທາດຫລວງ, ຫໍພະແກ້ວ, ວັດສີສະເກດ. (ຢູ່ນະ ຄອນຫລວງວຽງຈັນ) ແຫລ່ງທ່ອງທ່ຽວທີ່ເປັນ ມໍລະດົກໂລກສອງແຫ່ງຄື: ເມືອງຫລວງພະບາງ ແລະ ວັດພູຈຳປາສັກ ພ້ອມດ້ວຍເມືອງໂບຮານເສດຖາປຸຣະ, ຫີນຕັ້ງ ແລະ ບັນດາຖ້ຳປະຫວັດສາດທີ່ ເມືອງ ວຽງໄຊ ແຂວງ ຫົວພັນ, ທົ່ງໄຫຫີນ ແຂວງ ຊຽງຂວາງ ທີ່ຈະຖືກຮັບຮອງເປັນມໍລະດົກໂລກ ໃນມໍ່ໆນີ້, ນ້ຳຕົກຕາດຄອນພະເພັງ-ລີ່ຜີທີ່ແຂວງຈຳປາສັກ ແລະ ແຫ່ງອື່ນໆ ທີ່ນັກທ່ອງທ່ຽວພວມ ສົນໃຈ.

ນອກຈາກນີ້ທາງດ້ານວັດທະນະທຳ ປະເທດເຮົາຍັງມີ ຮີດ 12 ຄອງ 14, ງານບຸນປະເພນີ, ພິທີກຳຕ່າງໆເຊັ່ນ: ບຸນປີໃໝ່ລາວ, ບຸນກິນຈຽງ, ບຸນປີໃໝ່ຂອງຊາວຂະມຸ, ບຸນຊ່ວງເຮືອ, ບຸນບັ້ງໄຟ, ພິທີບາສີສູ່ຂັວນ, ພິທີ ແຕ່ງງານ ແລະ ຮີດຄອງປະເພນີອັນຈີບງາມອື່ນໆ.

### 3.3.2 ການພັດທະນາການທ່ອງທ່ຽວທຳມະຊາດ ແບບອະນຸລັກ ປະຊາຊົນມີສ່ວນຮ່ວມ.

ອີງໃສ່ສະພາບພູມມີປະເທດ, ຄວາມອຸດົມສົມບູນທາງດ້ານທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳທີ່ເປັນມາຂອງປະເທດພວກເຮົາ. ຊຶ່ງໄດ້ເຮັດໃຫ້ການທ່ອງທ່ຽວມີເອກະລັກພິເສດທີ່ສ້າງຄວາມສົນໃຈນັບມື້ນັບເພີ່ມຂຶ້ນ, ນັ້ນແມ່ນການທ່ອງທ່ຽວແບບອະນຸລັກປະຊາຊົນມີສ່ວນຮ່ວມ ຊຶ່ງເປັນການພັດທະນາການທ່ອງທ່ຽວ ທີ່ນຳເອົາຜົນປະໂຫຍດໂດຍກົງລົງສູ່ປະຊາຊົນທີ່ຢູ່ເຂດຫ່າງໄກສອກຫລີກ, ທັງ

ເປັນການສົ່ງເສີມການອະນຸລັກຮັກສາຊັບພະຍາກອນທຳມະຊາດ ແລະ ວັດທະນະທຳທ້ອງຖິ່ນໂດຍສະເພາະແມ່ນຢູ່ພາຍໃນບໍລິເວນເຂດທີ່ມີປ່າສະຫງວນແຫ່ງຊາດ, ໝູ່ບ້ານຊົນເຜົ່າ, ຖ້ຳ, ແມ່ນ້ຳ ແລະ ແຫລ່ງທ່ອງທ່ຽວໂດດເດັ່ນໃດນຶ່ງທີ່ເຊື່ອມຕໍ່ເຂົ້າກັນ ເປັນຜະລິດຕະພັນທ່ອງທ່ຽວ ,ທຸກພາກສ່ວນ ໄດ້ມີສ່ວນຮ່ວມ ໃນໂຄງການນຳທ່ຽວດັ່ງກ່າວ ລວມທັງ ອຳນາດການປົກຄອງທ້ອງຖິ່ນ, ປະຊາຊົນຢູ່ເຂດໂຄງການ, ຜູ້ນຳ ທ່ຽວລ້ວນແຕ່ໄດ້ຮັບຜົນປະໂຫຍດ. ເລີ່ມຈາກໂຄງການ ໃນເຂດປ່າສະຫງວນ ແຫ່ງຊາດນ້ຳທ້າ ແຂວງ ຫຼວງນ້ຳທາ ຊຶ່ງເປັນໂຄງການໜຶ່ງ ທີ່ປະສົບຜົນສຳເລັດຢ່າງ ໜ້າເພິ່ງພໍໃຈ, ແຕ່ລະປີມີນັກທ່ອງທ່ຽວ ເຂົ້າ ໄປທ່ຽວປະມານ 2000 ຄົນສາມາດສ້າງລາຍຮັບທາງກົງ ແລະ ທາງອ້ອມໃຫ້ແກ່ທ້ອງຖິ່ນໄດ້ເປັນຈຳ ນວນບໍ່ໜ້ອຍ, ໄດ້ສ້າງ ວຽກເຮັດງານທຳໃຫ້ແກ່ປະຊາຊົນ ໃນເຂດໝູ່ບ້ານທີ່ຢູ່ຫ່າງໄກ ສອກຫຼີກໃຫ້ເຂົາເຈົ້າ ມີ ລາຍຮັບ ເພີ່ມຂຶ້ນ; ນອກຈາກນັ້ນກໍ່ຍັງຊ່ວຍໃຫ້ມີການອະນຸລັກສິ່ງແວດລ້ອມທຳມະຊາດ, ຫລຸດຜ່ອນ ການຖາງປ່າເຮັດໄຮ່, ສົ່ງເສີມການຜະລິດຂອງຊາວບ້ານ ແລະ ປົກປັກຮັກສາຮີດຄອງປະເພນີອັນດີງາມ ຂອງ ປະຊາຊົນບັນ ດາເຜົ່າ. ໃນປີ2001 ໂຄງການນີ້ໄດ້ຮັບລາງວັນດີເດັ່ນຈາກ ອົງການສະຫະປະຊາຊາດ ເພື່ອການພັດທະນາທີ່ມີວ່າຍອກ ( UNDP ) ກ່ຽວກັບການປະກອບສ່ວນ ຫລຸດຜ່ອນຄວາມທຸກຍາກ ແລະ ຕໍ່ມາໃນປີ 2002 ກໍໄດ້ຮັບລາງວັນດີເລີດຈາກ ສາຍການບິນອັງກິດ ( British Airways ). ແບບຢ່າງຂອງ ໂຄງການນ້ຳທ້າ ແຂວງຫຼວງນ້ຳທາ ດງວ ນີ້ໄດ້ຂະຫຍາຍໄປເຖິງ 8 ແຂວງແລ້ວເຊັ່ນ: ແຂວງຜົ້ງສາລີ, ຫຼວງພະບາງ, ຊຽງຂວາງ, ວຽງຈັນ, ບໍລິຄຳໄຊ, ຄຳມ່ວນ, ສະຫັວນນະເຂດ ແລະ ຈຳປາສັກ ຊຶ່ງໄດ້ຮັບ ຄວາມສົນໃຈຈາກນັກທ່ອງທ່ຽວ ສາກົນເປັນຢ່າງດີ ແລະ ສາກົນກໍສືບຕໍ່ໃຫ້ການ ສະໜັບສະໜູນ.

### 3.3.3. ການທ່ອງທ່ຽວທີ່ເຊື່ອມໂຍງລະຫວ່າງແຂວງກັບແຂວງ ແລະ ລະຫວ່າງແຂວງກັບປະເທດເພື່ອນບ້ານ.

ອີງໃສ່ສະພາບຈຸດພິເສດດ້ານພູມີປະເທດ, ປະເພດແຫລ່ງທ່ອງທ່ຽວ ແລະ ເສັ້ນທາງຄົມມະນາຄົມທີ່ສາມາດເຊື່ອມຕໍ່ລະຫວ່າງແຂວງກັບແຂວງ ແລະ ລະຫວ່າງແຂວງກັບປະເທດເພື່ອນບ້ານໃກ້ຄຽງໄດ້ມີຫລາຍເສັ້ນທາງທີ່ສ້າງຄວາມສົນໃຈແກ່ນັກທ່ອງທ່ຽວເປັນຢ່າງດີ ໃນແຕ່ລະເຂດແຄ້ວນ ຕົວຢ່າງ :

- **ລະຫວ່າງແຂວງກັບແຂວງ**

- ຜົ້ງສາລີ - ອຸດົມໄຊ - ຫລວງພະບາງ
- ຫລວງນ້ຳທາ - ອຸດົມໄຊ - ຫລວງພະບາງ
- ຫລວງພະບາງ - ແຂວງວຽງຈັນ - ນະຄອນຫລວງ
- ຫລວງພະບາງ - ຊຽງຂວາງ - ຫົວພັນ
- ໄຊຍະບູລີ - ຫລວງພະບາງ - ຊຽງຂວາງ - ຫົວພັນ
- ບໍ່ແກ້ວ - ອຸດົມໄຊ - ຫລວງພະບາງ
- ນະຄອນຫລວງວຽງຈັນ - ບໍລິຄຳໄຊ - ຄຳມ່ວນ - ສະຫວັນນະເຂດ
- ຈຳປາສັກ - ສາລະວັນ - ເຊກອງ - ອັດຕະປື

- **<u>ລະຫວ່າງແຂວງກັບປະເທດເພື່ອນບ້ານ</u>**

- ບໍ່ແກ້ວ - ຫລວງນ້ຳທາ - ເມືອງຫລາ( ສປ ຈີນ)
- ຫລວງນ້ຳທາ - ບໍ່ແກ້ວ - ຊຽງຂອງ (ປະເທດໄທ)
- ຊຽງຂວາງ - ນ້ຳກັ່ນຕາມສາຍທາງເລກ 7 (ສ.ສ ຫວຽດນາມ)
- ນະຄອນຫລວງວຽງຈັນ - ບໍລິຄຳໄຊ - ວິງ ( ສ.ສ ຫວຽດນາມ)
- ຄຳມ່ວນ - ກວາງບິງ( ສ.ສ ຫວຽດນາມ)
- ມຸກດາຫານ - ສະຫວັນນະເຂດ - ກວາງຈິ ( ສ.ສ ຫວຽດນາມ)
- ນະຄອນຫລວງວຽງຈັນ - ປາກເຊ - ສຽມຣຽບ( ກຳປູເຈຍ) ( ທາງອາກາດ)
- ຫລວງພະບາງ - ຊຽງໃຫມ່ ( ທາງອາກາດ )
- ຈຳປາສັກ - ອຸບົນຣາຊທານີ( ປະເທດໄທ)
- ເສັ້ນທາງທ່ອງທ່ຽວອື່ນໆ.

ເຖິງຢ່າງໃດກໍຕາມການວາງແຜນ ແລະ ພັດທະນາແຫລ່ງທ່ອງທ່ຽວຍັງບໍ່ທັນມີລະບົບຄົບຊຸດ ດັ່ງນັ້ນ ການທ່ອງທ່ຽວຈຶ່ງຍັງຂະຫຍາຍຕົວໄວຢູ່ສະເພາະໃນບາງຕົວເມືອງໃຫຍ່ເທົ່ານັ້ນ. ພ້ອມນັ້ນບັນດາແຫຼ່ງທ່ອງທ່ຽວສ່ວນຫລາຍຍັງບໍ່ທັນໄດ້ຮັບການປັບປຸງ ແລະ ຈັດສັນໃຫ້ເປັນແຫຼ່ງທ່ອງທ່ຽວ ທີ່ໜ້າສົນໃຈ ເພື່ອດຶງດູດນັກທ່ອງທ່ຽວ, ອັນເນື່ອງມາຈາກ ຂາດເຂີນທຶນຮອນ ແລະ ງົບປະມານ.

## 3.4. <u>ການຄຸ້ມຄອງຕໍ່ທຸລະກິດທ່ອງທ່ຽວ ແລະ ການລົງທຶນໃສ່ກິດຈະກຳການທ່ອງທ່ຽວ</u>

- ເພື່ອຊຸກຍູ້ສົ່ງເສີມການທ່ອງທ່ຽວລັດຖະບານໄດ້ກຳນົດແນວທາງນະໂຍບາຍ, ດຳລັດ ແລະ ຂໍ້ກຳນົດຕ່າງໆເພື່ອນຳພາ ແລະ ຄຸ້ມຄອງທຸລະກິດທ່ອງທ່ຽວໃນທົ່ວປະເທດ. ທັງພາກລັດ ແລະ ເອກກະຊົນເຊັ່ນ :
- ຂໍ້ກຳນົດສະບັບເລກທີ1150/ສນຍ, ລົງວັນທີ 25/10/1993 ວ່າດ້ວຍການສ້າງຕັ້ງ ແລະ ເຄື່ອນໄຫວທຸລະກິດທ່ອງທ່ຽວ.
- ຂໍ້ກຳນົດເລກທີ 159/ສນຍ, ລົງວັນທີ 30/07/1997 ວ່າດ້ວຍການຄຸ້ມຄອງ ໂຮງແຮມ ແລະ ເຮືອນພັກ.
- ຂໍ້ກຳນົດສະບັບເລກທີ1107/ກຄທ, ລົງວັນທີ 30/08/1999 ວ່າດ້ວຍເງື່ອນໄຂພື້ນຖານ ຂອງເຮືອນພັກ.
- ຂໍ້ກຳນົດສະບັບເລກທີ 626/ກຄທ, ລົງວັນທີ 07/07/1999 ວ່າດ້ວຍການຄຸ້ມຄອງ ພະນັກງານນຳທ່ຽວ.

ໃນປີ 1989 ບໍລິສັດທ່ອງທ່ຽວແຫ່ງຊາດໄດ້ຮັບການສ້າງຕັ້ງຂຶ້ນຊຶ່ງ ເປັນຫົວໜ່ວຍທຸລະກິດ ນຳທ່ຽວ ບໍລິສັດດຽວ ໃນໄລຍະນັ້ນ, ໃນປີ 1991 ຈຶ່ງມີບໍລິສັດຫຸ້ນສ່ວນລັດກັບເອກະຊົນ ຕ່າງປະເທດ ໄດ້ຮັບການສ້າງຕັ້ງຂຶ້ນ. ໃນຊຸມປີຕໍ່ມາໄດ້ມີບໍລິສັດທຸລະກິດທ່ອງທ່ຽວຂອງລັດ, ຂອງເອກກະຊົນ ແລະ ຫຸ້ນສ່ວນລັດ ແລະ ເອກກະຊົນເກີດຂຶ້ນຢ່າງຕໍ່ເນື່ອງຈົນເຖິງປີ 2006 ຈຳນວນບໍລິສັດ ດັ່ງກາວໄດ້ເພີ່ມຂຶ້ນທັງໝົດເປັນ 85 ຫົວໜ່ວຍ ( ເອກະສານຊ້ອນທ້າຍຂັດຕິດມາພ້ອມນີ້ ) ມາເຖິງປັດຈຸບັນ, ການດຳເນີນທຸລະກິດການທ່ອງ ທ່ຽວຍັງສະຫງວນໄວ້ ໃຫ້ພົນລະເມືອງລາວເປັນຕົ້ນຕໍ, ແຕ່ກົດໝາຍ

ວ່າດ້ວຍການທ່ອງທ່ຽວ ທີ່ໄດ້ຖືກຮັບ ຮອງເອົາຢູ່ໃນກອງປະຊຸມສະໄໝທີ VIII ສະພາແຫ່ງຊາດ ຄັ້ງທີ V. ແມ່ນໄດ້ອານຸຍາດໃຫ້ ບໍລິສັດ ຕ່າງ ປະເທດ ສາມາດດຳເນີນທຸລະກິດການທ່ອງທ່ຽວ. ການຄຸ້ມຄອງລັດຕໍ່ບັນດາທຸລະກິດທ່ອງທ່ຽວມີ ຄວາມ ກ້າວໜ້າ ແລະ ຮັດກຸມກວ່າເກົ່າ ຕັ້ງແຕ່ການຂໍສ້າງຕັ້ງ ແລະ ດຳເນີນທຸ ລະກິດ ໃນນີ້ລວມທັງ ເສຍ ພັນທະ ໃຫ້ງົບປະມານ ແລະ ເຂົ້າກອງທຶນສົ່ງເສີມການທ່ອງທ່ຽວ. ການເພີ່ມຂຶ້ນຂອງ ນັກທ່ອງທ່ຽວໄດ້ ກະຕຸກຊຸກຍູ້ທົ່ວສັງຄົມໃຫ້ລົງທຶນໃສ່ກິດຈະກຳການທ່ອງທ່ຽວ ຢ່າງຫ້າວຫັນ ເປັນຕົ້ນ ການພັດທະນາທຸລະກິດໂຮງແຮມ, ເຮືອນພັກ, ແລະ ຣີສອດ; ການຂະຫຍາຍ ພັດຕະຄານຮ້ານ ອາຫານ ແລະ ຮ້ານບັນເທີງ, ການພັດທະນາ ແຫລ່ງທ່ອງທ່ຽວ, ການຜະລິດເຄື່ອງທີ່ລະນຶກ, ການຜະລິດສະບຽງອາຫານ, ການຂົນສົ່ງ ນັກທ່ອງທ່ຽວ ແລະ ອື່ນໆ. ຮອດປີ 2005 ໃນທົ່ວປະເທດມີ ໂຮງແຮມທັງໝົດ 165 ແຫ່ງ ແລະ ມີ 5.974 ຫ້ອງ, ເຮືອນພັກ, ຣີສອດ 923 ແຫ່ງ ລວມມີ 9. 854 ຫ້ອງ.

- ປັດຈຸບັນບັນດາກິດຈະກຳທີ່ປິ່ນອ້ອມຂະແໜງການທ່ອງທ່ຽວໄດ້ສ້າງວຽກງານໃຫ້ແກ່ສັງຄົມທາງກົງ 19.000 ຄົນ ແລະ ທາງອ້ອມ 300.000 ຄົນ. ການພັດທະນາທຸລະກິດ ແລະ ກິດຈະກຳການທ່ອງທ່ຽວທັງດ້ານປະລິມານ ແລະ ຄຸນນະພາບທີ່ກ່າວມານັ້ນ ໄດ້ເຮັດໃຫ້ຕົວເມືອງໃຫຍ່ຈຳນວນໜຶ່ງສາມາດຮອງຮັບ ກອງປະຊຸມສາກົນໄດ້ ຢ່າງ ຄ່ອງຕົວ. ສະມາຄົມທຸລະກິດທ່ອງທ່ຽວ, ສະມາຄົມທຸລະກິດໂຮງແຮມ-ຮ້ານອາຫານລາວ ຢູ່ຂັ້ນສູນກາງ ແລະ ກຸ່ມທຸລະກິດບໍລິການຂອງຂະແໜງການທ່ອງທ່ຽວ ຢູ່ຕາມແຂວງຕ່າງໆ ກໍ່ໄດ້ຮັບການສ້າງຕັ້ງຂຶ້ນ ເພື່ອເຕົ້າໂຮມກຳລັງແຮງເຂົ້າໃສ່ການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ ໂດຍພາຍໃຕ້ການຊີ້ນຳ ນຳພາ ຂອງອົງການທ່ອງທ່ຽວແຫ່ງຊາດ.

ເຖິງຢ່າງໃດກໍຕາມພວກເຮົາຍັງເຫັນວ່າການຄຸ້ມຄອງ ແລະ ການປະຕິບັດລະບຽບຫລັກການໃນທຸລະກິດການທ່ອງທ່ຽວແຕ່ລະຂັ້ນຍັງບໍ່ທັນເປັນເອກກະພາບກັນ, ລະບຽບການທີ່ມີແລ້ວສ່ວນຫລາຍແມ່ນ ອັນເກົ່າ, ຍັງບໍ່ທັນປັບປຸງ ໃຫ້ແທດເໝາະກັບ ສະພາບການຂະຫຍາຍຕົວຂອງການທ່ອງທ່ຽວໃນປັດ ຈຸບັນ.

- ສຳລັບທຸລະກິດ ແລະ ກິດຈະກຳທ່ອງທ່ຽວແຕ່ລະປະເພດ ແມ່ນໄດ້ເຕີບໃຫຍ່ຂະຫຍາຍຕົວ ທາງດ້ານປະລິມານ, ແຕ່ຄຸນນະພາບ ແລະ ຄວາມຮູ້ຄວາມສາມາດ ໃນການດຳເນີນທຸລະກິດຍັງຈຳກັດ, ມີລັກສະນະເຮັດທຸລະກິດແບບຄອບຄົວ ບໍ່ຄົບວົງຈອນ, ຫລົບຫລີກການເສຍພາສີອາກອນ, ການບໍລິການ ຍັງບໍ່ໄດ້ມາດຕະຖານສາກົນແທ້. ທຸລະກິດນຳທ່ຽວ, ໂຮງແຮມ, ເຮືອນພັກ, ຮ້ານອາຫານ, ຮ້ານບັນເທີງ ຈຳນວນໜຶ່ງ ຍັງສວຍໃຊ້ ຊ່ອງຫວ່າງຂອງກົດໝາຍ, ຂໍ້ກຳນົດ ແລະ ລະບຽບການອື່ນໆ ເພື່ອຜົນປະໂຫຍດຂອງຕົນດ້ວຍການກະທຳທີ່ຝືນກັບຮີດຄອງປະເພນີ ແລະ ສິນທຳຂອງຄົນລາວ.

### 3.5. ການໂຄສະນາ ແລະ ສົ່ງເສີມການຕະຫຼາດການທ່ອງທ່ຽວ

ໃນຊຸມປີທີ່ຜ່ານມາອົງການທ່ອງທ່ຽວແຫ່ງຊາດໄດ້ສົມທົບກັບສະມາຄົມທຸລະກິດທ່ອງທ່ຽວ, ສະມາຄົມໂຮງແຮມ ແລະ ຮ້ານອາຫານ ເຄື່ອນໄຫວໂຄສະນາ ການທ່ອງທ່ຽວລາວ ຢ່າງຕັ້ງໜ້າ ໃນພາກພື້ນ

ແລະ ສາກົນ ເຊັ່ນ : ການເຂົ້າຮ່ວມງານວາງສະແດງການທ່ອງທ່ຽວອາຊຽນ (ATF), ງານວາງສະແດງງານທ່ອງທ່ຽວນາໆຊາດທີ່ບາງກອກປະເທດໄທ , CITM ທີ່ຄູນມິງ ສປຈີນ, EXPO ການຄ້າໂລກທີ່ໄອຈິ ປະເທດຍີ່ປຸ່ນ, EXPO ຈີນ-ອາຊຽນ ທີ່ເມືອງ ນານນິງ ສປ ຈີນ, JATA ທີ່ໂຕກຽວປະເທດຍີ່ປຸ່ນ, ງານ PATA ທີ່ປະເທດສິງກະໂປ ແລະ ມາເລເຊຍ, ງານ ITB ທີ່ ແບັກແລັງ ປະເທດ ເຢຍລະມັນ, SMT ທີ່ປະເທດ ຝຣັ່ງ, WTM ທີ່ລອນດອນ ປະເທດອັງກິດ, BIT ທີ່ມີລານ ປະເທດອີຕາລີ ແລະ ງານເທດສະການອື່ນໆ ທີ່ ບັນດາປະເທດອາຊຽນ ແລະ ບັນດາປະເທດ ອະນຸພາກພື້ນແມ່ນ້ຳຂອງຈັດຂຶ້ນ.

ໄດ້ຈັດຂະບວນລົດ (ຄາຣາວານ) ເພື່ອການທ່ອງທ່ຽວສຳລັບພາຍໃນປະເທດ ແລະ ລະຫ່ວາງປະເທດ ຫລາຍຄັ້ງ. ນອກຈາກນັ້ນແລ້ວ ຍັງໄດ້ເອົາໃຈໃສ່ຈັດພິມເອກກະສານໂຄສະນາ ການທ່ອງທ່ຽວ, ພິມຮູບພາບໂປດສະເຕີ ແລະ ໄປສະນີຍະບັດ, ສ້າງເວບໄຊ ການທ່ອງທ່ຽວລາວ ແລະ ເວບໄຊ ກ່ຽວກັບການທ່ອງທ່ຽວແບບອະນຸລັກ ແລະ ອື່ນໆ. ເພື່ອຕອບສະໜອງຂໍ້ມູນດ້ານການທ່ອງທ່ຽວ ໃຫ້ແກ່ນັກທ່ອງທ່ຽວ ແລະ ຜູ້ທີ່ມີຄວາມສົນໃຈກ່ຽວກັບ ການທ່ອງທ່ຽວລາວ, ອົງການທ່ອງທ່ຽວແຫ່ງຊາດ ຍັງໄດ້ສ້າງ ສູນຂໍ້ມູນຂ່າວສານການທ່ອງທ່ຽວທີ່ ສຳນັກງານອົງການທ່ອງທ່ຽວແຫ່ງຊາດ ນະຄອນຫລວງວຽງຈັນ ແລະ ຢູ່ບັນດາແຂວງ ທີ່ມີເງື່ອນໄຂ ເປັນຕົ້ນ ແຂວງ ຫລວງນ້ຳທາ, ອຸດົມໄຊ, ຫົວພັນ, ຫລວງພະບາງ, ຄຳມ່ວນ, ສະຫວັນນະເຂດ ແລະ ຈຳປາສັກ. ນອກຈາກນັ້ນອົງການທ່ອງທ່ຽວແຫ່ງຊາດ ຍັງໄດ້ສ້າງ ຕັ້ງວາລະສານທ່ຽວເມືອງລາວຂຶ້ນ ເພື່ອໂຄສະນາການທ່ອງທ່ຽວຂອງ ສປປ ລາວ ສູ່ຕ່າງປະເທດ. ປັດຈຸບັນນີ້ ວາລະສານດັ່ງກ່າວແມ່ນ ກຳລັງໄດ້ຮັບຄວາມສົນໃຈຈາກນັກທ່ອງທ່ຽວພໍສົມຄວນ.

ຈາກການເອົາໃຈໃສ່ໂຄສະນາຢ່າງກວ້າງຂວາງ ທີ່ກ່າວມາຂ້າງເທິງນັ້ນ ໄດ້ເຮັດໃຫ້ພາບພົດການທ່ອງທ່ຽວລາວ ກາຍເປັນທີ່ຮັບຮູ້ຢູ່ໃນຕະຫລາດທ່ອງທ່ຽວສາກົນ ແລະ ສາມາດດຶງດູດ ນັກທ່ອງທ່ຽວຈາກພາກພື້ນ ແລະ ສາກົນເຂົ້າມາທ່ອງທ່ຽວ ສປປ ລາວ ນັບມື້ນັບຫລາຍຂຶ້ນໃນແຕ່ລະປີ ຊຶ່ງໃນປີ 2005 ສາມາດຈັດແບ່ງຕະຫລາດທ່ອງທ່ຽວອອກເປັນ 3 ກຸ່ມຕົ້ນຕໍ ຄືດັ່ງນີ້ : ຕະຫລາດອາຊີ ແລະ ປາຊີຟິກ ກວມເອົາ 82,10 %, ກຸ່ມຕະຫລາດເອີຣົບກວມເອົາ 11,99 %, ຕະຫລາດອາເມລິກາເໜືອກວມ 5,48 % ຂອງນັກທ່ອງທ່ຽວທັງໝົດ.

ນັກທ່ອງທ່ຽວທີ່ເຂົ້າມາລາວນັ້ນ ມີ 2 ປະເພດ ຄື : ນັກທ່ອງທ່ຽວສາກົນ (ນັກທ່ອງທ່ຽວມາຈາກທາງໄກ) ແລະ ນັກທ່ອງທ່ຽວພາກພື້ນ (ນັກທ່ອງທ່ຽວຊາຍແດນ). ນັກທ່ອງທ່ຽວຊາຍແດນ ໝາຍເຖິງນັກທ່ອງທ່ຽວ ທີ່ມາຈາກບັນດາປະເທດ ທີ່ມີຊາຍແດນຕິດກັບ ສປປ ລາວ ຄື : ໄທ, ຈີນ, ຫວຽດນາມ, ມຽນມາ ແລະ ກຳປູເຈຍ.

ຕາມສະຖິຕິປີ 2005 ນັກທ່ອງທ່ຽວທີ່ມາຢ້ຽມຢາມປະເທດເຮົາມີອັດຕາພັກແຮມສະເລ່ຍ 4,5 ວັນ ມີການໃຊ້ຈ່າຍສະເລ່ຍ 37 ໂດລາສະຫະລັດ ຕໍ່ຄົນຕໍ່ວັນ.

ບັນຫາທີ່ຄວນເອົາໃຈໃສ່ໃນຕໍ່ໜ້າແມ່ນ ການໂຄສະນາ-ສົ່ງເສີມການທ່ອງທ່ຽວ ແມ່ນຍັງບໍ່ທັນເຮັດ ໄດ້ດີເທົ່າທີ່ຄວນ, ບໍ່ເປັນປົກກະຕິ ແລະ ບໍ່ຕໍ່ເນື່ອງຍ້ອນທຶນຮອນບໍ່ພຽງພໍ ແລະ ການສະໜັບສະໜູນຂອງພາກເອກກະຊົນກໍຍັງອ່ອນ, ພ້ອມນັ້ນການໂຄສະນາ ແລະ ສົ່ງເສີມການຕະຫລາດຍັງບໍ່ທັນມີ ເປົ້າ

ໝາຍອັນແນ່ນອນ ແລະ ເລືອກເຟັ້ນຄັດແນ່ ເພື່ອຈະດຶງດູດລູກຄ້າ ຫລື ນັກທ່ອງທ່ຽວ ໃຫ້ເຂົ້າມາທ່ຽວຢ່າງຕໍ່ເນື່ອງ.

### 3.6. ການພັດທະນາບຸກຄະລາກອນ

ບຸກຄະລາກອນໃນຂະແໜງການທ່ອງທ່ຽວ ໂດຍທົ່ວໄປແມ່ນ ຍັງຢູ່ໃນລະດັບທີ່ອ່ອນນ້ອຍ ທັງທາງດ້ານປະລິມານ ແລະ ຄຸນນະພາບ, ສະນັ້ນ ຄວາມຕ້ອງການອັນຮີບດ່ວນ ໃນການພັດທະນາການທ່ອງທ່ຽວຢູ່ ສປປລາວ ແມ່ນ ຈະຕ້ອງເອົາໃຈໃສ່ພັດທະນາບຸກຄະລາກອນ ໃຫ້ມີຄວາມຮູ້ ຄວາມສາມາດທາງດ້ານວິຊາການ ນັບແຕ່ລະດັບພະນັກງານວິຊາການຮອດ ລະດັບຜູ້ຈັດການຂຶ້ນໄປ.

ການຂາດສະຖາບັນການສຶກສາ ແລະ ສູນຝຶກອົບຮົມວິຊາຊີບດ້ານການທ່ອງທ່ຽວ ທີ່ມີຄຸນນະພາບສູງເພື່ອຕອບສະໜອງຄວາມຕ້ອງການ ແມ່ນເປັນອຸປະສັກອັນໃຫຍ່ຫລວງ ໃນການພັດທະນາການທ່ອງທ່ຽວ.

ໃນຜ່ານມາພວກເຮົາໄດ້ເອົາໃຈໃສ່ເປັນຢ່າງດີໃນການຝຶກອົບຮົມບຸກຄະລາກອນ ສໍາລັບການຄຸ້ມຄອງມະຫາພາກ ແລະ ຈຸລະພາກ, ຈໍານວນຜູ້ທີ່ໄດ້ຜ່ານການຝຶກອົບຮົມໃນຫົວຂໍ້ຕ່າງໆ ທີ່ອົງການທ່ອງທ່ຽວແຫ່ງຊາດຈັດຂຶ້ນ ແຕ່ປີ1990 ເປັນຕົ້ນມາ ມີດັ່ງນີ້: ພະນັກງານນໍາທ່ຽວ ຈໍານວນ 820 ຄົນ, ພະນັກງານ ບໍລິການ ໂຮງແຮມ, ເຮືອນພັກ ແລະ ຮ້ານ ອາຫານຈໍານວນ 3.247 ຄົນ. ນອກນັ້ນແມ່ນການຈັດຝຶກອົບຮົມ ຕາມຄວາມຕ້ອງການຂອງວຽກງານ, ການຝຶກອົບຮົມໃນກອບການຮ່ວມມືກັບຕ່າງປະເທດ ເຊັ່ນ: ຝຶກອົບຮົມດ້ານສະຖິຕິ, ດ້ານການວາງແຜນພັດທະນາການທ່ອງທ່ຽວ, ການຝຶກຄູຝຶກ, ການຄຸ້ມຄອງການທ່ອງທ່ຽວ, ການສົ່ງເສີມຕະຫລາດການທ່ອງທ່ຽວ ແລະ ການຈັດສໍາມະນາໃນຫົວຂໍ້ຕ່າງໆ ທີ່ກ່ຽວຂ້ອງກັບ ການທ່ອງທ່ຽວ.

ໃນບົດລາຍງານກ່ຽວກັບການຝຶກອົບຮົມໃນຂະແໜງການທ່ອງທ່ຽວທີ່ອົງການທ່ອງທ່ຽວໄດ້ດໍາເນີນ ການສໍາຫລວດຮ່ວມກັບ ອົງການເອັສເອັນວີໃນປີ 2003 ໄດ້ເວົ້າເຖິງ ຊ່ອງຫວ່າງ ລະຫວ່າງ ຄວາມຕ້ອງການ ແລະ ຄວາມສາມາດຕອບສະໜອງແຮງງານ ທີ່ມີຄຸນນະພາບໃຫ້ແກ່ອຸດສາຫະກໍາການທ່ອງທ່ຽວ ແລະ ຊ່ອງຫວ່າງທີ່ສໍາຄັນທີ່ສຸດ ແມ່ນການຂາດເຂີນການຝຶກອົບຮົມ ໃນຫລັກສູດວິຊາສະເພາະລະດັບ ສູງໃນຂັ້ນມະຫາວິທະຍາໄລ ແລະ ສະຖາບັນວິຊາສະເພາະຊັ້ນສູງອື່ນໆ. ຫລັກສູດການຝຶກອົບຮົມທີ່ອົງການທ່ອງທ່ຽວແຫ່ງຊາດມີໃນປັດຈຸບັນ ແມ່ນການຝຶກອົບຮົມຄວາມຮູ້ຂັ້ນພື້ນຖານ, ຄູຝຶກຍັງບໍ່ທັນມີລະດັບວິຊາການສູງ, ອຸປະກອນການສິດສອນ ຍັງຢູ່ໃນສະພາບຫລ້າຫລັງ. ສະນັ້ນການພັດທະນາ ຂີດຄວາມສາມາດ ແລະ ລະບົບຫລັກສູດການຮຽນ-ການສອນໃນລະດັບຊາດ ແມ່ນຄວາມຮຽກຮ້ອງຕ້ອງການທີ່ແທ້ຈິງຂອງອຸດສາຫະກໍາການທ່ອງທ່ຽວໃນປະເທດເຮົາເພື່ອເຮັດໃຫ້ການທ່ອງທ່ຽວ ມີຄວາມທັນສະໄໝ ແລະ ຍືນຍົງ, ທັງສາມາດແຂ່ງຂັນ ແລະ ເຊື່ອມໂຕເຂົ້າກັບສາກົນໄດ້.

### 3.7. ການຮ່ວມມືກັບສາກົນ

ໂດຍປະຕິບັດຕາມນະໂຍບາຍ ການຮ່ວມມື ແລະ ເຊື່ອມໂຍງເສດຖະກິດກັບຕ່າງປະເທດຂອງລັດຖະບານ ອົງການທ່ອງທ່ຽວແຫ່ງຊາດຍາດແຍ່ງການ ຊ່ວຍເຫລືອທາງດ້ານວິຊາການ ແລະ ດ້ານທຶນຮອນຈາກຕ່າງປະເທດເພື່ອພັດທະນາ ແລະ ສົ່ງເສີມການທ່ອງທ່ຽວຂອງປະເທດພວກເຮົາໄດ້ດີພໍສົມຄວນ ໃນການສົ່ງເສີມ, ແລກປ່ຽນບົດຮຽນນຳກັນເຊິ່ງໃນນັ້ນ :

- ໄດ້ປະຕິບັດແຜນການຮ່ວມມືດ້ານການທ່ອງທ່ຽວກັບບັນດາປະເທດອາຊຽນ, ອາຊຽນ+3 ( ຈີນ, ຍີ່ປຸ່ນ, ສ ເກົາຫລີ) , ອາຊຽນ+1 (ອິນເດຍ) ແລະ ຄູ່ເຈລະຈາອື່ນໆ.
- ໄດ້ປະຕິບັດແຜນການຮ່ວມມືດ້ານການທ່ອງທ່ຽວກັບບັນດາປະເທດອະນຸພາກພື້ນແມ່ນ້ຳຂອງ.
- ໄດ້ປະຕິບັດການຮ່ວມມື ດ້ານການທ່ອງທ່ຽວໃນກອບການຮ່ວມມືຫລາຍຝ່າຍເຊັ່ນ : ການຮ່ວມມື ACMECS ( ກຳປູເຈຍ, ລາວ ,ໄທ,ມຽນມາ ແລະ ຫວຽດນາມ), ກອບສາມຫລ່ຽມມໍລະກົດ ( ກຳປູເຈຍ, ລາວ, ໄທ ), ກອບສາມຫລ່ຽມພັດທະນາ ( ກຳປູເຈຍ, ລາວ, ຫວຽດນາມ ), ກອບແລວເສດຖະກິດຕາເວັນອອກ-ຕາເວັນຕົກ( ຫວຽດນາມ, ລາວ, ໄທ, ມຽນມາ ) , ກອບແລວເສດຖະກິດເໜືອ-ໃຕ້ ( ຢູນນານ -ສປ ຈີນ, ລາວ ແລະໄທ ) ແລະ ກອບການຮ່ວມມືອື່ນໆ.
- ໄດ້ປະຕິບັດແຜນການຮ່ວມມືສອງຝ່າຍກັບປະເທດທີ່ໄດ້ເຊັນສັນຍາຮ່ວມມື ດ້ານການທ່ອງທ່ຽວນຳກັນເຊັ່ນ : ຫວຽດນາມ, ກຳປູເຈຍ, ໄທ, ມຽນມາ, ສປ ຈີນ, ມາເລເຊຍ ແລະ ຝຣັ່ງ.
- ໄດ້ປະຕິບັດໂຄງການຮ່ວມມືກັບບັນດາ ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງທີ່ບໍ່ຂື້ນກັບລັດຖະບານເຊັ່ນ : ອົງການທ່ອງທ່ຽວໂລກ, ອົງການພາຕາ, ອົງການຢູເນສໂກ, ອົງການເອດສ໌ເອນວີ (ປະເທດ ເນເທີແລນ), ອົງການຊ່ວຍເຫລືອຂອງປະເທດນິວຊີແລນ, ອົງການຄູໂຊ ປະເທດ ການາດາ, ອົງການ WWF, WCS, IUCN , DED, ທະນາຄານພັດທະນາອາຊີ, ທະນາຄານໂລກ ແລະ ອື່ນໆ.
- ເຖິງແມ່ນວ່າການຮ່ວມມືກັບສາກົນ ໄດ້ເພີ່ມຂື້ນຢ່າງຕໍ່ເນື່ອງກໍຕາມແຕ່ການຈັດຕັ້ງປະຕິບັດ ແມ່ນຍັງບໍ່ມີປະສິດທິຜົນເທົ່າທີ່ຄວນ ແລະ ຍັງຊັກຊ້າ ອັນເນື່ອງມາຈາກຂາດກົງຈັກການຈັດຕັ້ງ ແລະ ກົນໄກການເຮັດວຽກທີ່ເໝາະສົມ.

### 3.8. ບັນດາຂະແໜງທີ່ພົວພັນໂດຍກົງ ແລະ ປິ່ນອ້ອມການທ່ອງທ່ຽວ :

ອຸດສາຫະກຳການທ່ອງທ່ຽວມີການພົວພັນກັບທຸກຂະແໜງການ ແຕ່ຂະແໜງການທີ່ມີການພົວພັນກັນຢ່າງໃກ້ຊິດ ແລະ ໂດຍກົງມີດັ່ງນີ້ :

- ຂະແໜງການທີ່ມີສ່ວນພົວພັນອັນດັບນຶ່ງ ແມ່ນ ກະຊວງການຕ່າງປະເທດສຳລັບວຽກງານຮ່ວມມື ແລະ ວຽກງານກົງສູນ ແລະ ຂະແໜງປ້ອງກັນຄວາມສະຫງົບ ລວມທັງຕຳຫລວດກວດຄົນ ເຂົ້າ-ອອກເມືອງ ແລະ ຕຳຫລວດທ່ອງທ່ຽວ ໃນບັນຫາທີ່ ກ່ຽວພັນກັບດ່ານສາກົນ, ການອະນຸຍາດວີຊາ ເຂົ້າ-ອອກປະເທດ, ການເດີນທາງພາຍໃນປະເທດ, ການເກັບຄ່າທຳນຽມ, ການຕໍ່ໄລຍະພັກເຊົາ ໃຫ້ຢູ່ໃນປະເທດຊຶ່ງໃນໄລະຍ ຜ່ານມາ ສະຖານທູດລາວ ຫຼື ສະຖານກົງສູນລາວ ຢູ່ຕ່າງປະເທດອອກ ວີຊາໃຫ້ຢູ່ໄດ້ 30

ວັນ, ສ່ວນຢູ່ດ່ານ ສາກົນ ອອກໃຫ້ ໄດ້ແຕ່ 15 ວັນ ແຕ່ໃນປັດຈຸບັນນີ້ ໄດ້ມີການປັບປຸງແລ້ວໂດຍໃຫ້ວິຊາກັບດ່ານໄດ້ 30 ວັນ ເຊັ່ນກັນ ການ ໃຊ້ບັດຜ່ານແດນ (Border pass) ທີ່ອະນຸຍາດໃຫ້ເຂົ້າແຂວງໜຶ່ງແຕ່ໃຫ້ໄປໄດ້ຫລາຍແຂວງ ເປົ້າໝາຍ ຢູ່ໃນພາກດຽວກັນ ຫຼື ພາກໃກ້ຄຽງ. ຊຶ່ງກໍຍັງບໍ່ໄດ້ຮັບການປະຕິບັດແບບເປັນເອກກະພາບ.

- ຂະແໜງທີ່ໃກ້ຊິດກັນແມ່ນຂະແໜງວັດທະນະທຳຊຶ່ງມີສ່ວນພົວພັນນຳກັນ ໃນນັ້ນບັນຫາການຂຶ້ນບັນຊີ ແລະ ຄຸ້ມຄອງແຫລ່ງທ່ອງທ່ຽວ ທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ, ການເກັບຄ່າທຳນຽມ ແລະ ລະບຽບການເຂົ້າຊົມ, ການພັດທະນາ ແລະ ຟື້ນຟູແຫລ່ງທ່ອງທ່ຽວດັ່ງກ່າວ, ການຄຸ້ມຄອງຮ້ານ ບັນ ເທີງ ແລະ ອື່ນໆ ຊຶ່ງທັງໝົດນີ້ຕ້ອງໄດ້ປຶກສາຫາລືນຳກັນຕື່ມເພື່ອບັນລຸຄວາມເປັນເອກະພາບກັນໃນ ການ ຄຸ້ມຄອງ. ນອກຈາກນີ້ກັບຂະແໜງການອື່ນໆເຊັ່ນອຸດສາຫະກຳ ແລະ ຫັດຖະກຳ ແມ່ນພົວພັນເຖິງການ ຜະລິດສິນຄ້າ ແລະ ເຄື່ອງທີ່ລະນຶກທີ່ເປັນເອກະລັກຂອງຊາດເຮົາ, ກັບຂະແໜງຄົມມະນາຄົມມີສ່ວນພົວພັນ ນຳກັນໃນ ການ ກໍ່ສ້າງເສັ້ນທາງ ການທ່ອງທ່ຽວພາຍໃນ ແລະ ເຊື່ອມກັບຕ່າງ ປະເທດ, ການເກັບຄ່າບໍລິ ການຜ່ານ, ການ ສ້າງສິ່ງອຳນວຍຄວາມສະດວກຕາມເສັ້ນທາງ, ການບິນພົນລະເຮືອນ, ການໂດຍສານ ທາງບົກທາງນ້ຳ ແລະ ທາງອາກາດ ຊຶ່ງປັດຈຸບັນນີ້ ພາຫະນະຮັບໃຊ້ໃຫ້ ແກ່ການບໍລິການຂົນສົ່ງໂດຍ ສານເວົ້າລວມ ແມ່ນເປັນພາຫະນະເກົ່າແກ່ ແລະ ຈຳນວນບໍ່ພຽງພໍກັບຄວາມຕ້ອງການຂອງຂະຫຍາຍຕົວ ຂອງ ການທ່ອງ ທ່ຽວ ແລະ ການບໍລິການບໍ່ໄດ້ຕາມມາດຕະຖານສາກົນ, ນະໂຍບາຍ ການເປີດນ່ານຟ້າ ເສລີຂອງອາຊຽນກໍບໍ່ທັນໄດ້ຮັບການປະຕິບັດ, ສຳລັບຂະແໜງສາທາລະນະສຸກ ແມ່ນພົວພັນກັນກ່ຽວກັບ ຄວາມສະອາດຂອງບ້ານເມືອງ ແລະ ໃນສະຖານທີ່ ບໍລິການຕ່າງໆ, ຄວາມສະອາດ ແລະ ຄວາມປອດ ໄພຂອງອາຫານ ແລະ ເຄື່ອງດື່ມ, ບັນຫາສຸຂະພາບ ແລະ ການຊ່ວຍເຫລືອແກ່ນັກທ່ອງທ່ຽວໃນ ເວລາເຈັບເປັນ ຫລື ເກີດອຸປະຕິເຫດ. ກັບຂະແໜງການກະສິກຳແລະປ່າໄມ້ ແມ່ນພົວພັນກັນກ່ຽວກັບການ ຜະລິດສະບຽງອາຫານ ແລະ ປົກປັກຮັກສາປ່າສະຫງວນແຫ່ງຊາດ ແລະ ບັນຫາແຫລ່ງທ່ອງທ່ຽວ ທຳມະຊາດ ອື່ນໆທີ່ເປັນທ່າແຮງຕົ້ນຕໍຮັບໃຊ້ການທ່ອງທ່ຽວ, ກັບອົງການວິທະຍາສາດ ແລະ ເຕັກໂນໂລຊີ ແມ່ນພົວພັນກ່ຽວກັບບັນຫາສິ່ງແວດລ້ອມ ເປັນຕົ້ນພ້ອມນັ້ນວຽກງານການທ່ອງທ່ຽວ ຍັງພົວພັນສະນິດ ແໜ້ນ ກັບອຳນາດການປົກຄອງທ້ອງຖິ່ນຕ່າງໆ ໃນທົ່ວປະເທດ.

- **<u>ສາຍເຫດທີ່ພາໃຫ້ມີຜົນສຳເລັດ:</u>**

  - ຍ້ອນມີແນວທາງ, ແຜນນະໂຍບາຍ, ນະໂຍບາຍ, ລະບຽບກົດໝາຍ, ແຜນພັດທະນາ ຂອງພັກ-ລັດຖະບານຖືກຕ້ອງ ແລະ ແທດເໝາະກັບສະພາວະຄວາມເປັນຈິງພ້ອມທັງໄດ້ຮັບການຊີ້ນຳ ນຳພາເປັນປົກກະຕິ ຈາກການນຳ ຂັ້ນຕ່າງໆ.

- ຍ້ອນຖັນແຖວພະນັກງານ, ລັດຖະກອນ ໃນຂະແໜງການທ່ອງທ່ຽວ ໃນທົ່ວປະເທດ ມີຄວາມບຸກບືນ, ເປັນເຈົ້າການໃນການຈັດຕັ້ງ ປະຕິບັດວຽກງານ ດ້ວຍຄວາມຮັບຜິດຊອບສູງ.
- ຍ້ອນໄດ້ຮັບການຮ່ວມມື, ການສະໜັບສະໜູນອັ້ມຊູ ອໍານວຍຄວາມສະດວກຈາກກະຊວງ, ຂະແໜງການ ແລະ ອໍານາດການປົກຄອງທ້ອງຖິ່ນ, ປະຊາຊົນບັນດາເຜົ່າ ແລະ ພາກສ່ວນເສດຖະກິດຕ່າງໆ.
- ຍ້ອນບັນດາຫົວໜ່ວຍທຸລະກິດອຸດສາຫະກໍາການທ່ອງທ່ຽວລາວ ໄດ້ອອກແຮງພັດທະນາສິ່ງຮອງຮັບ ແລະ ການບໍລິການຂອງຕົນໃຫ້ໄດ້ມາດຕະຖານສູງຂື້ນ ສາມາດຕອບສະໜອງຄວາມຕ້ອງການຂອງນັກທ່ອງທ່ຽວ.
- ມີຄວາມສາມັກຄີ ແລະ ຄວາມເປັນເອກະພາບຢູ່ພາຍໃນ ອົງການທ່ອງທ່ຽວແຫ່ງຊາດ ໃນການເຄື່ອນໄຫວ ວຽກງານທ່ອງທ່ຽວ.
- ການເປີດປີທ່ອງທ່ຽວລາວ 1999-2000, ການເປັນເຈົ້າພາບຈັດງານທ່ອງທ່ຽວອາຊຽນ ATF 2004, ກອງ ປະຊຸມສຸດຍອດອາຊຽນຄັ້ງທີ 10 ປີ2004, ກອງປະຊຸມລັດຖະມົນຕີ ຕ່າງປະເທດອາຊຽນ ແລະ ກອງປະຊຸມລັດຖະສະພາອາຊຽນຊຶ່ງເປັນເຫດການປະຫວັດສາດທີ່ສໍາຄັນເພື່ອເປັນການໂຄສະນາພາບພົດອັນຈົບ ງາມຂອງ ປະເທດເຮົາ.
- ຍ້ອນມີການຮ່ວມມືກັບບັນດາປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນຢ່າງກວ້າງຂວາງ.

- **<u>ສາຍເຫດທີ່ໃຫ້ມີຈຸດອ່ອນ</u>** :

  - ລະບົບການຈັດຕັ້ງ ແລະ ບຸກຄະລາກອນຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ ຍັງບໍ່ທັນຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການ ຂອງວຽກງານທາງດ້ານຈໍານວນແລະຄຸນນະພາບ, ຖານະບົດບາດຂອງກົງຈັກ ການຈັດຕັ້ງຍັງບໍ່ທັນສົມດູນກັບການ ຂະຫຍາຍຕົວຂອງການທ່ອງທ່ຽວ, ຄວາມຮັບຮູ້ ແລະ ຄວາມເຂົ້າໃຈ ຕໍ່ວຽກງານທ່ອງທ່ຽວຂອງປະຊາຊົນ ແລະ ທົ່ວສັງຄົມ ຍັງບໍ່ທັນເລິກເຊິ່ງ.
  - ແບບແຜນວິທີເຮັດວຽກ ຂອງແຕ່ລະຂັ້ນ, ແຕ່ລະພາກສ່ວນຍັງບໍ່ທັນມີການຫັນປ່ຽນໄປສູ່ຄຸນນະພາບໃໝ່. ຍັງຂາດຄວາມເປັນເຈົ້າການ ແລະ ປະດິດສ້າງ. ສ່ວນຫຼາຍຍັງລໍຖ້າແຕ່ຄໍາສັ່ງ, ໃນຕົວ, ບໍ່ພາວະວິໄສ, ການຄົ້ນຄິດ ແລະ ຄົ້ນຄວ້າ ບໍ່ທັນເລິກເຊິ່ງ.
  - ການຮ່ວມມືປະສານສົມທົບລະຫວ່າງພາກລັດ ແລະ ເອກະຊົນຍັງບໍ່ທັນກົມກຽວ ແລະ ຕໍ່ເນື່ອງຢ່າງເປັນປົກກະຕິ ຍັງມີລັກສະນະຕ່າງຝ່າຍຕ່າງເຮັດ.
  - ການຮ່ວມມືປະສານສົມທົບລະຫວ່າງຂະແໜງການທີ່ກ່ຽວຂ້ອງ ແລະທ້ອງຖິ່ນຕ່າງໆບໍ່ທັນໄດ້ດີ.
  - ຂໍ້ກໍານົດ ກົດລະບຽບຕ່າງໆຍັງບໍ່ທັນຄົບຖ້ວນ ແລະ ບໍ່ທັນສະພາບການ.

- **<u>ຖອດຖອນບົດຮຽນ</u>** :

  ອີງໃສ່ພຶດຕິກໍາການເຄື່ອນໄຫວແລະການເຕີບໃຫຍ່ຂະຫຍາຍຕົວຂອງວຽກງານການທ່ອງທ່ຽວໃນໄລຍະທີ່ຜ່ານມາ, ພວກເຮົາສາມາດຖອດຖອນບົດຮຽນໄດ້ດັ່ງນີ້ :

1) ການໂຄສະນາເຜີຍແຜ່ແນວທາງນະໂຍບາຍ ຂອງພັກ-ລັດຖະບານ ກ່ຽວກັບການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ ໃຫ້ທຸກພາກສ່ວນ ທົ່ວສັງຄົມ ເຂົ້າໃຈ ແລະ ເຊື່ອມຊຶມຢ່າງຖືກຕ້ອງ, ເລິກ ເຊິ່ງນັ້ນ ເປັນປັດໄຈສຳຄັນ ແລະ ຂາດບໍ່ໄດ້.

2) ການສ້າງຄວາມເຂັ້ມແຂງດ້ານການຈັດຕັ້ງ ໃນລະດັບສູນກາງ ແລະ ທ້ອງຖິ່ນເປັນປັດໄຈພື້ນຖານ ແກ່ຜົນສຳເລັດ ໃນການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ, ພະນັກງານຕ້ອງມີຈຳນວນພຽງພໍ, ມີຄຸນ ນະພາບດີ, ມີຄວາມສາມາດ, ມີຄວາມບຸກບືນ ປະຕິບັດໜ້າທີ່, ພ້ອມນີ້ກໍ່ຕ້ອງ ປັບປຸງແບບແຜນ ວິທີເຮັດ ວຽກ ແລະ ມີຄວາມສາມັກຄີພາຍໃນ.

3) ການວາງແຜນ ແລະ ພັດທະນາແຫຼ່ງທ່ອງທ່ຽວຕ້ອງດຳເນີນໄປຕາມທິດທາງ ພັດທະນາການທ່ອງ ທ່ຽວວັດທະນະທຳ, ທຳມະຊາດ ແລະ ປະຫວັດສາດໃຫ້ສົມສ່ວນໃນລະດັບອັນແນ່ນອນ ແລະ ກະຈາຍ ໃຫ້ທົ່ວເຖິງໃນທົ່ວປະເທດ ໂດຍສະເພາະບັນດາແຂວງ ຫ່າງໄກສອກຫຼີກ ເຮັດໃຫ້ທົ່ວປະເທດ ກາຍເປັນ ວົງຈອນ ການທ່ອງທ່ຽວອັນໜຶ່ງດຽວ ແລະ ເຊື່ອມຕໍ່ກັນ.

4) ການເພີ້ມທະວີການປະສານງານກັບຂະແໜງການແລະ ທ້ອງຖິ່ນແມ່ນເປັນປັດໄຈທີ່ສຳຄັນທີ່ຂາດບໍ່ໄດ້ ບໍ່ວ່າທາງດ້ານການປູກຈິດສຳນຶກ ກ່ຽວກັບວຽກງານທ່ອງທ່ຽວ, ການສ້າງພື້ນຖານໂຄງລ່າງ, ສິ່ງອຳ ນວຍຄວາມສະດວກ. ການຄຸ້ມຄອງ ແລະ ການພັດທະນາ ຕ້ອງຊຸກຍູ້ ໃຫ້ມີການຮ່ວມມື ການປະສານ ສົມທົບ, ການມີສ່ວນຮ່ວມຂອງທຸກພາກສ່ວນ,ທຸກຂັ້ນ, ນັບທັງຊຸມຊົນທ້ອງຖິ່ນ ແລະ ສະມາຄົມຕ່າງໆ ໃນການຮັບປະກັນຄວາມປອດໄພ,ການບໍລິການ ທີ່ມີຄຸນນະພາບ ແລະເປັນທີ່ປະທັບ ໃຈແກ່ຜູ້ມາທ່ຽວຊົມ, ການກຳນົດຄ່າບໍລິການທີ່ສົມເຫດສົມຜົນ, ການສົ່ງເສີມຂະບວນການຜະລິດສິນຄ້າ ພາຍໃນ,ຜະລິດສິ່ງ ຂອງທີ່ລະນຶກ,ການສົ່ງເສີມງານເທດສະການ ແລະ ງານບຸນປະເພນີຕ່າງໆ ເພື່ອ ການທ່ອງທ່ຽວ.

5) ການຍາດແຍ່ງການຮ່ວມມື ແລະ ການຊ່ວຍເຫລືອຂອງອົງການຈັດຕັ້ງສາກົນ ແລະ ດ້ານການຕະ ຫລາດຂອງບັນດາ ປະເທດເພື່ອນມິດເຂົ້າໃນວຽກງານການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວລາວ ເພື່ອໃຫ້ສາມາດ ເຊື່ອມໂຕເຂົ້າກັບການທ່ອງທ່ຽວຂອງພາກພື້ນ ແລະ ຂອງໂລກ.

## <u>ພາກທີ II</u>

## <u>ແຜນຍຸດທະສາດພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ2006-2020</u>

### 1. <u>ຈຸດປະສົງຂອງຍຸດທະສາດການທ່ອງທ່ຽວ 2006-2020</u> :

ຍຸດທະສາດການທ່ອງທ່ຽວ2006-2020 ແມ່ນເອກະສານແຜນແມ່ບົດ ເພື່ອກຳນົດແນວທາງ, ທິດ ທາງນະໂຍບາຍ ແລະ ຄາດໝາຍສູ້ຊົນລວມຂອງການ ພັດທະນາ ແລະ ສົ່ງເສີມວຽກງານທ່ອງທ່ຽວ ໂດຍ ໃຫ້ສອດຄ່ອງກັບມະຕິກອງປະຊຸມໃຫຍ່ຂອງພັກ, ຍຸດທະສາດ ແລະ ແຜນການພັດທະນາ ເສດຖະ ກິດ-ສັງ ຄົມແຫ່ງຊາດ, ເຮັດໃຫ້ການທ່ອງທ່ຽວໄດ້ເຕີບໃຫຍ່ຂະຫຍາຍຕົວ ແລະ ມີຄວາມເຂັ້ມແຂງກາຍ

ເປັນ ຂະແໜງອຸດສາຫະກຳນຶ່ງທີ່ສ້າງ ລາຍຮັບດ້ານເງິນຕາຕ່າງປະເທດໃຫ້ແກ່ປະເທດ ໄດ້ເປັນຢ່າງດີ, ສ້າງ ວຽກເຮັດງານທຳຊ່ວຍສັງຄົມຫລາຍຂື້ນ ສົ່ງເສີມການອະນຸລັກວັດທະນະທຳ ແລະ ປົກປັກຮັກສາຮີດ ຄອງປະເພນີອັນດີງາມຂອງຊາດ, ລວມທັງຊັບພະຍາກອນທຳມະຊາດອັນອຸດົມສົມບູນຂອງຊາດ, ສົ່ງ ເສີມຜະລິດຕະພັນພາຍໃນຂອງທຸກຂະແໜງການ ແລະ ປະກອບສ່ວນໃນການຫຼຸດຜ່ອນຄວາມທຸກຍາກ ຂອງປະຊາຊົນລາວບັນດາເຜົ່າ, ຍຸດທະສາດນີ້ຍັງເປັນພື້ນຖານເພື່ອເຊື່ອມໂຍງເຂົ້າກັບສາກົນ.

ຍຸດທະສາດນີ້ຍັງເປັນພື້ນຖານສຳລັບການສ້າງແຜນການ ແລະ ແຜນດຳເນີນງານແຕ່ລະດ້ານໃນໄລຍະສັ້ນ ແລະ ໄລຍະກາງ ສຳລັບການພັດທະນາ ແລະ ສົ່ງເສີມການທອ່ງທ່ຽວເປັນຕົ້ນໃນຂົງເຂດກ່ຽວກັບການຄຸ້ມຄອງມະຫາພາກຕໍ່ການທ່ອງທ່ຽວ, ການວາງແຜນພັດທະນາການທ່ອງທ່ຽວ, ການຄຸ້ມຄອງທຸລະກິດ ແລະ ກິດຈະກຳການທ່ອງທ່ຽວ, ການໂຄສະນາການສົ່ງເສີມ ແລະ ການຕະຫລາດການທ່ອງທ່ຽວ, ການພັດທະນາບຸກຄະລາກອນຮັບໃຊ້ການທ່ອງທ່ຽວ, ການຮ່ວມມືກັບສາກົນ, ການຮ່ວມມືກັບຂະແໜງການທີ່ປິ່ນອ້ອມການທ່ອງທ່ຽວ ແລະ ອື່ນໆ.

ຈຸດປະສົງຂອງຍຸດທະສາດການທ່ອງທ່ຽວ 2006-2020 ຍັງແມ່ນເພື່ອສ້າງຈິດສຳນຶກກ່ຽວກັບຄວາມສຳຄັນ ແລະ ຜົນປະໂຫຍດອັນໃຫຍ່ຫລວງທີ່ໄດ້ຮັບຈາກການທ່ອງທ່ຽວຕໍ່ບັນດາ ຂະແໜງການ, ອຳນາດການປົກຄອງທ້ອງຖິ່ນ, ຜູ້ປະກອບການ, ປະຊາຊົນ, ຊຸມຊົນ.

ເຖິງແມ່ນວ່າຂະແໜງການທ່ອງທ່ຽວຂອງ ສປປ ລາວ ຈະມີການຂະຫຍາຍໂຕດ້ວຍຈັ່ງຫວະອັນວ່ອງໄວແລ້ວກໍຕາມ, ແຕ່ເພື່ອຮັບປະກັນໃຫ້ການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວດຳເນີນໄປດ້ວຍບາດກ້າວທີ່ໜັກແໜ້ນ, ຕໍ່ເນື່ອງ, ຍືນຍົງ ແລະ ສາມາດເຊື່ອມໂຍງເຂົ້າກັບສາກົນ, ແມ່ນມີຄວາມຈຳເປັນໃຫ້ມີການສ້າງແຜນຍຸດທະສາດການທ່ອງທ່ຽວ2006-2020.

2. **<u>ບ່ອນອີງ ແລະ ຂັ້ນຕອນຂອງການສ້າງຍຸດທະສາດການທ່ອງທ່ຽວ 2006-2020</u> :**

ຍຸດທະສາດນີ້ແມ່ນຖືກຂຽນຂື້ນມາໂດຍອີງໃສ່ :

- ນະໂຍບາຍການພັດທະນາການທ່ອງທ່ຽວທີ່ກຳນົດໄວ້ໃນມະຕິຂອງກອງປະຊຸມໃຫຍ່ຂອງພັກ ຄັ້ງທີ V, ຄັ້ງທີ VI, ຄັ້ງທີ່ VII ແລະ ຄັ້ງທີ່ VIII.
- ອີງໃສ່ຍຸດທະສາດການພັດທະນາເສດຖະກິດ-ສັງຄົມ( 2001-2020) ແລະ ແຜນການພັດທະນາເສດຖະກິດ-ສັງຄົມ( 2006-2010) ຂອງລັດຖະບານ.
- ອີງໃສ່ການສະຫລຸບຕີລາຄາວຽກງານການທ່ອງທ່ຽວໃນຊຸມປີຜ່ານມາ ແລະ ອີງໃສ່ສະພາບຄວາມເປັນຈິງຂອງການທ່ອງທ່ຽວໃນປະເທດພວກເຮົາໃນປັດຈຸບັນ.
- ອີງໃສ່ຜົນຂອງການປຶກສາຫາລື ແລະ ແລກປ່ຽນຄວາມຄິດເຫັນນຳຂະແໜງການທີ່ກ່ຽວຂ້ອງ, ທ້ອງຖິ່ນ, ພາກທຸລະກິດ, ຊຸມຊົນ ແລະ ຊ່ຽນຊານຕ່າງປະເທດຈຳນວນໜຶ່ງ.

ສ່ວນຂັ້ນຕອນໃນການສ້າງເອກະສານວິຊາການ ແມ່ນເລີ່ມຈາກການສັງລວມ ແລະ ວິໄຈຂໍ້ມູນຂ່າວສານຢ່າງເປັນລະບົບ, ການສັບຊ້ອນປຸງແຕ່ງເອກະສານມີການປຶກສາສຳມະນາອອກຄຳຄິດເຫັນກ່ຽວກັບເອກະສານຢ່າງເຕັມ ເມັດເຕັມໜ່ວຍ.

3. **ທ່າແຮງບົ່ມຊ້ອນ , ກາລະໂອກາດ ແລະ ສິ່ງທ້າທາຍຕໍ່ການພັດທະນາການທ່ອງທ່ຽວ ໃນ ສ ປ ປ ລາວ.**

ຈາກບົດຮຽນ ແລະ ສະຫລຸບຕີລາຄາຜົນສຳເລັດໃນຂະແໜງການທ່ອງທ່ຽວໃນທົ່ວປະເທດຕະຫລອດໄລຍ 15 ປີທີ່ຜ່ານມາ ພວກເຮົາສາມາດເຫັນໄດ້ທ່າແຮງບົ່ມຊ້ອນ, ກາລະໂອກາດ ແລະ ສິ່ງທ້າທາຍ ຕໍ່ການທ່ອງທ່ຽວໃນສະເພາະໜ້າ ແລະ ຍາວນານດັ່ງນີ້ :

3.1 **ທ່າແຮງບົ່ມຊ້ອນ ແລະ ກາລະໂອກາດ**

ສປປ ລາວ ມີແຫລ່ງທ່ອງທ່ຽວທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດອັນຫລາກຫລາຍ ແລະ ເປັນເອກະລັກສະເພາະຂອງຕົນ. ສະພາບພູມມີປະເທດທີ່ປະກອບດ້ວຍທົ່ງພຽງ, ພູພຽງ ແລະ ພູດອຍ, ພ້ອມນັ້ນກໍມີອາກາດປອດໂປ່ງ ທີ່ມີອຸນຫະພູມ ຮ້ອນ, ອຸ່ນ, ເຢັນ ແລະ ໜາວຕາມລະດູການຢູ່ໄດ້ພໍດີ, ມີ ປ່າໄມ້ຂຽວສວຍສົດງົດງາມປົກຫຸ້ມເຖິງ 41% ຂອງເນື້ອທີ່ ທົ່ວປະເທດ ເຊິ່ງໃນນີ້ມີທັງປ່າສະຫງວນ ແລະ ເຂດ ອະນຸລັກຊີວະນາງພັນແຫ່ງຊາດ 20 ແຫ່ງ, ປ່າສະຫງວນຂອງແຂວງ ແລະ ຂອງເມືອງເປັນຈຳນວນ ຫລວງຫລາຍ, ມີຜາຫີນ, ພູຫີນໜາມໜໍ່ ແລະ ຖ້ຳພິດສະດານຫລາຍ ແຫ່ງຢາຍຢູ່ໃນບັນດາເຂດ ແຂວງ ແລະ ທ້ອງຖິ່ນ. ປະເທດເຮົາຍັງມີແມ່ນ້ຳຂອງພ້ອມດ້ວຍຫ້ວຍນ້ຳລຳເຊ ນ້ອຍ ໃຫຍ່ ແລະ ໃສສະອາດຈຳນວນຫລວງຫລາຍໄຫຼຜ່ານ ແຕ່ເໜືອເຖິງໃຕ້ ຊຶ່ງທັງໝົດນີ້ຖືກຕົບແຕ່ງດ້ວຍສະລະພັດແກ້ງ, ນ້ຳຕົກຕາດ, ໂດຍ ສະເພາະນ້ຳຕົກຕາດຄອນພະເພັງ-ລີ່ຜີ ເກາະດອນຕ່າງໆ ຊຶ່ງເປັນທິວທັດທຳມະຊາດທີ່ສວຍສົດງົດງາມ ເຮັດໃຫ້ປະເທດລາວໄດ້ຮັບສົມຍານາມວ່າ " ອັນຍະມະນີແຫ່ງແມ່ນ້ຳຂອງ ". ນອກຈາກນີ້ ປະເທດພວກ ເຮົາຍັງມີທີ່ຕັ້ງຢູ່ຈຸດໃຈກາງຂອງອະນຸພາກພື້ນແມ່ນ້ຳຂອງເຊິ່ງເປັນຈຸດເຊື່ອມຕໍ່ ແລະ ເສັ້ນທາງຜ່ານໄປ ຫາ 5 ປະເທດເພື່ອນບ້ານໃນທຸກທິດ.

ດ້ານວັດທະນະທຳ ສປປ ລາວ ປະກອບດ້ວຍຫລາຍຊົນເຜົ່າທີ່ຢູ່ຮ່ວມກັນຢ່າງສັນຕິໃນວົງຄະນະຍາດແຫ່ງຊາດເຮົາ, ມີວັດທະນະທຳ ແລະ ຮີດຄອງປະເພນີອັນຫລາກຫລາຍທີ່ດີງາມ ແລະ ເປັນເອກະລັກຂອງຕົນ, ມີພາສາເວົ້າຂີດຂຽນ ແລະ ການນຸ່ງຫົ່ມຂອງຕົນເອງ, ຄົນລາວມີອັດທະຍາໃສໄມຕີຈິດໃນການ ຕ້ອນຮັບແຂກຕ່າງດ້າວ ແລະ ທ້າວຕ່າງແດນ, ມີຄວາມຍິ້ມແຍ້ມແຈ່ມໃສ, ຊື່ສັດ ແລະ ຊ່ວຍເຫລືອເກື້ອກູນ ຊຶ່ງກັນ ແລະ ກັນ. ປະຊາຊົນລາວຍຶດຖືຮີດສິບສອງຄອງສິບສີ່ ຊຶ່ງຈັດງານບຸນປະເພນີຕ່າງໆ ຕະຫລອດປີ. ສິ່ງທີ່ເປັນໜ້າເອກອ້າງແມ່ນພວກເຮົາມີແຫລ່ງທ່ອງທ່ຽວດ້ານສະຖາປັດຕິຍະກຳ ແລະ ປະຫວັດສາດ ຢ່າງ ຫລວງຫລາຍເຊັ່ນ : ເມືອງມໍລະດົກໂລກ ຫລວງພະບາງ, ມໍລະດົກໂລກວັດ

ພູຈຳປາສັກ ; ທົ່ງໄຫ ຫີນ, ພະທາດຫລວງ, ພະທາດສີໂຄດຕະບອງ, ທາດອິຮັງ, ຫີນຕັ້ງຊຳເໜືອ ແລະ ອື່ນໆ.

ສິ່ງທີ່ເປັນທ່າແຮງສຳຄັນທີ່ສຸດໃຫ້ແກ່ການທ່ອງທ່ຽວແມ່ນ ປະເທດພວກເຮົາ ມີສັນຕິພາບ, ສະເຖຍລະພາບທາງດ້ານການເມືອງ, ມີເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ໃນອັດຕາສູງສົມຄວນ, ສັງຄົມມີຄວາມສະຫງົບປອດໄພ ແລະ ເປັນລະບຽບຮຽບຮ້ອຍດີ, ພື້ນຖານໂຄງລ່າງໄດ້ຮັບການພັດທະນາ ແລະ ປັບປຸງໃນລະດັບອັນແນ່ນອນ.

ສ່ວນທີ່ເປັນກາລະໂອກາດ ແມ່ນການຂະຫຍາຍຕົວຂອງການທ່ອງທ່ຽວຂອງໂລກ ແລະ ພາກພື້ນພວມຢູ່ໃນຈັງຫວະທີ່ວ່ອງໄວ ແລະ ມີລັກສະນະເຊື່ອມຕົວເຂົ້າກັນຕາມຍຸກໂລກາພິວັດ, ໂດຍສະເພາະ ໃນປີ 2020 ອົງການທ່ອງທ່ຽວໂລກ ໄດ້ຄາດຄະເນວ່າ : ສປ ຈີນ ແລະ ປະເທດອິນເດຍ ຈະກາຍເປັນ ປະເທດອັນດັບ 1 ແລະ ອັນດັບ 2 ຂອງໂລກ ທີ່ມີການທ່ອງທ່ຽວຂະຫຍາຍຕົວ, ຊຶ່ງແນ່ນອນ ທັງ 2 ປະເທດນີ້ຈະກາຍເປັນຕະຫລາດນັກທ່ອງທ່ຽວທີ່ສຳຄັນສຳລັບການທ່ອງທ່ຽວລາວ.

ນະໂຍບາຍເຊື່ອມໂຍງດ້ານເສດຖະກິດຂອງ ສປປ ລາວ ກັບບັນດາປະເທດອາຊຽນ, ປະເທດອະນຸພາກພື້ນແມ່ນ້ຳຂອງທີ່ມີການທ່ອງທ່ຽວຂະຫຍາຍຕົວໄວ ກໍແມ່ນປັດໄຈສຳຄັນເພື່ອຊຸກຍູ້ ການທ່ອງທ່ຽວລາວໃຫ້ກ້າວໜ້າໄປຕື່ມ.

## 3.2. ສິ່ງທ້າທາຍ ແລະ ຂໍ້ຫຍຸ້ງຍາກໃນປັດຈຸບັນ.

ໃນການສົ່ງເສີມ ແລະ ພັດທະນາການທ່ອງທ່ຽວ ສິ່ງທ້າທາຍສາມາດເກີດຂຶ້ນ ໄດ້ທຸກໄລຍະຊຶ່ງກໍຈະເປັນຜົນກະທົບແກ່ການທ່ອງທ່ຽວໃນປະເທດພວກເຮົາເປັນຕົ້ນ :

- ເຫດການ ການເມືອງສາກົນ ການກໍ່ການຮ້າຍສາກົນ, ພະຍາດແຜ່ລະບາດຕ່າງໆ ຈະເປັນອຸປະສັກຂັດຂວາງ ການເດີນທາງທ່ອງທ່ຽວທາງໄກ.
- ລາຄານ້ຳມັນໃນໂລກມີທ່າອ່ຽງສູງຂຶ້ນກໍກະທົບໃສ່ດ້ານບໍລິການຕ່າງໆແພງຂຶ້ນເຊັ່ນດຽວກັນ.
- ການແຂ່ງຂັນດ້ານການທ່ອງທ່ຽວໃນຕະຫຼາດສາກົນສຸດທີ່ຂ້ຽວຂາດ, ແຕ່ລະປະເທດນຳໃຊ້ເຕັກໂນໂລຊີ ທັນສະໄໝ, ການຍົກລະດັບມາດຕະຖານ ແລະ ຄຸນນະພາບການບໍລິການສູງຂຶ້ນ ແຕ່ລາຄາຊ້ຳພັດຖືກລົງນີ້ເປັນແຂ່ງຂັນລວມເພື່ອດຶງດູດນັກທ່ອງທ່ຽວເຂົ້າໃນປະເທດຂອງຕົນ.
- ພື້ນຖານໂຄງລ່າງຂອງປະເທດເຮົາບໍ່ທັນສະດວກສະບາຍປານໃດ ແລະ ມີຂໍ້ຈຳກັດຫຼາຍດ້ານເປັນຕົ້ນເສັ້ນທາງຄົມມະນາຄົມ ເຊື່ອມຕໍ່ລະຫວ່າງປະເທດພວກເຮົາ ແລະ ປະເທດເພື່ອນບ້ານ, ລະຫວ່າງແຂວງຕໍ່ແຂວງກໍ່ຄືເສັ້ນທາງເຂົ້າເຖິງແຫຼ່ງທ່ອງທ່ຽວທີ່ສຳຄັນ, ເຄືອຄ່າຍການສື່ສານໂທລະຄົມມະນາຄົມ, ການບິນສົ່ງລະຫວ່າງປະເທດຍັງຈຳກັດ, ພາຫານະໂດຍສານເວົ້າລວມແມ່ນເກົ່າແກ່ ເປັນຕົ້ນພາຫານະໂດຍສານທາງອາກາດພວກເຮົາຍັງຈຳກັດຫລາຍ.

- ການດຳເນີນທຸລະກິດທ່ອງທ່ຽວ ຂອງຜູ້ປະກອບການຍັງບໍ່ທັນເຂັ້ມແຂງ, ທຶນຮອນບໍ່ພຽງພໍ ແລະ ຂາດປະສົບການ, ບຸກຄະລາກອນທີ່ມີວິຊາສະເພາະດ້ານນີ້ ມີຈຳນວນຈຳກັດ.

- ດ້ານກົງຈັກການຈັດຕັ້ງ ແລະ ບຸກຄະລາກອນໃນການຄຸ້ມຄອງຂະແໜງການທ່ອງທ່ຽວ ບໍ່ທັນສົມຄູ່ກັບ ຈັງຫວະການຂະຫຍາຍຕົວຂອງອຸດສາຫະກຳທ່ອງທ່ຽວ.

- ການປະຕິບັດນະໂຍບາຍ ແລະ ລະບຽບການເພື່ອອຳນວຍຄວາມສະດວກໃນການເຂົ້າ-ອອກເມືອງ, ການ ເດີນທາງໄປສະຖານທີ່ທ່ອງທ່ຽວຕ່າງໆຍັງບໍ່ທັນເປັນເອກະພາບ, ມີບາງບ່ອນກໍຍານໂພດຈຶ່ງມີຜົນສະທ້ອນ ຕໍ່ວຽກງານປ້ອງກັນຊາດປ້ອງຄວາມສະຫງົບ, ມີບາງບ່ອນສຳພັດເຄັ່ງຄັດໂພດ ຊຶ່ງເປັນການກີດກັ້ນຂັດ ຂວາງການທ່ອງທ່ຽວໂດຍບໍ່ມີເຫດຜົນ.

- ການພັດທະນາສະຖານທີ່ທ່ອງທ່ຽວຕ່າງໆເວົ້າລວມແມ່ນຍັງຢູ່ຂັ້ນຕົ້ນ, ບາງບ່ອນບໍ່ມີພື້ນຖານໂຄງລ່າງ ເຂົ້າເຖິງ, ບໍ່ມີການບໍລິການຫລາຍຮູບຫລາຍສີ ເພື່ອເປັນສິ່ງດຶງດູດນັກທ່ອງທ່ຽວ.

- ການຈຳກັດ ແລະ ການຢັບຢັ້ງຜົນກະທົບຂອງວັດທະນະທຳຫຍໍ້ທໍ້ຈາກທາງນອກ ລວມທັງການຄ້າຢາ ເສບຕິດ, ການຄ້າຜູ້ຍິງ, ການຄ້າເດັກນ້ອຍ ແລະ ການຄ້າໂສເພນີທີ່ແປດປົນມານຳອຸດສາຫະກຳການ ທ່ອງທ່ຽວຍັງເປັນບັນຫາທີ່ຕ້ອງເອົາໃຈໃສ່ຫລາຍທີ່ສຸດ.

## 4 . ຍຸດທະສາດ, ທິດທາງລວມ ແລະ ຄາດໝາຍສູ້ຊົນຂອງການພັດທະນາ ແລະ ສົ່ງເສີມການທ່ອງ ທ່ຽວ 2006-2020

### 4.1 ຍຸດທະສາດ ແລະ ຄາດໝາຍລວມ

ໂດຍອີງໃສ່ແນວທາງຂອງພັກ-ລັດກ່ຽວກັບວຽກງານທ່ອງທ່ຽວຂອງປະເທດພວກເຮົາ ແລະ ອີງໃສ່ ການສະຫລຸບຕີລາຄາດ້ານດີ, ດ້ານອ່ອນ, ວຽກງານດັ່ງກ່າວໃນໄລຍະຜ່ານມາ, ຈຶ່ງສະເໜີໃຫ້ມີຍຸດທະສາດ ແລະ ທິດທາງລວມກ່ຽວກັບການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວຂື້ນໄລຍະ 2006-2020 ດັ່ງນີ້ :

1) ສ້າງປະເທດລາວໃຫ້ກາຍເປັນແຫລ່ງທ່ອງທ່ຽວ ທີ່ຊາວໂລກໄດ້ຮູ້ຈັກ ໃນຮູບແບບຂອງການ ທ່ອງທ່ຽວ ວັດທະນະທຳ, ທຳມະຊາດ ແລະ ປະຫວັດສາດ ທີ່ມີລັກສະນະຍືນຍົງ ແລະ ປະຊາຊົນມີສ່ວນຮ່ວມ, ປະກອບ ສ່ວນຢ່າງແຂງແຮງ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງປະເທດ ແລະ ລົບລ້າງຄວາມທຸກຍາກ ຂອງປະຊາຊົນບັນດາເຜົ່າ.

2) ການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວຂອງປະເທດເຮົາ ຕ້ອງສອດຄ່ອງກັບຄວາມອາດສາມາດ ຮອງຮັບຕົວຈິງຂອງພວກເຮົາ, ພັດທະນາມີຈຸດສຸມ ແລະ ມີເປົ້າໝາຍອັນແນ່ນອນເພື່ອຮັບປະກັນຄຸນນະ ພາບ ແລະ ການບໍລິການ ແນໃສ່ເພື່ອຮັກສາພາບພົດ ແລະ ຊື່ສຽງຂອງປະເທດພວກເຮົາ.

3) ການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວຂອງປະເທດພວກເຮົາຕ້ອງຕິດພັນກັບການຊຸກຍູ້ການພັດ ທະນາເສດຖະກິດ-ສັງຄົມຢູ່ທ້ອງຖິ່ນ ເພື່ອເຮັດໃຫ້ໂຄງປະກອບເສດຖະກິດແຫ່ງຊາດມີການຂະຫຍາຍຕົວ ຢ່າງໜັກແໜ້ນ ແລະ ຕໍ່ເນື່ອງ.

4) ການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວຂອງປະເທດພວກເຮົາຕ້ອງຕິດພັນກັບວຽກງານປ້ອງກັນ ຊາດປ້ອງກັນຄວາມສະຫງົບ ເພື່ອປົກປັກຮັກສາສິ່ງແວດລ້ອມທຳມະຊາດ, ປົກປັກຮັກສາວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງປະຊາຊົນບັນດາເຜົ່າ.

5) ການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວຂອງປະເທດພວກເຮົາ ຕ້ອງຕິດພັນກັບການສົ່ງເສີມບົດບາດຄວາມຮັບຜິດຊອບ ແລະ ຄວາມເປັນເຈົ້າການຂອງທຸກຂະແໜງການ ແລະ ທ້ອງຖິ່ນ, ຂອງທຸກພາກສ່ວນເສດຖະກິດ ລວມທັງຂອງປະຊາຊົນ ແນໃສ່ເຮັດໃຫ້ການທ່ອງທ່ຽວ ມີກຳລັງແຮງສັງລວມ ກ້າວໄປເຖິງການກ້າວເປັນອຸດສາຫະກຳການທ່ອງທ່ຽວ ທີ່ທັນສະໄໝ ເພື່ອເຊື່ອມຕົວເຂົ້າກັບການທ່ອງທ່ຽວສາກົນ ແລະ ພາກພື້ນ.

6) ເສີມຂະຫຍາຍການຮ່ວມມື ດ້ານການທ່ອງທ່ຽວກັບອົງການຈັດຕັ້ງສາກົນ ແລະ ບັນດາປະເທດໃນໂລກ ໂດຍສະເພາະແມ່ນບັນດາປະເທດ ໃນພາກພື້ນ ອາຊີ-ປາຊີຟິກ, ອາຊຽນ, ອະນຸພາກພື້ນແມ່ນ້ຳຂອງ.

7) ສືບຕໍ່ປັບປຸງລະບຽບການ ແລະ ເງື່ອນໄຂອັນຈຳເປັນເພື່ອອຳນວຍຄວາມສະດວກ ໃນການເຂົ້າ-ອອກປະເທດ ການເດີນທາງທ່ອງທ່ຽວພາຍໃນປະເທດ ການເດີນທາງທ່ອງທ່ຽວເຊື່ອມຕໍ່ກັບບັນດາປະເທດໃກ້ຄຽງເຮັດແນວໃດ ໜັນ ສປປ ລາວ ໃຫ້ກາຍເປັນປະເທດບໍລິການທາງຜ່ານ ຢ່າງຮອບດ້ານ ລວມທັງການເຊື່ອມໂຍງ ການທ່ອງທ່ຽວໃນພາກພື້ນ ແລະ ອະນຸພາກພື້ນຢ່າງແທ້ຈິງ.

8) ສືບຕໍ່ປັບປຸງກົນຈັກ ແລະ ກົນໄກການບໍລິຫານຄຸ້ມຄອງວຽກງານທ່ອງທ່ຽວໃນທົ່ວປະເທດ ລວມທັງການວາງແຜນພັດທະນາການທ່ອງທ່ຽວ, ການໂຄສະນາ ແລະ ສົ່ງເສີມການທ່ອງທ່ຽວ, ການສ້າງ ແລະ ການຂະຫຍາຍຜະລິດຕະພັນທ່ອງທ່ຽວ ໃຫ້ຫລາກຫລາຍ, ການປູກຈິດສຳນຶກ ກ່ຽວກັບການທ່ອງທ່ຽວ, ການພັດທະນາບຸກຄະລາກອນ ໃນຂະແໜງການທ່ອງທ່ຽວ, ການຊຸກຍູ້ສົ່ງເສີມການລົງທຶນ ໃສ່ກິດຈະກຳການທ່ອງທ່ຽວ, ການປະສານສົມທົບກັບບັນດາຂະແໜງການ ແລະ ທ້ອງຖິ່ນ.

### 4.2 ຄາດໝາຍສູ້ຊົນລວມຂອງການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ 2006-2020

ຄາດໝາຍສູ້ຊົນຂອງການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ ຮອດປີ 2020 ແມ່ນພະຍາຍາມ ສ້າງໃຫ້ການທ່ອງທ່ຽວລາວຕັ້ງຢູ່ໃນຂະແໜງການແຖວໜ້າຂອງປະເທດກໍຄືອະນຸພາກພື້ນ ຊຶ່ງໃນນັ້ນການທ່ອງທ່ຽວຕ້ອງກາຍເປັນອຸດສາຫະກຳການທ່ອງທ່ຽວທີ່ຄົບຊຸດ ແລະ ທັນສະໄໝ ມີການບໍລິການ ການຄຸ້ມ ຄອງການທ່ອງທ່ຽວເປັນເອກະພາບ ແລະ ກົມກ່ຽວກັນທັງໃນດ້ານມະຫາພາກ ແລະ ການບໍລິການທຸລະກິດ ມີພື້ນຖານໂຄງລ່າງແຕ່ລະດ້ານເຊື່ອມໂຍງກັນເປັນຢ່າງດີຕັ້ງຢູ່ພາຍໃນ ແລະ

ບັນດາປະເທດໃນພາກພື້ນ ມີກິດຈະກຳ ແລະ ຜະລິດຕະພັນທ່ອງທ່ຽວອັນຫລາກຫລາຍ ແລະ ຫລາຍຮູບຫລາຍສີ.

ຄາດຄະເນຮອດປີ 2010 ຈະມີນັກທ່ອງທ່ຽວເຖິງ 1,6 ລ້ານ ຄົນ, ປີ 2015 ເຖິງ 2,2 ລ້ານຄົນ ແລະ ປີ 2020 ເຖິງ 3 ລ້ານຄົນ, ຊຶ່ງຈະສ້າງລາຍຮັບເປັນເງິນຕາ 200 - 370 ລ້ານໂດລາສະຫາລັດຕາມລຳດັບ. ດຶງດູດການລົງທຶນສ້າງສະຖານທີ່ພັກແຮມເຊັ່ນ : ໂຮງແຮມ, ເຮືອນພັກ ແລະ ຣີສອດ ໃຫ້ໄດ້ 16.000 ຫ້ອງນອນ ໃນປີ 2010, 20.000 ຫ້ອງນອນ ໃນປີ 2015 ແລະ ຮອດປີ 2020 ໃຫ້ໄດ້ 25.000 ຫ້ອງນອນ.

ຄາດຄະເນຮອດປີ 2010 ຈະມີແຫຼ່ງທ່ອງທ່ຽວທຳມະຊາດ ແລະວັດທະນະທຳທີ່ເປັນມໍລະດົກໂລກ 2 ແຫ່ງ, ລະດັບຊາດ 4 ແຫ່ງ, ລະດັບແຂວງ 10 ແຫ່ງ, ຮອດປີ 2020 ໃຫ້ມີແຫຼ່ງທ່ອງທ່ຽວລະດັບມໍລະດົກໂລກ ຕື່ມອີກ2-3 ແຫ່ງ, ລະດັບຊາດຕື່ມອີກ 5 ແຫ່ງ, ລະດັບແຂວງຕື່ມອີກ 10 ແຫ່ງ ແລະ ເພີ່ມເມືອງທ່ອງທ່ຽວໃຫ້ ໄດ້ອີກ 5 ເມືອງ.

### 4.3 ຍຸດທະສາດ,ທິດທາງ ແລະ ຄາດໝາຍສູ້ຊົນລະອຽດຂອງແຕ່ລະຂົງເຂດວຽກງານ

ເພື່ອປະຕິບັດຍຸດທະສາດ, ທິດທາງ ແລະ ຄາດໝາຍສູ້ຊົນລວມທີ່ກຳນົດໄວ້ນັ້ນເຫັນມີຄວາມຈຳເປັນ ຕ້ອງ ເອົາໃຈໃສ່ 7 ຂົງເຂດວຽກງານ 7 ແຜນງານດັ່ງນີ້ :

4.3.1 : **ແຜນງານປັບປຸງ ແລະ ບູລະນະການຈັດຕັ້ງ ແລະ ການຄຸ້ມຄອງການທ່ອງທ່ຽວ** : ຍຸດທະສາດ ແລະ ທິດ

ທາງສະເພາະແຜນງານນີ້ ຄືສືບຕໍ່ປັບປຸງກົງຈັກການຈັດຕັ້ງຂະແໜງການທ່ອງທ່ຽວ ຢູ່ຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ ໃຫ້ມີຄວາມສະຫງົບເຂັ້ມແຂງຊຶ່ງມີການປະສານງານກັນຢ່າງຄ່ອງຕົວຕາມສາຍຕັ້ງ ແລະ ສາຍຂວາງ, ມີກົນໄກທີ່ສາມາດຊີ້ນຳຄຸ້ມຄອງທີ່ມີປະສິດທິຜົນ, ມີບຸກຄະລາກອນທີ່ມີຄວາມຮູ້ຄວາມສາມາດສູງເພື່ອປະຕິບັດຕາມແຜນຍຸດທະສາດນີ້ ໃຫ້ປະສົບຜົນສຳເລັດ ຈະຕ້ອງໄດ້ເອົາໃຈໃສ່ບັນດາກຸ່ມວຽກ ດັ່ງລຸ່ມນີ້ :

- ສືບຕໍ່ປັບປຸງກົງຈັກການຈັດຕັ້ງຂັ້ນສູນກາງ ແລະ ທ້ອງຖິ່ນໃຫ້ສອດຄ່ອງກັບດຳລັດຂອງນາຍົກລັດຖະມົນ ຕີ, ສະບັບເລກທີ 91/ນຍ, ລົງວັນທີ 30/06/2004 ແລະ ກົດໝາຍທ່ອງທ່ຽວສະບັບເລກທີ 10/ສພຊ, ລົງວັນທີ 09/11/2005 ຄືຢູ່ຂັ້ນສູນກາງຕ້ອງເປັນການຈັດຕັ້ງທີ່ບົດບາດເປັນທະບວງແທ້ ເພື່ອກ້າວເປັນກະຊວງໃນ ອະນາຄົດ ຢູ່ຂັ້ນແຂວງຖ້າເປັນແຂວງໃຫຍ່ທີ່ມີການທ່ອງທ່ຽວຂະຫຍາຍຕົວ ກໍຕ້ອງພິຈາລະນາຍົກໃຫ້ເປັນພະແນກນຶ່ງ ເປັນເອກະລາດຄືກັບຂະແໜງການອື່ນໆ ຢູ່ຂັ້ນເມືອງກໍເຊັ່ນດຽວກັນ ໜ່ວຍງານ ຫຼື ຜູ້ປະສານງານ ກໍສາມາດຍົກລະດັບການຈັດຕັ້ງ ເປັນຫ້ອງການທ່ອງທ່ຽວໄດ້.
- ສືບຕໍ່ກຳນົດຕຳແໜ່ງງານ ຂັ້ນສູນກາງ ແລະ ທ້ອງຖິ່ນໃຫ້ຈະແຈ້ງເພື່ອເປັນບ່ອນອີງໃຫ້ແກ່ການບັນຈຸລັດ ຖະກອນ ເຂົ້າແຕ່ລະຕຳແໜ່ງງານ.

- ສ້າງຂໍ້ກຳນົດຂອງອົງການທ່ອງທ່ຽວແຫ່ງຊາດ ເພື່ອກຳນົດພາລະບົດບາດໜ້າທີ ແລະ ຂອບເຂດສິດຂອງ ຂະແໜງການທ່ອງທ່ຽວ ຢູ່ຂັ້ນແຂວງ ແລະ ຂັ້ນເມືອງ ເພື່ອເປັນພື້ນຖານໃຫ້ແກ່ການແບ່ງຂັ້ນ ຄຸ້ມຄອງລະ ຫວ່າງຂັ້ນສູນກາງ ແລະ ທ້ອງຖິ່ນ ໃນ ສົກປີ 2005-2006 ໃຫ້ສຳເລັດ ໃນການສ້າງຕັ້ງຂໍ້ກຳນົດດັ່ງກ່າວ.
- ສືບຕໍ່ຝຶກອົບຮົບ ແລະ ບຳລຸງສ້າງພະນັກງານລັດຖະກອນທີ່ສັງກັດໃນຂະແໜງການທ່ອງທ່ຽວ ເພື່ອຍົກລະດັບຄວາມຮູ້ຄວາມສາມາດ ດ້ານການຄຸ້ມຄອງ ແລະ ດ້ານການແລກປ່ຽນວິຊາການ ໃຫ້ທຽບເທົ່າກັບລະດັບສາກົນ ແນໃສ່ພັດທະນາການບໍລິຫານຄຸ້ມຄອງ ວຽກງານທ່ອງທ່ຽວໃຫ້ມີຄຸນນະພາບ ແລະ ປະສິດທິ ພາບໃນລະຫວ່າງປີ 2010 ຕ້ອງຍົກລະດັບວຸດທິການສຶກສາລະດັບປະລິນຍາຕີ ຂອງພະນັກງານລັດຖະກອນ ສັງກັດຂະແໜງການທ່ອງທ່ຽວ ໃຫ້ໄດ້ 70 % ຂອງຈຳນວນທັງໝົດ.
- ປັບປຸງຫ້ອງການທ່ອງທ່ຽວປະຈຳແຂວງ ແລະ ເມືອງໃຫ້ມີຖານະພົ້ນເດັ່ນຂຶ້ນຢ່າງຮອບດ້ານຄ່ຽງຂ້າງກັບຂະແໜງການອື່ນເປັນຕົ້ນຫ້ອງເຮັດວຽກ, ງົບປະມານລັດ, ການປະກອບພາຫະນະເຮັດວຽກ ລວມທັງການປັບປຸງກອງທຶນສົ່ງເສີມການທ່ອງທ່ຽວ ແຕ່ສົກປີ 2005-2006 ເປັນຕົ້ນໄປ ໃຫ້ຍົກລະດັບງົບປະມານຂະແໜງການທ່ອງທ່ຽວ ເປັນງົບປະມານຂັ້ນ I, ຕາມດຳລັດຂອງນາຍົກລັດຖະມົນຕີ 91/ນຍ, ປີ 2004.

### 4.3.2 ແຜນງານ ການ ສ້າງແຜນ ແລະ ພັດທະນາແຫລ່ງທ່ອງທ່ຽວ

ເພື່ອປະຕິບັດຕາມແຜນງານຍຸດທະສາດການທ່ອງທ່ຽວໃຫ້ປະສົບຜົນສຳເລັດຈະຕ້ອງໄດ້ເອົາໃຈໃສ່ຕໍ່ບັນດາ ແຜນງານລະອຽດດັ່ງຕໍ່ໄປນີ້ :

<u>ໂຄງການທີ່</u> 1 : **ສຳຫລວດ ແລະ ຂຶ້ນບັນຊີແຫລ່ງທ່ອງທ່ຽວ**

ອົງການທ່ອງທ່ຽວແຫ່ງຊາດປະສານສົມທົບກັບຫ້ອງການທ່ອງທ່ຽວແຂວງ, ບັນດາຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງສືບຕໍ່ ສຳຫລວດເກັບກຳຂໍ້ມູນແຫລ່ງທ່ອງທ່ຽວ ເພື່ອຈັດລະດັບ, ປະເພດ,ພ້ອມທັງ ຂຶ້ນບັນຊີ ບັນດາແຫລ່ງທ່ອງທ່ຽວທີ່ໄດ້ສຳຫລວດແລ້ວ ໃນຂອບເຂດທົ່ວປະເທດເປັນຕົ້ນ ແຫລ່ງ ທ່ອງທ່ຽວ ລະດັບເມືອງ, ແຂວງ ແລະ ລະດັບຊາດແນໃສ່ແບ່ງຂັ້ນຄຸ້ມຄອງ ແລະ ນຳໃຊ້ໃຫ້ແທດເໝາະ, ມີປະສິດທິຜົນ ແລະ ມີຄວາມຍືນຍົງ.

<u>ໂຄງການທີ່</u> 2 : **ວາງແຜນພັດທະນາແຫລ່ງທ່ອງທ່ຽວ**

ສຳຫລວດເກັບກຳຂໍ້ມູນລະອຽດບັນດາແຫລ່ງທ່ອງທ່ຽວທີ່ຂຶ້ນບັນຊີໄວ້ແລ້ວເພື່ອວິເຄາະຜົນກະທົບທາງດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມຢ່າງຮອບດ້ານ ອອກແບບ ແລະ ວາງແຜນ, ຈັດບູລິມາສິດເພື່ອພັດທະນາຕາມຄວາມເໝາະສົມແນໃສ່ຮັບປະກັນປະສິດທິຜົນໃນການພັດທະນາ ແລະ ໃຫ້ມີຄວາມຍືນຍົງ.

ຮ່ວມກັບບັນດາແຂວງເພື່ອກຳນົດແຫຼ່ງທ່ອງທ່ຽວ

ຈັດລະດັບບູລິມະສິດນຳສະເໜີລັດຖະບານເພື່ອຊອກຫາ ແຫລ່ງທຶນມາປັບປຸງ.

ຈັດສັນເມືອງທ່ອງທ່ຽວໃຫ້ມີຄວາມສະດວກເພື່ອດຶງດູດ ແລະ ບໍລິການນັກທ່ອງທ່ຽວ.

ໂຄງການທີ 3 : **ການສ້າງແຜນແມ່ບົດພັດທະນາການທ່ອງທ່ຽວລະດັບພາກ**

ໂດຍອີງຕາມແຜນພັດທະນາເສດຖະກິດ ສັງຄົມ ຂອງລັດຖະບານ ທີ່ໄດ້ຈັດແບ່ງການພັດທະນາເສດຖະ
ກິດ ສັງຄົມເປັນພາກ, ຈຶ່ງໄດ້ກຳນົດແຜນການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ ຮອດປີ 2020 ໃນແຕ່ລະພາກຄືດັ່ງນີ້:

★ ພາກເໜືອ :

ພາກເໜືອເປັນເຂດສູງຊັນ ມີພູຜາປ່າໄມ້, ອາກາດໜາວເຢັນ, ມີແມ່ນ້ຳລຳເຊຫລາຍສາຍ ເປັນຕົ້ນ ແມ່ນ ແມ່ນ້ຳຂອງ, ນ້ຳທາ, ນ້ຳອູ, ນ້ຳຄານ ແລະ ສາຍນ້ຳອື່ນໆ, ມີຫລາຍຊົນເຜົ່າ, ມີຮີດຄອງປະເພນີ ທີ່ເປັນ ເອກະລັກຂອງທ້ອງຖິ່ນ. ມີປ່າສະຫງວນແຫ່ງຊາດຈຳນວນ 6 ແຫ່ງໃນ 5 ແຂວງ ຄື :

- ປ່າສະຫງວນແຫ່ງຊາດພູດາງແຮແຂວງຜົ້ງສາລີ ມີເນື້ອທີ່ 2 .220 ກິໂລແມັດມົນທົນ
- ປ່າສະຫງວນແຫ່ງຊາດນ້ຳຫ້າແຂວງຫຼວງນ້ຳທາ ມີເນື້ອທີ່ 2.224 ກິໂລແມັດມົນທົນ
- ປ່າສະ ຫງວນ ແຫ່ງຊາດນ້ຳແອດ ຫົວພັນ ມີເນື້ອທີ່ 1.915 ກິໂລແມັດມົນທົນ
- ປ່າສະ ຫງວນ ແຫ່ງຊາດນ້ຳຊຳ ຫົວພັນ ມີເນື້ອທີ່ 1.734 ກິໂລແມັດມົນທົນ
- ປ່າສະຫງວນແຫ່ງຊາດ ພູເລີຍແຂວງຫຼວງພະບາງ ແລະ ຫົວພັນ,ມີເນື້ອທີ່ 1.465 ກິໂລແມັດມົນທົນ
- ປ່າສະຫງວນແຫ່ງຊາດ ນ້ຳປຸຍແຂວງໄຊຍະບູລີ ມີເນື້ອທີ່ 1.912 ກິໂລແມັດມົນທົນ

ລວມທັງໝົດປ່າສະຫງວນແຫ່ງຊາດໃນພາກເໜືອມີເນື້ອທີ່ ທັງໝົດ 11.470 ກິໂລແມັດມົນທົນ.

- ໂດຍອີງໃສ່ເງື່ອນໄຂສະພາບແວດລ້ອມທາງດ້ານພູມສາດ, ແຫລ່ງທ່ອງທ່ຽວ, ຊັບພະຍາກອນທຳມະຊາດ ແລະ ຊີວະນາໆພັນ, ຄວາມຫລາກຫລາຍຂອງປະຊາຊົນບັນດາເຜົ່າທີ່ມີຂະນົບທຳນຽມປະເພນີ ແລະ ວິຖີ ຊີວິດ ທີ່ມີເອກກະລັກສະເພາະຂອງແຕ່ລະຊົນເຜົ່າ ຈຶ່ງກຳນົດຍຸດທະສາດ ການພັດທະນາການ ທ່ອງທ່ຽວ ແບບອະນຸລັກປະຊາຊົນມີສ່ວນຮ່ວມ ເປັນບຸລິມະສິດສຳຄັນຊຶ່ງເຄີຍມີໝໍ່ແໜງທີ່ດີ ແລະ ປະສົບ ຜົນສຳເລັດ ມາແລ້ວຄື ດັ່ງທີ່ກ່າວມາໃນພາກທີ I ນັ້ນ. ສຳລັບ ພາກເໜືອເອົາແຂວງຫລວງພະບາງເປັນໃຈກາງ ຂອງ ການທ່ອງທ່ຽວເພື່ອກະຈາຍໄປແຂວງອື່ນໆ, ວາງແຜນອະນຸລັກເມືອງຫລວງພະບາງ ເຊິ່ງເປັນ ເມືອງ ມໍລະດົກຂອງຊາດ ແລະ ຂອງໂລກນັ້ນ ໃຫ້ເປັນແຫຼ່ງທ່ອງທ່ຽວວັດທະນະທຳ, ທຳມະຊາດ ແລະ ປະຫວັດສາດ ທີ່ຍືນຍົງ ຕະຫຼອດໄປ.

- ສ້າງສູນຂໍ້ມູນຂ່າວສານທ່ອງທ່ຽວ ທີ່ຫລວງພະບາງເພື່ອສັງລວມຂໍ້ມູນການທ່ອງທ່ຽວ,ແຫລ່ງທ່ອງທ່ຽວ ຂອງ ແຂວງຫລວງພະບາງ ແລະ ບັນດາແຂວງພາກເຫນືອເພື່ອຕອບສະໜອງ ຂໍ້ມູນການທ່ອງທ່ຽວ ໃຫ້ແກ່ນັກທ່ອງທ່ຽວ ແລະ ຜູ້ທີ່ສົນໃຈທົ່ວໄປ.
- ສ້າງຈຸດທ່ອງທ່ຽວຢູ່ແຂວງບໍ່ແກ້ວ, ຫລວງນ້ຳທາ ຊຶ່ງນອນຢູ່ໃນເປົ້າໝາຍ ການພັດທະນາແລວເສດຖະກິດ ເໜືອ-ໃຕ້ ແລະ ໃຊ້ເສັ້ນທາງ ອາ 3 ເພື່ອພັດທະນາການທ່ອງທ່ຽວ ລະຫວ່າງຊາດ ໃຫ້ເຊື່ອມ

ຕໍ່ກັນ ເປັນຕົ້ນ ຈາກປະເທດໄທ ຜ່ານປະເທດລາວ ເພື່ອໄປຍັງ ປະເທດຈີນ (ມົນທົນຢູນານ). ເສັ້ນທາງ ເມືອງເງິນ ປາກແບງ ເພື່ອເຊື່ອມຕໍ່ພາກອີສານຕອນເໜືອຂອງໄທ ຜ່ານແຂວງ ອຸດົມໄຊ ໄປ ສປຈີນ ແລະ ຜ່ານ ແຂວງອຸດົມໄຊ, ຫົວພັນໄປຫວຽດນາມ. ອີກເສັ້ນທາງໜຶ່ງ ແມ່ນຈາກວຽງຈັນ ຂຶ້ນຫລວງພະບາງ, ອຸດົມໄຊ, ຫລວງນ້ຳທາ ໄປຍັງປະເທດ ຈີນ ຕອນໃຕ້ ຫຼື ອອກສູ່ປະເທດໄທ, ມຽນມາ ແລະ ຫວຽດນາມ.

1) ແນໃສ່ພັດທະນາແຫຼ່ງທ່ອງທ່ຽວວັດທະນະທຳທີ່ມີຊື່ສຽງຂອງແຕ່ລະແຂວງໃຫ້ມີຄວາມສວຍງາມສາມາດດຶງດູດນັກທ່ອງທ່ຽວ , ສາມາດເຂົ້າເຖິງ ແລະ ຢ້ຽມຊົມໄດ້.

2) ຂະຫຍາຍການທ່ອງທ່ຽວແບບອະນຸລັກປະຊາຊົນມີສ່ວນຮ່ວມ ແລະ ປະສານສົມທົບກັບຂະແໜງການ ທີ່ກ່ຽວຂ້ອງໃນ ການທ່ອງທ່ຽວຢ້ຽມຊົມ ທຳມະຊາດ, ການຮຽນຮູ້ວັດທະນະທຳຮີດຄອງປະເພນີ ແລະ ວິຖີຊີວິດຂອງຊົນເຜົ່າ ແນໃສ່ແກ້ໄຂ ຄວາມທຸກຍາກຂອງປະຊາຊົນ.

3) ເອົາໃຈໃສ່ຊຸກຍູ້ ການພັດທະນາ ໂຄງລ່າງພື້ນຖານເປັນຕົ້ນ:
ເສັ້ນທາງເຊື່ອມຕໍ່ລະຫວ່າງແຂວງ,ສະໜາມ ບິນ, ລະບົບ ໄຟຟ້າ, ນ້ຳປະປາ, ການສື່ສານ ໂທລະຄົມມະນາຄົມ ໃຫ້ສະດວກສະບາຍ ເພື່ອຕອບສະໜອງ ກັບຄວາມຮຽກຮ້ອງຕ້ອງການ, ການພັດທະນາການທ່ອງທ່ຽວ ໃນແຕ່ລະໄລຍະ.

4) ສົ່ງເສີມ ການທ່ອງທ່ຽວເປັນວົງຈອນລະຫວ່າງບັນດາແຂວງພາກເໜືອເຊັ່ນ :

☆ ຫົວພັນ- ຫລວງພະບາງ - ຊຽງຂວາງ- ຫລວງນ້ຳທາ- ອຸດົມໄຊ- ຫລວງພະບາງ,

☆ ໄຊຍະບູລີ - ຫລວງພະບາງ- ອຸດົມໄຊ,

☆ ບໍ່ແກ້ວ- ຫລວງນ້ຳທາ- ຫລວງພະບາງ,

☆ ຜົ້ງສາລີ - ຫົວພັນ - ຊຽງຂວາງ,

☆ ຜົ້ງສາລີ - ອຸດົມໄຊ - ຫຼວງພະບາງ.

ສົ່ງເສີມການທ່ອງທ່ຽວ ທາງບົກ, ທາງນ້ຳ ແລະ ທາງອາກາດກັບບັນດາແຂວງ, ບັນດາປະເທດ

ເພື່ອນບ້ານໃກ້ຄຽງເຊັ່ນ :

★ <u>ການທ່ອງທ່ຽວທາງບົກ</u>

☞ ກັບປະເທດຈີນ :

☆ ຫ້ວຍໂກນ- ເມືອງເງິນ- ປາກແບ່ງ(ແຂວງອຸດົມໄຊ ເຂົ້າໄປ ສປ ຈີນ

☆ ຊຽງຂອງ - ຫ້ວຍຊາຍ(ບໍ່ແກ້ວ) - ບໍ່ເຕັນ(ຫລວງນ້ຳທາ) ເຂົ້າໄປ ສປ ຈີນ

☆ ຊຽງຮຸ່ງ - ຫລວງນ້ຳທາ- ອຸດົມໄຊ- ຫລວງພະບາງ

☞ ກັບປະເທດໄທ :

- ຊຽງຮຸ່ງ- ຫລວງນ້ຳທາ- ບໍ່ແກ້ວ - ຊຽງຂອງປະເທດໄທ

☞ ກັບປະເທດຫວຽດນາມ :

- ຫລວງພະບາງ- ຫົວພັນ-ເມືອງເຫວ້- ດຽນບຽນຟູ

✶ ການທ່ອງທ່ຽວທາງນ້ຳ

☞ ກັບປະເທດຈີນ :

- ແມ່ນ້ຳຂອງ ສປ ຈີນ ຊຽງຮຸ່ງ - ສາມຫລ່ຽມທອງຄຳ - ຫ້ວຍຊາຍ - ປາກແບ່ງ - ຫລວງພະບາງ

☞ ກັບປະເທດໄທ :

✯ ຊຽງຂອງ- ຫ້ວຍຊາຍ - ປາກແບ່ງ- ຫລວງພະບາງ.

ສົ່ງເສີມການທ່ອງທ່ຽວທາງນ້ຳຕາມສາຂາ ແມ່ນ້ຳຂອງທີ່ມີເຮືອນໄຂ ແລະ ມີການນຳໃຊ້ຢູ່ໃນປັດຈຸ ບັນເປັນຕົ້ນ : ນ້ຳທາ,ນ້ຳອູ, ນ້ຳຄານ,......

✶ ທາງອາກາດ :

ນຳໃຊ້ ສະໜາມບິນຫລວງນ້ຳທາ- ອຸດົມໄຊ- ຫ້ວຍຊາຍ ເພື່ອເຊື່ອມຕໍ່ກັບ ຫລວງພະບາງ ແລະ ນະຄອນຫຼວງວຽງຈັນ.

5) ສົ່ງເສີມການ ລົງທຶນຂອງພາກເອກະຊົນເຂົ້າໃສ່ ການສ້າງພື້ນຖານສິ່ງຮອງຮັບ ທີ່ມີມາດຕະຖານ ເຊັ່ນ : ໂຮງແຮມ, ເຮືອນພັກ, ຣີສອດ,ຮ້ານອາຫານ,ພາຫະນະຂົນສົ່ງທາງບົກ,ທາງເຮືອ ແລະ ອື່ນໆ.

6) ສົ່ງເສີມການຈັດງານເທດສະການ ແລະ ງານບຸນປະເພນີຂອງທ້ອງຖິ່ນໃນບັນດາແຂວງພາກເໜືອເຊັ່ນ :

ບຸນກິນຈຽງ ຂອງເຜົ່າມົ້ງທີ່ແຂວງຊຽງຂວາງ, ບຸນກະເຣີ ຂອງເຜົ່າ ຂະມຸ ທີ່ຫລວງນ້ຳທາ ແລະ ຫລວງພະບາງ, ງານດອກງີ້ວບານທີ່ແຂວງບໍ່ແກ້ວ, ງານດອກຝ້າຍຈັນທີ່ແຂວງໄຊຍະບູລີ,ບຸນປີໃຫມ່ລາວທີ່ແຂວງ ຫລວງພະບາງ ແລະ ອື່ນໆ.

7) ຮ່ວມມືກັບຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງເພື່ອປົກປັກຮັກສາ ແຫຼ່ງທ່ອງທ່ຽວ ປະຫັວດສາດ ທົ່ງໄຫຫີນ ແລະ ພັດທະນາ ໃຫ້ເປັນແຫຼ່ງ ທ່ອງທ່ຽວຢ່າງຕັ້ງໜ້າໃນຂັ້ນຕໍ່ໄປ.

8) ຈັດຕັ້ງປະຕິບັດແຜນພັດທະນາ ເມືອງວຽງໄຊ ແຂວງ ຫົວພັນໃຫ້ກາຍເປັນເມືອງທ່ອງທ່ຽວທາງດ້ານປະຫວັດສາດ ແລະ ທຳມະຊາດຕາມແຜນແມ່ບົດທີ່ສຶກສາໄວ້ໃຫ້ປະກົດເປັນຈິງ.

✶ ພາກກາງ :

- ພາກກາງເປັນເຂດທົ່ງພຽງ ແລະ ພູພຽງ ມີສະຖານທີ່ທ່ອງທ່ຽວທຳມະຊາດ, ປະຫັວດສາດ ແລະ ວັດທະນະທຳ ທີ່ມີຊື່ສຽງຫຼາຍແຫ່ງ, ມີປ່າສະຫງວນແຫ່ງຊາດ 9 ແຫ່ງ ຊຶ່ງມີເນື້ອທີ່ຫຼາຍກ່ວາໝູ່ ແລະ ກວມເອົາເນື້ອທີ 44,78 % ຂອງເນື້ອທີ່ປ່າສະຫງວນໃນທົ່ວປະເທດ ປ່າສະຫງວນດັ່ງກ່າວມີເນື້ອທີ່ ແລະ ທີ່ຕັ້ງໃນແຂວງຕ່າງໆດັ່ງນີ້ :

- ປ່າສະຫງວນ ພູພະນັງ ແຂວງ ວຽງຈັນມີເນື້ອທີ່ 1.525 ກິໂລແມັດມົນທົນ
- ປ່າສະຫງວນ ພູເຂົາຄວາຍ ແຂວງ ບໍລິຄຳໄຊ ມີເນື້ອທີ 2.000 ກິໂລແມັດມົນທົນ
- ປ່າສະຫງວນ ນ້ຳກະດິງ ແຂວງ ບໍລິຄຳໄຊ ມີເນື້ອທີ 1.690 ກິໂລແມັດມົນທົນ

- ປ່າສະຫງວນພູຫີນປູນ ແຂວງ ຄຳມ່ວນ ມີເນື້ອທີ່ 1.690 ກິໂລແມັດມົນທົນ
- ປ່າສະຫງວນນາກາຍ-ນ້ຳເທີນ ແຂວງຄຳມ່ວນ ມີເນື້ອທີ່ 3.710 ກິໂລແມັດມົນທົນ
- ປ່າສະຫງວນຫີນນາມນໍ່ ແຂວງ ຄຳມ່ວນ ມີເນື້ອທີ 895 ກິໂລແມັດມົນທົນ
- ປ່າສະຫງວນ ພູຊ້າງແຮ່ ແຂວງສະຫວັນນະເຂດ ມີເນື້ອທີ່ 1.060 ກິໂລແມັດມົນທົນ
- ປ່າສະຫງວນດົງພູວຽງ ແຂວງສະຫວັນນະເຂດມີເນື້ອທີ່ 1.970 ກິໂລແມັດມົນທົນ
- ປ່າສະຫງວນ ເຊບັ້ງນວນ ແຂວງສະຫວັນນະເຂດ ມີເນື້ອທີ່ 1.260 ກິໂລແມັດມົນທົນ

ລວມປ່າສະຫງວນແຫ່ງຊາດໃນພາກກາງມີເນື້ອທີ່ ທັງໝົດ 15,800 ກິໂລແມັດມົນທົນ, ຊຶ່ງ ປ່າສະຫງວນເລົ່ານີ້ ຍັງຄົງຄວາມ ອຸດົມສົມບູນ ຂອງທຳມະຊາດ ແລະ ສາມາດປັບປຸງເປັນແຫຼ່ງທ່ອງທ່ຽວທຳມະຊາດ.

- ປັບປຸງ ບູລະນະ ແຫຼ່ງທ່ອງທ່ຽວທີ່ມີຢູ່ແລ້ວ ຢູ່ນະຄອນຫລວງວຽງຈັນ ໃຫ້ໄດ້ມາດຕະຖານແລະ ມີຄຸນນະພາບ ແລະ ພັດທະນາເພີ້ມເຕີມບາງແຫ່ງທີ່ມີເງື່ອນໄຂ.ຄົ້ນຄວ້າສ້າງເງື່ອນໄຂອຳນວຍຄວາມສະດວກໃນການເຂົ້າ-ອອກປະເທດ,
ການຂົນສົ່ງເຊື່ອມຕໍ່ກັບຕ່າງປະເທດໃຫ້ຫລາຍຂື້ນເພື່ອສົ່ງເສີມການທ່ອງທ່ຽວ
ປະເພດກອງປະຊຸມສຳມະນາ ແລະ ການວາງສະແດງສາກົນ (MICE).
- ສົ່ງເສີມ ແລະ ພັດທະນາແຫຼ່ງທ່ອງທ່ຽວຢູ່ເຂດວັງວຽງ, ອ່າງນ້ຳງື່ມ,ອ່າງນ້ຳເລີກ,ອ່າງນ້ຳມັງ ແລະ ພູເຂົາຄວາຍ ແຂວງ ວຽງຈັນໃຫ້ກາຍ ເປັນແຫຼ່ງທ່ອງທ່ຽວທຳມະຊາດ.
- ຊຸກຍູ້ ແລະ ວາງແຜນພັດທະນາແຫລ່ງທ່ອງທ່ຽວທຳມະຊາດເຂດອ່າງນ້ຳເທີນໃຫ້ກາຍ ເປັນແຫລ່ງທ່ອງທ່ຽວໃໝ່ ສຳລັບການພັກຜ່ອນຕາກອາກາດ.
- ສືບຕໍ່ຂະຫຍາຍ ແລະ ພັດທະນາການທ່ອງທ່ຽວແບບອະນຸລັກປະຊາຊົນມີສ່ວນຮ່ວມຢູ່ໃນບັນດາແຂວງພາກກາງໃຫ້ມີຈຳນວນເພີ້ມຂື້ນ ແລະ ທັງຮັບປະກັນດ້ານຄຸນະນພາບ, ຮັກສາສິ່ງແວດລ້ອມ ທຳມະຊາດໃຫ້ມີຄວາມຍືນຍົງ.
- ສົ່ງເສີມ ແລະ ພັດທະນາ ແຫຼ່ງທ່ອງທ່ຽວຕາມເສັ້ນທາງເລກ 8 ກໍຄືການທ່ອງທ່ຽວຢູ່ເຂດຫຼັກຊາວແຂວງບໍລິຄຳໄຊ ເຊື່ອມຕໍ່ໄປຍັງຫວຽດນາມ,.
- ພັດທະນາການທ່ອງທ່ຽວແຫຼ່ງທ່ອງທ່ຽວວັດທະນະທຳ ແລະ ທຳມະຊາດແຫ່ງ ອື່ນໆ ທີ່ແຂວງຄຳມ່ວນ, ເປັນຕົ້ນ ພະທາດສີໂຄຕະບອງ ແລະ ຜາ, ຖ້ຳ,ບໍ່ນ້ຳ ຕ່າງໆ ສົ່ງເສີມການທ່ອງທ່ຽວເຊື່ອມຕໍ່ 3 ປະເທດ ຫວຽດນາມ - ລາວ - ໄທ ຕາມ ເສັ້ນທາງ ເລກ 8 ,9 ແລະ ເລກທີ 12
- ແຂວງສະຫວັນນະເຂດ ຊຶ່ງເປັນຈຸດຜ່ານ ເຂົ້າ - ອອກ / ອອກ - ເຂົ້າ ຈາກໄທມາລາວ ໄປຫວຽດ ນາມ ແລະ ຈາກຫວຽດນາມ ມາລາວ ໄປໄທ ເປັນທ່າແຮງອັນສຳຄັນໃຫ້ແຂວງ ຊຶ່ງຈະຕ້ອງເອົາ ໃຈໃສ່ຈັດຕັ້ງການເດີນທາງລະຫວ່າງ ໄທ-ລາວ-ຫວຽດນາມ ໂດຍຜ່ານສະຫວັນນະເຂດ ໃຫ້ມີການ ຢຸດແວ່ຊົມ ແລະ ທ່ອງທ່ຽວເພື່ອສ້າງລາຍໄດ້ໃຫ້ແຂວງເປັນຢ່າງດີ, ສ້າງຜະລິດຕະພັນທ່ອງທ່ຽວປະຫວັດສາດເຊັ່ນ

ສະໜາມຮົບລາມເຊີນ 719, ແຫລ່ງຂຸດຄົ້ນກະດູກໄດໂນເສົາ, ສະຖານທີ່ຂຸດຄົ້ນບໍ່ຄໍາ ແລະ ທອງແດງ ແລະ ແຫ່ງອື່ນໆ.

- ສ້າງສູນຂໍ້ມູນຂ່າວສານການທ່ອງທ່ຽວຢູ່ ແຂວງສະຫວັນນະເຂດເພື່ອສັງລວມຂໍ້ມູນ ການທ່ອງທ່ຽວ ແລະ ແຫລ່ງທ່ອງທ່ຽວຂອງບັນດາແຂວງພາກກາງ.

✶ ພາກໃຕ້ :

ພາກໃຕ້ຂອງປະເທດເປັນເຂດທີ່ມີເນື້ອທີ່ເປັນທົ່ງພຽງ ແລະ ມີຄວາມສະດວກໃນການຄົມມະຄົມຖ້າທຽບໃສ່ ພາກກາງ ແລະ ພາກເໜືອພ້ອມກັນນັ້ນແຫຼ່ງທ່ອງທ່ຽວແມ່ນມີຄວາມຫຼາກຫຼາຍ, ມີແຫຼ່ງທ່ອງທ່ຽວຢູ່ໃກ້ຕົວເມືອງໂດຍສະເພາະແມ່ນແຂວງຈໍາປາສັກ. ມີປ່າສະຫງວນແຫ່ງຊາດແຫ່ງຊາດ 6 ແຫ່ງ ດັ່ງນີ້ :

- ປ່າສະຫງວນ ເຊເຊັດ ແຂວງ ແຂວງ ສາລະວັນ-ເຊກອງ ເນື້ອທີ່ 1.335 ກິໂລແມັດມົນທົນ
- ປ່າສະຫງວນ ພູຊຽງທອງ ແຂວງ ສາລະວັນ-ຈໍາປາສັກ ມີເນື້ອທີ 1.200 ກິໂລແມັດມົນທົນ
- ປ່າສະຫງວນ ດົງພູຊາວ ແຂວງຈໍາປາສັກ ມີເນື້ອທີ 1.100 ກິໂລແມັດມົນທົນ
- ປ່າສະຫງວນເຊປຽນ ແຂວງ ຈໍາປາສັກ-ອັດຕະປື ມີເນື້ອທີ່ 2.400 ກິໂລແມັດມົນທົນ
- ປ່າສະຫງວນ ດົງອໍາພັນ ແຂວງ ອັດຕະປື ມີເນື້ອທີ່ 1.975 ກິໂລແມັດມົນທົນ
- ປ່າສະຫງວນ ເຊບັ້ງນວນ ແຂວງສະຫວັນນະເຂດ ມີເນື້ອທີ່ 1.260 ກິໂລແມັດມົນທົນ

ເນື້ອທີ່ປ່າສະຫງວນແຫ່ງຊາດໃນພາກໃຕ້ ມີເນື້ອທີ່ທັງໝົດ 8.010 ກິໂລແມັດມົນທົນ

- ວາງແຜນການພັດທະນາການທ່ອງທ່ຽວວັດທະນະທໍາ, ທໍາມະຊາດ ແລະ ປະຫວັດສາດ ຕາມຄວາມເໝາະສົມ ໃນສະເພາະໜ້າ ແລະ ຍາວນານຢູ່ ແຂວງຈໍາປາສັກ ໂດຍສະເພາະ ໂຄງການພັດທະນາແຫຼ່ງທ່ອງທ່ຽວ ຢູ່ເຂດມະຫານະທີສີພັນດອນ ແລະ ພູພຽງບໍລະເວນ.
- ຈັດສັນ ແລະ ພັດທະນາແຫລ່ງທ່ອງທ່ຽວນໍ້າຕົກຕາດຄອນພະເພັງ-ລີຜີທີ່ມີສັນຍານາມວ່າໄຂ່ມຸກແຫ່ງແມ່ນໍ້າຂອງ ໃຫ້ກາຍເປັນແຫລ່ງ ທ່ອງທ່ຽວທໍາມະຊາດທີ່ຄຶບວົງຈອນ.
- ຊຸກຍູ້ ແລະ ສະໜັບສະໜູນການພັດທະນາພື້ນຖານໂຄງລ່າງເປັນຕົ້ນ : ຖະໜົນຫົນທາງ, ໄຟຟ້າ, ນໍ້າປະປາ ແລະ ລະບົບໂທລະຄົມມະນາຄົມເພື່ອຮອງຮັບນັກທ່ອງທ່ຽວຂອງບັນດາແຂວງພາກໃຕ້.
- ປັບປຸງ ແລະ ຍົກລະດັບດ່ານເຂົ້າ-ອອກປະເທດໃຫ້ສາມາດເປີດເປັນດ່ານສາກົນເພີ່ມຂຶ້ນໂດຍສະເພາະກັບ ສສ ຫວຽດນາມ ແລະ ກໍາປູເຈຍ ແນໃສ່ສົ່ງເສີມໂຄງການພັດທະນາການທ່ອງທ່ຽວ ສາມຫລ່ຽມພັດທະນາ ແລະ ໂຄງການພັດທະນາການທ່ອງທ່ຽວສາມຫລ່ຽມ ມໍລະກົດ.
- ສໍາຫຼວດ ແລະ ວາງແຜນພັດທະນາແຫຼ່ງທ່ອງທ່ຽວ ຢູ່ບັນດາ ແຂວງພາກໃຕ້, ວາງແຜນພັດທະນາເສັ້ນທາງທ່ອງທ່ຽວ ລະຫວ່າງ ແຂວງພາກໃຕ້ຕາມຄວາມເໝາະສົມເຊັ່ນ: ແຂວງຈໍາປາສັກ, ສາລະວັນ, ເຊກອງ ແລະ ອັດຕະປື ໃຫ້ເປັນວົງຈອນທ່ອງທ່ຽວໜຶ່ງທີ່ໜ້າສົນໃຈ, ພັດທະນາສວນສັດປ່າຊາຟາຣີຢູ່ແຂວງ ເຊກອງ-ອັດຕະປືເຊື່ອມຕໍ່ກັບຫວຽດນາມ ແລະ ກໍາປູເຈຍ.
- ວາງແຜນພັດທະນາ ແລະ ສົ່ງເສີມການທ່ອງທ່ຽວດ້ານກະສິກໍາຢູ່ເຂດພູພຽງບໍລະເວນ ທີ່ມີເງື່ອນໄຂເໝາະສົມ.

- ພັດທະນາການທ່ອງທ່ຽວ ໃຫ້ມີການເຊື່ອມຕໍ່ກັນ ລະຫວ່າງບັນດາແຂວງ ພາກໃຕ້ຂອງປະເທດເຮົາກັບ ປະເທດ ຫວຽດນາມ, ກຳປູເຈຍ ແລະ ໄທຕາມເສັ້ນທາງ 18 ເບ, 13ໃຕ້ ແລະ ທາງເລກ 15.
- ສ້າງສູນຂໍ້ມູນຂ່າວສານທ່ອງທ່ຽວຢູ່ແຂວງຈຳປາສັກ ເພື່ອສັງລວມຂໍ້ມູນການທ່ອງທ່ຽວ ແລະ ແຫລ່ງທ່ອງທ່ຽວຂອງ 4 ແຂວງພາກໃຕ້ ຈາກນັ້ນຈິ່ງຂະຫຍາຍໄປແຕ່ລະແຂວງ.

ໂຄງການທີ 4 : **ສ້າງແຜນແມ່ບົດພັດທະນາການທ່ອງທ່ຽວບັນດາແຂວງ**

ປະສານງານກັບຫ້ອງການທ່ອງທ່ຽວແຂວງ ແລະ ອຳນາດການປົກຄອງທ້ອງຖິ່ນເພື່ອສຳຫລວດວາງແຜນພັດທະນາການທ່ອງທ່ຽວແຕ່ລະແຂວງໃນຂອບເຂດທົ່ວປະເທດເປັນແຕ່ລະ ໄລຍະໃຫ້ສຳເລັດ ແລະ ຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ ແນໃສ່ພັດທະນາແຫລ່ງທ່ອງທ່ຽວ ໃຫ້ຫລາກຫລາຍເພື່ອດຶງດູດຄວາມສົນໃຈ ແລະ ຮອງຮັບກັບການເພີ່ມຂຶ້ນ ຂອງຈຳນວນ ນັກທ່ອງທ່ຽວ.

ໂຄງການທີ 5 : **ພັດທະນາການທ່ອງທ່ຽວແບບອະນຸລັກປະຊາຊົນມີສ່ວນຮ່ວມ**

ບົນພື້ນຖານຜົນສຳເລັດຂອງການພັດທະນາການທ່ອງທ່ຽວແບບອະນຸລັກປະຊາຊົນມີສ່ວນຮ່ວມນ້ຳ ຫາ ແຂວງຫລວງນ້ຳທາ ແລະ ຢູ່ບັນດາແຂວງທີ່ກຳລັງຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ ແລະ ສົມທົບກັບທ່າແຮງຂອງຊັບພະຍາກອນທຳມະຊາດທີ່ມີຄວາມອຸດົມສົມບູນທາງດ້ານສິ່ງແວດລ້ອມ ແລະ ຊີວະນາງພັນ ໂດຍສະເພາະໃນເຂດປ່າສະຫງວນແຫ່ງຊາດຈຳນວນ 20 ແຫ່ງ ແລະ ປ່າສະຫງວນຂອງແຂວງ ແລະ ເມືອງຈຳນວນຫລວງຫລາຍໃນສະເພາະໜ້າ ແລະ ຍາວນານອົງການທ່ອງທ່ຽວແຫ່ງຊາດຈະ ຕ້ອງປະສານສົມທົບກັບກະຊວງກະສິກຳ-ປ່າໄມ້, ອົງການວິທະຍາສາດເຕັກໂນໂລຊີ ແລະ ສິ່ງແວດລ້ອມ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ, ວາງແຜນພັດທະນາການທ່ອງທ່ຽວແບບອະນຸລັກປະຊາຊົນ ມີສ່ວນຮ່ວມໃນເຂດປ່າສະຫງວນດັ່ງກ່າວຢ່າງຕັ້ງໜ້າເພື່ອເຮັດໃຫ້ເສດຖະກິດຂອງທ້ອງຖິ່ນ ແລະ ຂອງ ປະເທດໄດ້ເຕີບໃຫຍ່ຂະຫຍາຍຕົວ ປະກອບສ່ວນເຂົ້າໃນການຫລຸດຜ່ອນຄວາມທຸກຍາກຂອງປະຊາຊົນ ບັນດາເຜົ່າ ແລະ ສະໜັບສະໜູນການອະນຸລັກສິ່ງແວດລ້ອມທຳມະຊາດ ແລະ ປົກປັກຮັກສາຮີດຄອງ ປະເພນີອັນດີງາມຂອງທ້ອງຖິ່ນ.

ໂຄງການທີ 6 : **ແຜນງານນຳໃຊ້ ແລະ ສົ່ງເສີມຜະລິດຕະພັນທ່ອງທ່ຽວພາຍໃນ**

ເພື່ອບໍ່ໃຫ້ລາຍໄດ້ຈາກການທ່ອງທ່ຽວຮົ່ວໄຫລອອກນອກປະເທດສິ່ງທີ່ສຳຄັນຕົ້ນຕໍທີ່ສຸດ ແມ່ນການ

ສົ່ງເສີມໃຫ້ຫົວໜ່ວຍທຸລະກິດໃນຂະແໜງການທ່ອງທ່ຽວເຊັ່ນ :ໂຮງແຮມ,ເຮືອຍພັກແລະຮ້ານອາຫານນຳໃຊ້ຜະລິດຕະພັນພາຍໃນຕົວຢ່າງ : ຜະລິດຕະພັນກະສິກະກຳ ເພື່ອປຸງແຕ່ງອາຫານ,ອຸປະກອນການຕົບແຕ່ງ ໃນໂຮງແຮມ,ເຮືອນພັກ,ຮ້ານອາຫານເລົ່ານີ້ເປັນຕົ້ນ. ເພື່ອບັນລຸຈຸດປະສົງດັ່ງກ່າວນັ້ນຕ້ອງໄດ້ສົມ

ທີ່ບກັບຂະແໜງການກະສິກຳ,ອຸດສາຫະກຳ,ການຄ້າປຸກລະດົມໃຫ້ພາກທຸລະກິດ
ທີ່ຜະລິດສິນຄ້າດັ່ງກ່າວ
ປັບປຸງມາດຖານ ແລະ ຄຸນນະພາບຂອງສິນຄ້າພາຍໃນ,ສົ່ງເສີມໃຫ້ຫົວໜ່ວຍທຸລະກິດໃນຂະແໜງການທ່ອງທ່ຽວ ນຳໃຊ້ຜະລິດຕະພັນພາຍໃນໃຫ້ຫຼາຍ ເພື່ອເປັນການສຸກຍູ້,ສົ່ງເສີມ ເສດຖະກິດ ຂອງ ທ້ອງຖິ່ນ ,ຮັກສາບໍ່ໃຫ້ ເງິນຕາ ຮົ່ວໄຫຼ ອອກນອກ ປະເທດ ໂດຍການຕັ້ງຄຳຂັວນ : ລາວເຮັດ ລາວໃຊ້ ລາວໄດ້ ລາວຈະເລີນ.

<u>ໂຄງການທີ່ 7</u> : **ແຜນງານອະນຸລັກ ແລະ ຮັກສາສະພາບແວດລ້ອມໃນອຸດສາຫະກຳການທ່ອງທ່ຽວ.**

ອົງການທ່ອງທ່ຽວແຫ່ງຊາດປະສານສົມທົບກັບອົງການວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດ ລ້ອມ, ກະຊວງຄົມມະນາຄົມ-ຂົນສົ່ງໄປສະນີ ແລະ ກໍ່ສ້າງ ( ອົງການພັດທະນາບໍລິຫານຕົວເມືອງ ) ແລະ ພະແນກການທ່ອງທ່ຽວ ແຕ່ລະ ແຂວງ ໃນທົ່ວປະເທດເພື່ອວາງແຜນການກຳຈັດສິ່ງເສດເຫຼືອ ແລະການ ບຳບັດນ້ຳເສຍຈາກໂຮງແຮມ, ເຮືອນພັກ ແລະ ຮ້ານອາຫານ.

ວາງແຜນເພື່ອຈັດສັນສະຖານທີ່ຖິ້ມຂີ້ເຫຍື້ອ,ຫ້ອງນ້ຳສາທາລະນະຊົນ,
ລະບົບບຳບັດນ້ຳເສຍໃນສະຖານ
ທີ່ທ່ອງທ່ຽວ.

<u>ໂຄງການທີ່ 8</u> : **ເກັບກຳສະຖິຕິການທ່ອງທ່ຽວ**

ອົງການທ່ອງທ່ຽວແຫ່ງຊາດໂດຍປະສານສົມທົບກັບພະແນກການທ່ອງທ່ຽວແຂວງ,ເຈົ້າໜ້າທີ່ຕຳ ຫຼວດ ກວດຄົນເຂົ້າ-ອອກເມືອງ (ຕມ) ແລະ ສູນສະຖິຕິແຫ່ງຊາດ, ສຳຫລວດເກັບກຳສະຖິຕິນັກທ່ອງທ່ຽວ
ພ້ອມທັງວິເຄາະຂໍ້ມູນລະອຽດດ້ານຕ່າງໆເປັນຕົ້ນແຫລ່ງທີ່ມາທີ່ມາຂອງນັກທ່ອງທ່ຽວ,ສັນຊາດ,ຄວາມ ສົນໃຈ ໃນການທ່ຽວຊົມ, ການໃຊ້ຈ່າຍຕ່າງໆ, ໄລຍະການພັກແຮມ ແລະ ອື່ນໆ.

ອົງການທ່ອງທ່ຽວແຫ່ງຊາດ ໂດຍປະສານສົມທົບກັບ ພະແນກການທ່ອງທ່ຽວແຂວງເພື່ອສຳຫລວດ ເກັບກຳຂໍ້ມູນສະຖິຕິໂຮງແຮມ, ເຮືອນພັກ, ຣີສອດ, ຮ້ານອາຫານ ແລະ ຮ້ານບັນເທີງ.

ອົງການທ່ອງທ່ຽວແຫ່ງຊາດໂດຍປະສານສົມທົບກັບສູນສະຖິຕິແຫ່ງຊາດ ແລະ ທະນາຄານແຫ່ງ ລັດ ໃນການຈັດຕັ້ງລະບົບວິເຄາະບັນຊີ ລາຍຮັບປີ່ນອ້ອມບັນຊີລາຍຮັບແຫ່ງຊາດ ( Tourism Sattlite Account ) ຈາກຂະແໜງການທ່ອງທ່ຽວ ເພື່ອສຶກສາຂໍ້ມູນລາຍຮັບຈາກການທ່ອງທ່ຽວ ຢູ່ໃນຜະລິດ ຕະພັນມູນລວມແຫ່ງຊາດ(GDP).

4.3.3 <u>ແຜນງານການໂຄສະນາ ແລະ ສົ່ງເສີມການທ່ອງທ່ຽວ</u> :

ທິດທາງລວມ ສໍາລັບວຽກງານໂຄສະນາ ແລະ ສົ່ງເສີມການທ່ອງທ່ຽວ ໃນໄລຍະ ປີ 2006-2020 ແມ່ນແນໃສ່ຮັກສາລະດັບການຂະຫຍາຍຕົວຂອງຈໍານວນນັກທ່ອງທ່ຽວສາກົນ ດ້ວຍອັດຕາເພີ້ມຂຶ້ນສະເລັ່ຍ ບໍ່ໃຫ້ຫຼຸດ 20% ຕໍ່ປີ, ພ້ອມກັນນັ້ນ ກໍ່ຊຸກຍູ້ສົ່ງເສີມການທ່ອງທ່ຽວພາຍໃນ (ຄົນລາວທ່ອງທ່ຽວຢູ່ລາວ).

ເປົ້າໝາຍຕະຫຼາດນັກທ່ອງທ່ຽວ ໃນໄລຍະຕໍ່ໜ້ານີ້ ຍັງແມ່ນຕະຫຼາດທ່ອງທ່ຽວຂອງພາກພື້ນຄື : ນັກທ່ອງທ່ຽວຈາກບັນດາປະເທດໃກ້ຄຽງ ແລະ ຈາກບັນດາປະເທດສະມາຊິກອາຊຽນ. ສ່ວນນັກທ່ອງທ່ຽວສາກົນຈາກທາງໄກເຊັ່ນ ຈາກທະວີບເອີຣົບ: ຝຣັ່ງ, ອັງກິດ, ເຢຍລະມັນ, ຈາກທະວີບອາເມລິກາເໜືອ : ສະຫະລັດອາເມລິກາ, ການາດາ; ຂົງເຂດປາຊີຟິກ : ຍີ່ປຸ່ນ, ເກົາຫຼີ, ອົດສະຕາລີ, ນິວຊີແລນ, ໄຕ້ຫວັນ .. ກໍ່ຕ້ອງໄດ້ອອກແຮງດຶງດູດໃຫ້ນັບມື້ນັບເພີ້ມຂຶ້ນ ແລະ ໃຫ້ກວມເອົາອັດຕາສ່ວນສູງຂຶ້ນເລື້ອຍໆ.

ຄາດໝາຍສູ້ຊົນ ທີ່ຈະຕ້ອງໃຫ້ບັນລຸ ມີດັ່ງນີ້ :

| ປີ | ຈໍານວນນັກທ່ອງທ່ຽວເຂົ້າ ສປປ ລາວ | ລາຍຮັບຈາກການທ່ອງທ່ຽວ (ໂດລາ) | ໄລຍະພັກແຮມສະເລັ່ຍຂອງນັກທ່ອງທ່ຽວສາກົນ |
|---|---|---|---|
| 2010 | 1.600.000 | 220.000.000 | 8 ມື້ |
| 2015 | 2.200.000 | 320.000.000 | 10 ມື້ |
| 2020 | 3.000.000 | 370.000.000 | 11 ມື້ |

ດ້ວຍເຫດນັ້ນ, ວຽກງານການໂຄສະນາ ແລະ ສົ່ງເສີມການທ່ອງທ່ຽວ ຕ້ອງໄດ້ບັນລຸວຽກງານຕົ້ນຕໍ ດັ່ງຕໍ່ໄປນີ້.

- ເອົາໃຈໃສ່ຜະລິດສິ່ງພີມ ແລະ ອຸປະກອນໂຄສະນາການທ່ອງທ່ຽວລາວໃຫ້ມີເນື້ອໃນດີ ແລະ ພຽງພໍ.
- ດໍາເນີນການໂຄສະນາ ດ້ວຍຫຼາຍຮູບແບບເຊັ່ນ : ເຂົ້າຮ່ວມງານວາງສະແດງການທ່ອງທ່ຽວຂອງ ພາກພື້ນ ແລະ ຂອງໂລກ ໂດຍເລັ່ງໃສ່ຕະຫຼາດເປົ້າໝາຍຕົ້ນຕໍ, ໂຄສະນາຜ່ານສື່ມວນຊົນທັງພາຍໃນ ແລະ ຕ່າງ ປະເທດ, ໂຄສະນາ ທາງອິນເຕີເນັດ, ສະໜອງຂໍ້ມູນຂ່າວສານກັບທີ່ ດ້ວຍການຂະຫຍາຍຫ້ອງຂໍ້ມູນຂ່າວ ສານ ການທ່ອງທ່ຽວ ໃຫ້ ກວ້າງຂວາງໃນຂອບເຂດທົ່ວປະເທດ, ຈັດຕັ້ງການຢ້ຽມຢາມບັນດາແຫຼ່ງທ່ອງ ທ່ຽວ (Fam Trip) ໃຫ້ແກ່ສື່ມວນ ຊົນດ້ານການທ່ອງທ່ຽວ ແລະ ບໍລິສັດທ່ອງທ່ຽວຕ່າງປະເທດ, ຈັດຕັ້ງ ເຄື່ອນໄຫວ ໂຄສະນາການທ່ອງທ່ຽວ (Road Show) , ຈັດຄາຣາວານເພື່ອເປີດເສັ້ນທາງ ແລະ ແຫຼ່ງທ່ອງ ທ່ຽວໃໝ່, ສົ່ງເສີມງານບຸນປະເພນີ, ງານເທດສະການເພື່ອການທ່ອງທ່ຽວ, ເປີດບັ້ນໂຄສະນາປີທ່ອງທ່ຽວ (Tourism Campaign), ຂະຫຍາຍ ຜູ້ຕາງໜ້າ

ອົງການທ່ອງ ທ່ຽວແຫ່ງຊາດ ປະຈໍາຢູ່ຕ່າງປະເທດ ແລະ ສະໜອງຂໍ້ມູນຂ່າວສານການທ່ອງທ່ຽວ ໃຫ້ແກ່ຜູ້ທີ່ສົນໃຈ ໃນຕ່າງ ປະເທດ.

- ສຶກສາວິໄຈການຕະຫຼາດທ່ອງທ່ຽວ ເພື່ອຍາດແຍ່ງ ແລະ ດຶງດູດນັກທ່ອງທ່ຽວຢ່າງສະໝໍ່າສະເໝີ ເພື່ອປະຕິບັດ ບັນດາວຽກງານຕົ້ນຕໍ ທີ່ໄດ້ກ່າວມາຂ້າງເທິງນີ້ ໃຫ້ປະສົບຜົນສໍາເລັດ ຕາມລະດັບຄາດໝາຍ ນັ້ນ ຈະຕ້ອງສຸມ ໃສ່ປະຕິບັດ ບັນດາໂຄງການ ດັ່ງຕໍ່ໄປນີ້ :

<u>ໂຄງການທີ</u> 1 : **ຜະລິດສິ່ງພິມ ແລະ ອຸປະກອນໂຄສະນາການທ່ອງທ່ຽວ**

ໂຄງການນີ້ ເປັນໂຄງການທີ່ມີຄວາມສໍາຄັນຫລາຍ ຍ້ອນວ່າສິ່ງພິມ ແລະ ອຸປະກອນການໂຄສະນາ ແມ່ນພາຫະນະ, ແມ່ນເຄື່ອງມື ສໍາລັບການໂຄສະນາເຜີຍແຜ່ ໃຫ້ນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ ໄດ້ຮູ້ຈັກ ແຫລ່ງທ່ອງທ່ຽວ ແລະ ຜະລິດຕະພັນການທ່ອງທ່ຽວຂອງປະເທດເຮົາ ໃຫ້ນັບມື້ນັບຫລາຍ.

ດັ່ງນັ້ນ, ໃນຕໍ່ໜ້ານີ້ ຕ້ອງປະຕິບັດວຽກງານດັ່ງນີ້ :

- ສ້າງຕັ້ງໜ່ວຍຂ່າວຂອງອທຊ ທີ່ເຮັດໜ້າທີ່ຮັບຜິດຊອບ ຜະລິດອຸປະກອນໂຄສະນາ, ຈັດພິມສິ່ງ ໂຄສະນາ, ຈັດພິມໜັງສືພິມທ່ອງທ່ຽວ, ປ້າຍໂຄສະນາການທ່ອງທ່ຽວ, ກະດານຂ່າວສານການທ່ອງທ່ຽວ, ຕິດຕາມ ກວດກາທຸກການໂຄສະນາການທ່ອງທ່ຽວລາວ ທັງຢູ່ພາຍໃນ ແລະ ຕ່າງປະເທດ.
- ສ້າງຄູ່ມືແນະນໍາ ການຜະລິດສິ່ງພິມ ແລະ ອຸປະກອນການໂຄສະນາ ເພື່ອໃຫ້ບັນດາຫ້ອງການ ທ່ອງທ່ຽວ ໄດ້ເປັນບ່ອນອີງ ໃນການຈັດພິມ ແລະ ຜະລິດສິ່ງໂຄສະນາ ທີ່ເປັນເອກະພາບ, ມີມາດຕະຖານ ແລະ ເຄື່ອງໝາຍ ຍີ່ຫໍ້ອັນດຽວກັນ (Brand).
- ຊຸກຍູ້ບັນດາຫົວໜ່ວຍທຸລະກິດອຸດສາຫະກໍາການທ່ອງທ່ຽວລາວ ຜະລິດສິ່ງພິມໂຄສະນາຂອງຕົນເພື່ອ ປະກອບສ່ວນໃນການໂຄສະນາການທ່ອງທ່ຽວລາວໃຫ້ກວ້າງຂວາງ.
- ສືບຕໍ່ຮ່ວມມືກັບບຸກຄົນ, ພາກສ່ວນ ແລະ ບໍລິສັດ ຢູ່ພາຍໃນ ແລະ ຕ່າງປະເທດ ໃນການຈັດພິມສິ່ງ ໂຄສະນາການທ່ອງທ່ຽວລາວ.

<u>ໂຄງການທີ 2</u> : **ຂະຫຍາຍ ແລະ ປັບປຸງບັນດາຫ້ອງຂໍ້ມູນຂ່າວສານການທ່ອງທ່ຽວ**

ການສະໜອງຂໍ້ມູນຂ່າວສານຢູ່ກັບທີ່ໃຫ້ແກ່ນັກທ່ອງທ່ຽວ ທີ່ເດີນທາງມາຢ້ຽມຢາມ ແລະ ທ່ຽວ ຊົມແຕ່ ລະທ້ອງຖິ່ນ ແມ່ນເປັນວຽກງານທີ່ຕ້ອງໃຫ້ມີຢ່າງກວ້າງຂວາງໃນຂອບເຂດທົ່ວປະເທດ. ທັງນີ້ ເພື່ອ ໃຫ້ນັກທ່ອງທ່ຽວ ໄດ້ຮູ້ຈັກບັນດາແຫລ່ງທ່ອງທ່ຽວຫລາຍເທົ່າທີ່ຫລາຍໄດ້ ແນໃສ່ເພື່ອດຶງດູດໃຫ້ເຂົາເຈົ້າ ໄດ້ແກ່ ຍາວການທ່ອງ ທ່ຽວຢູ່ ປະເທດເຮົາ ຫລາຍວັນຂຶ້ນໄປເລື້ອຍໆ. ດັ່ງນັ້ນ ຈະໄດ້ສຸມໃສ່ປະຕິບັດ ວຽກ ງານ ດັ່ງນີ້ :

- ສືບຕໍ່ປັບປຸງສູນຂໍ້ມູນຂ່າວສານການທ່ອງທ່ຽວ ຢູ່ອົງການທ່ອງທ່ຽວແຫ່ງຊາດ ໃຫ້ນັບມື້ມີເນື້ອໃນ ແລະ ການບໍລິການທີ່ດີຂຶ້ນໄປເລື້ອຍໆ.

- ຊ່ວຍບັນດາຫ້ອງການທ່ອງທ່ຽວຂອງແຂວງ / ນະຄອນຫລວງ ປັບປຸງຫ້ອງຂໍ້ມູນຂ່າວສານຂອງຕົນ ພ້ອມທັງຊຸກຍູ້ໃຫ້ແຂວງທີ່ ຍັງບໍ່ທັນມີນັ້ນ ດຳເນີນການສ້າງຫ້ອງຂໍ້ມູນຂ່າວສານການທ່ອງທ່ຽວຂອງແຂວງແລະ ເຄື່ອນໄຫວວຽກງານໂຄສະນາ, ສົ່ງເສີມການຕະຫລາດທ່ອງທ່ຽວ ຂອງແຂວງຕົນຢ່າງແຂງ ແຮງກວ່າ ເກົ່າ.

<u>ໂຄງການທີ 3</u> : **ໂຄສະນາການທ່ອງທ່ຽວລາວ ໂດຍຜ່ານສື່ມວນຊົນ ແລະ ກິດຈະກຳການຕະຫລາດທ່ອງທ່ຽວ.**

ການໂຄສະນາການທ່ອງທ່ຽວລາວ ໂດຍຜ່ານສື່ມວນຊົນ ຢູ່ພາຍໃນ ແລະ ຕ່າງປະເທດ ແລະ ໂດຍ ຜ່ານ ກິດຈະກຳຕ່າງໆ ເປັນຮູບແບບການໂຄສະນາທີ່ມີການນຳໃຊ້ຢ່າງກວ້າງຂວາງ ຢູ່ໃນບັນດາປະເທດ ທີ່ພັດທະນາ ການທ່ອງທ່ຽວ ເພາະວ່າມັນເປັນການໂຄສະນາທີ່ດຳເນີນການໄດ້ທຸກເວລາ ແລະ ບໍ່ຈຳກັດ ຂອບເຂດ. ການ ໂຄສະນາ ດັ່ງກ່າວ ໂດຍທົ່ວໄປໄດ້ເລັ່ງໃສ່ 2 ເປົ້າໝາຍຄື : ນັກທ່ອງທ່ຽວພາຍໃນ ແລະ ນັກທ່ອງທ່ຽວຕ່າງ ປະເທດ.

ໜ້າວຽກຕົວຈິງທີ່ຈະຕ້ອງປະຕິບັດ ມີຄືດັ່ງນີ້ :

- ຮ່ວມມືກັບ ວາລະສານ, ໜັງສືພິມ,ໂທລະພາບ ແລະ ວິທະຍຸແຫ່ງຊາດ ເພື່ອກະຈາຍຂ່າວກ່ຽວກັບການເຄື່ອນໄຫວຂອງຂະແໜງການທ່ອງທ່ຽວ ແລະ ອອກບົດສາລະຄະດີກ່ຽວກັບການທ່ອງທ່ຽວລາວ ເພື່ອໂຄສະນາໃຫ້ຄົນລາວທ່ອງທ່ຽວຢູ່ໃນປະເທດເຮົາເອງ ອັນເປັນການຮັກສາເງິນຕາບໍ່ໃຫ້ຮົ່ວໄຫລ.
- ລົງໂຄສະນາ ທາງໜັງສືພິມ, ວາລະສານ ແລະ ໂທລະພາບ ຂອງຕ່າງປະເທດ ຕາມຄວາມອາດສາມາດຕົວຈິງ ເພື່ອດຶງດູດນັກທ່ອງທ່ຽວຕ່າງປະເທດ.
- ເຊີນບໍລິສັດທ່ອງທ່ຽວຕ່າງປະເທດ ແລະ ສື່ມວນດ້ານການທ່ອງທ່ຽວ ຈາກປະເທດທີ່ເປັນຕະຫລາດເປົ້າໝາຍ ມາຢ້ຽມຢາມ ແລະ ທ່ຽວຊົມແຫລ່ງທ່ອງທ່ຽວລາວ (Fam Trip) ເພື່ອຮ່ວມມືໃນການໂຄສະນາ ແລະ ດຶງດູດນັກທ່ອງທ່ຽວຈາກປະເທດເຫລົ່ານັ້ນ ໃຫ້ນັບມື້ນັບຫລາຍ.
- ຮ່ວມມືກັບພາກທຸລະກິດອຸດສາຫະກຳການທ່ອງທ່ຽວ ພາຍໃນ ແລະ ຕ່າງປະເທດ ຈັດຂະບວນຄາຣາວານລົດ ເພື່ອໂຄສະນາເຜີຍແຜ່ເສັ້ນທາງທ່ອງທ່ຽວ ແລະ ແຫລ່ງທ່ອງທ່ຽວໃໝ່.
- ຈັດຕັ້ງເຄື່ອນໄຫວໂຄສະນາການທ່ອງທ່ຽວ (Road Show) ດ້ວຍການນຳເອົາສິລະປະດົນຕີພື້ນເມືອງໄປສະແດງ ແລະ ການຈັດກອງປະຊຸມພົບປະຂອງບັນດານັກທຸລະກິດການທ່ອງທ່ຽວຢູ່ໃນບັນດາປະ ເທດ ທີ່ເປັນຕະຫລາດນັກທ່ອງທ່ຽວເປົ້າໝາຍ ເປັນຕົ້ນ : ເອີຣົບຕາເວັນຕົກ, ຍີ່ປຸ່ນ, ສ.ເກົາຫລີ, ອົດສະຕຣາລີ, ນິວຊີແລນ, ເອີຣົບເໜືອ, ທະວີບອາເມຣິກາເໜືອ.

<u>ໂຄງການທີ 4</u> : **ເຂົ້າຮ່ວມງານວາງສະແດງການທ່ອງທ່ຽວຂອງສາກົນ**

ມາເຖິງປະຈຸບັນນີ້, ງານວາງສະແດງການທ່ອງທ່ຽວຂອງພາກພື້ນ ແລະ ຂອງໂລກ ໄດ້ກາຍເປັນ ເວທີ ແລະ ສະຖານທີ່ ທີ່ບັນດານັກທຸລະກິດໃນຂະແໜງການທ່ອງທ່ຽວນັດພົບ ເພື່ອປຶກສາຫາລື ແລະ ແລກ ປ່ຽນການຊື້-ຂາຍ ການບໍລິການການທ່ອງທ່ຽວ ນຳກັນຢ່າງກວ້າງຂວາງ.

ສໍາລັບປະເທດລາວເຮົາ ກໍຄວນ ທີ່ຈະໄດ້ເຂົ້າຮ່ວມງານວາງສະແດງການທ່ອງທ່ຽວໃຫຍ່ໆຢ່າງຕໍ່ເນື່ອງ ເຊັ່ນ :

- ງານວາງສະແດງການທ່ອງທ່ຽວໂລກ( ITB) ທີ່ ແບກແລງ, ປະເທດເຢຍລະມັນ;
- ງານວາງສະແດງ ການທ່ອງທ່ຽວໂລກ (SMT) ທີ່ ປາຣີ, ປະເທດຝຣັ່ງ;
- ງານວາງສະແດງການທ່ອງທ່ຽວໂລກ (WTM) ທີ່ ລອນດອນ, ປະເທດອັງກິດ;
- ງານວາງສະແດງການທ່ອງທ່ຽວອາຊຽນ (TRAVEX) ທີ່ບັນດາປະເທດສະມາຊິກອາຊຽນ ຜັດປ່ຽນກັນເປັນເຈົ້າພາບ;
- ງານວາງສະແດງການທ່ອງທ່ຽວສາກົນ (CITM) ທີ່ ສປ ຈີນ;
- ງານວາງສະແດງການທ່ອງທ່ຽວ (TTM) ທີ່ ບາງກອກ, ປະເທດໄທ;
- ງານວາງສະແດງການທ່ອງທ່ຽວ (JATA) ທີ່ ປະເທດຍີ່ປຸ່ນ;
- ງານວາງສະແດງການທ່ອງທ່ຽວ (ASTA) ທີ່ ສະຫະລັດອາເມຣິກາ / ການາດາ;

ໂດຍອີງຕາມການຂາດເຂີນທາງດ້ານທຶນຮອນ, ໃນໄລຍະເບື້ອງຕົ້ນຂອງການປະຕິບັດຍຸດທະສາດ ສະບັບນີ້ ອາດຈະນໍາໃຊ້ ບັນດາສະຖານທູດ, ສະຖານກົງສູນ ສປປ ລາວ ໃນປະເທດຕ່າງໆເຫລົ່ານັ້ນ ໃຫ້ເຂົ້າ ຮ່ວມ ງານວາງສະແດງການທ່ອງທ່ຽວ ແທນອົງການທ່ອງທ່ຽວແຫ່ງຊາດ. ພ້ອມກັນນັ້ນ ກໍເອົາໃຈໃສ່ເລືອກເຟັ້ນ ແລະ ແຕ່ງຕັ້ງຄົນຕ່າງປະເທດເປັນຜູ້ຕາງໜ້າຂອງອົງການທ່ອງທ່ຽວແຫ່ງຊາດ ຢູ່ໃນບັນດາປະເທດ ເຫລົ່ານີ້ ເພື່ອເຮັດໜ້າທີ່ດັ່ງກ່າວນີ້ ໃນນາມຂະແໜງການທ່ອງທ່ຽວລາວ.

ສໍາລັບໄລຍະຍາວນັ້ນ, ຈະຕ້ອງໄດ້ສ້າງຕັ້ງຫ້ອງການຜູ້ຕາງໜ້າຂອງ ອົງການທ່ອງທ່ຽວແຫ່ງຊາດ ຢູ່ຕາມບັນດາປະເທດ ທີ່ເປັນຕະຫລາດນັກທ່ອງທ່ຽວເປົ້າໝາຍຂອງລາວເຮົາເປັນຕົ້ນ: ຢູ່ ປະເທດ ຝຣັ່ງ, ອັງກິດ, ເຢຍລະມັນ, ຍີ່ປຸ່ນ, ຈີນ, ໄທ....

<u>ໂຄງການທີ 5</u> : **ສົ່ງເສີມກິດຈະກໍາ ເພື່ອການທ່ອງທ່ຽວ**

ປະຊາຊົນລາວບັນດາເຜົ່າພວກເຮົາ ມີງານບຸນປະເພນີອັນຈົບງາມ ແລະ ມ່ວນຊື່ນຢ່າງຫລວງຫລາຍ ຊຶ່ງໄດ້ ກາຍ ເປັນທ່າແຮງ ສໍາລັບສົ່ງເສີມໃຫ້ເປັນງານບຸນ ເພື່ອການທ່ອງທ່ຽວ.

ດັ່ງນັ້ນ, ໃນຕໍ່ໜ້ານີ້ ຈະຕ້ອງເອົາ ໃຈໃສ່ເລືອກເຟັ້ນແລະ ກໍານົດງານບຸນ, ງານເທດສະການ ແລະ ກິດຈະ ກໍາຈໍານວນໜຶ່ງ ເພື່ອສົ່ງເສີມການ ທ່ອງທ່ຽວ ເປັນຕົ້ນ : ບຸນປີໃໝ່ລາວທີ່ຫລວງພະບາງ, ທີ່ຈໍາປາສັກ, ທີ່ວັງວຽງ, ທີ່ທ່າແຂກ; ບຸນພະທາດ ຫລວງ, ບຸນວັດພູຈໍາປາສັກ, ບຸນພະທາດອິງຮັງ, ບຸນພະທາດສີໂຄດຕະບອງ, ບຸນບັ້ງໄຟ, ບຸນຊ່ວງເຮືອ ແລະ ບຸນຂອງບັນດາເຜົ່າຕ່າງໆ.

ເພື່ອເຮັດໃຫ້ແຜນງານນີ້ປະກົດຜົນເປັນຈິງ, ຈະຕ້ອງໄດ້ປະຕິບັດວຽກງານດັ່ງລຸ່ມນີ້ :

- ອົງການທ່ອງທ່ຽວແຫ່ງຊາດ ເປັນໃຈກາງເພື່ອຈັດຕັ້ງກອງປະຊຸມຮ່ວມກັບ ຂະແໜງວັດທະນະທໍາ ແລະ

ທ້ອງຖິ່ນທີ່ກ່ຽວຂ້ອງດຳເນີນການປຶກສາຫາລືແລະກຳນົດປະຕິທິນງານບຸນປະເພນີສົ່ງເສີມການທ່ອງທ່ຽວ.

- ບັນດາບໍລິສັດທ່ອງທ່ຽວ ຕ້ອງນຳເອົາບັນດາງານບຸນດັ່ງກ່າວ ເຂົ້າໃນລາຍການທ່ອງທ່ຽວຂອງຕົນ.

ນອກຈາກນັ້ນ ກໍຈັດຕັ້ງການເປີດບັ້ນໂຄສະນາປີທ່ອງທ່ຽວ(Tourism Campaign),ຈັດຕັ້ງງານເທດສະການ ແລະ ສ້າງກິດຈະກຳ ສົ່ງເສີມການທ່ອງທ່ຽວເຊັ່ນ : ງານເທດສະການອາຫານພື້ນເມືອງຂອງ ແຕ່ ລະທ້ອງຖິ່ນ, ງານເທດສະການໝາກກ້ຽງປາກຊັນ / ໝາກກ້ຽງນ້ຳບາກ, ໝາກຖົ່ວລຽນປາກ ຊ່ອງ, ງານເທດສະການ ກາເຟ-ຊາປາກຊ່ອງ, ງານເທດສະການກຸ້ງເມືອງງອຍ, ງານຟ້ອນລາຍງ້າວ ເມືອງທຸລະຄົມ, ງານປະກວດຮູບແຕ້ມ ແລະ ເສັງເພັງກ່ຽວກັບການທ່ອງທ່ຽວ...

<u>ໂຄງການທີ 6:</u> **ຮ່ວມມືກັບພາກທຸລະກິດທັງພາຍໃນ ແລະ ຕ່າງປະເທດ ໃນການໂຄສະນາ ແລະ ການເຄື່ອນໄຫວການຕະຫລາດການທ່ອງທ່ຽວ.**

ການໂຄສະນາ ແລະ ການເຄື່ອນໄຫວການຕະຫລາດການທ່ອງທ່ຽວ ເປັນວຽກງານທີ່ອົງການມະຫາພາກ ແລະ ຈຸລະພາກ ຕ້ອງໄດ້ຮ່ວມມືກັນຢ່າງໃກ້ຊິດ.ການປະສານ ແລະ ຮ່ວມມືດັ່ງກ່າວນີ້ ຈະໄດ້ດຳເນີນໄປ ດ້ວຍຫລາຍຮູບແບບ, ຊຶ່ງລະອຽດມີດັ່ງນີ້ :

- ສ້າງຕັ້ງສະພາສົ່ງເສີມການຕະຫລາດການທ່ອງທ່ຽວລາວ, ຊຶ່ງປະກອບດ້ວຍຕົວແທນຈາກພາກລັດ ແລະ ພາກທຸລະກິດທີ່ກ່ຽວຂ້ອງ ເພື່ອດຳເນີນການເຄື່ອນໄຫວການໂຄສະນາ ແລະ ຊອກຫາຕະຫລາດນັກທ່ອງ ທ່ຽວ ທັງພາຍໃນ ແລະ ຕ່າງປະເທດ.
- ຊຸກຍູ້ໃຫ້ພາກທຸລະກິດອຸດສາຫະກຳການທ່ອງທ່ຽວ ໄດ້ປະກອບສ່ວນຢ່າງແຂງແຮງ ໃນການໂຄສະນາການທ່ອງທ່ຽວລາວໂດຍສະເພາະການເຂົ້າຮ່ວມງານວາງສະແດງການທ່ອງທ່ຽວຂອງພາກພື້ນແລະຂອງ ໂລກໃຫ້ນັບມື້ ນັບຫລາຍ ໂດຍກຳນົດໃຫ້ເປັນພັນທະຕ້ອງເຂົ້າຮ່ວມງານໃດໜຶ່ງທີ່ແນ່ນອນ.
- ພົວພັນ ຮ່ວມມື ກັບບໍລິສັດການບິນຂອງຕ່າງປະເທດ ທີ່ບິນມາລາວ, ບໍລິສັດທ່ອງທ່ຽວຕ່າງປະເທດ ແລະ ສຳນັກພິມຈຳໜ່າຍດ້ານການທ່ອງທ່ຽວຂອງຕ່າງປະເທດ ເຊັ່ນ : lonely planet ແລະ ອື່ນໆ ເພື່ອ ໂຄສະນາການທ່ອງທ່ຽວລາວ ຢູ່ໃນຕ່າງປະເທດ.

### 4.3.4 <u>ແຜນງານຄຸ້ມຄອງທຸລະກິດການທ່ອງທ່ຽວ</u>

ເພື່ອເຮັດໃຫ້ວຽກງານການຄຸ້ມຄອງທຸລະກິດການທ່ອງທ່ຽວຢູ່ໃນ ສ ປ ປ ລາວ ເຂົ້າສູ່ລະບົບ, ມີຄວາມເປັນລະບຽບຮຽບຮ້ອຍ ແລະ ເພື່ອເຮັດໃຫ້ການທ່ອງທ່ຽວກາຍເປັນຂະແໜງການອຸດສະຫາກຳທີ່ເຂັ້ມແຂງ, ມີຄຸນນະພາບໃນການບໍລິການທີ່ດີ ແລະ ເຄື່ອນໄຫວສອດຄ່ອງຕາມລະບຽບການທີ່ວາງອອກ. ສ້າງມາດຕາຖານການບໍລິການໃຫ້ເປັນລະບົບທີ່ທັນສະໄໝສາມາດແຂ່ງຂັນກັບສາກົນ ແລະ ປະກອບ ສ່ວນເຂົ້າໃນການພັດທະນາເສດຖະກິດຂອງຊາດໄດ້ເປັນຢ່າງດີ.

ອົງການທ່ອງທ່ຽວແຫ່ງຊາດຈຶ່ງໄດ້ກຳນົດແຜນງານຄຸ້ມຄອງທຸລະກິດການທ່ອງທ່ຽວອອກ ເປັນ 5 ແຜນງານຫລັກດັ່ງນີ້:

ໂຄງການ 1: **ປັບປຸງ ແລະ ສ້າງນິຕິກຳ**

ເພື່ອເປັນບ່ອນອີງໃຫ້ແກ່ການຄຸ້ມຄອງ,ຕິດຕາມກວດກາບັນດາຫົວໜ່ວຍທຸລະກິດ ບໍລິການທ່ອງທ່ຽວເຄື່ອນໄຫວ ຢ່າງຖືກຕ້ອງແລະ ມີປະສິດຕິຜົນຈະຕ້ອງໄດ້ມີການປັບປຸງ ແລະ ສ້າງບັນດານິຕິກຳດັ່ງນີ້ :

+ **ນິຕິກຳທີ່ປັບປຸງ** :

- ປັບປຸງຂໍ້ກຳນົດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກ/ຫ້ອງການທ່ອງທ່ຽວປະຈຳແຂວງ, ນະຄອນຫລວງ,
- ປັບປຸງຂໍ້ກຳນົດວ່າດ້ວຍການຄຸ້ມຄອງທຸລະກິດສະຖານທີ່ພັກແຮມ,
- ປັບປຸງຂໍ້ກຳນົດວ່າດ້ວຍການຄຸ້ມຄອງພະນັກງານນຳທ່ຽວ,
- ປັບປຸງຂໍ້ກຳນົດວ່າດ້ວຍການຄຸ້ມຄອງການບໍລິການນັກທ່ອງທ່ຽວຊາຍແດນ,
- ປັບປຸງຂໍ້ກຳນົດວ່າດ້ວຍການສ້າງຕັ້ງ ແລະເຄື່ອນໄຫວທຸລະກິດບໍລິການທ່ອງທ່ຽວ,
- ປັບປຸງຂໍ້ກຳນົດວ່າດ້ວຍການຄຸ້ມຄອງແລະນຳໃຊ້ກອງທຶນການທ່ອງທ່ຽວແຫ່ງຊາດ.
- ປັບປຸງຂໍ້ກຳນົດກ່ຽວກັບການຈັດຕັ້ງ ແລະການເຄື່ອໄຫວສະມາຄົມທຸລະກິດທ່ອງທ່ຽວ,
- ປັບປຸງຂໍ້ກຳນົດກ່ຽວກັບການຈັດຕັ້ງແລະການເຄື່ອນໄຫວສະມາຄົມທຸລະກິດໂຮງແຮມ - ຮ້ານອາຫານລາວ.

+ **ນິຕິກຳທີ່ສ້າງຂຶ້ນໃໝ່** :

- ສ້າງຂໍ້ກຳນົດກ່ຽວກັບການຈັດລະດັບສະຖານທີ່ພັກແຮມ,
- ສ້າງຂໍ້ກຳນົດກ່ຽວກັບການຄຸ້ມຄອງທຸລະກິດພັດຕະຄານ-ຮ້ານອາຫານ,
- ສ້າງຂໍ້ກຳນົດກ່ຽວກັບການຄຸ້ມຄອງແຫລ່ງທ່ອງທ່ຽວ,
- ສ້າງຂໍ້ກຳນົດວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງຫ້ອງການທ່ອງທ່ຽວເມືອງ
- ສ້າງຂໍ້ກຳນົດວ່າການຄຸ້ມຄອງເມືອງທ່ອງທ່ຽວ,
- ສ້າງຂໍ້ກຳນົດວ່າດ້ວຍການຄຸ້ມຄອງບໍລິການຂົນສົ່ງທ່ອງທ່ຽວ.

ໂຄງການທີ 2 : **ການຄຸ້ມຄອງທຸລະກິດນຳທ່ຽວ :**

ເພື່ອຍົກສູງຄຸນນະພາບການບໍລິການນຳທ່ຽວໃຫ້ໄດ້ມາດຕະຖານ, ຮັບປະກັນໃນການຮັບ - ສົ່ງ ແລະ

ບໍລິການນຳທ່ຽວຄົບວົງຈອນ ຫລີກລຽງການບໍລິການນຳທ່ຽວທີ່ບໍ່ຖືກຕ້ອງກະທົບຕໍ່ພາບພົດ ການທ່ອງທ່ຽວຂອງລາວ ອົງການທ່ອງທ່ຽວແຫ່ງຊາດຈະຕ້ອງໄດ້ອອກແຮງປະຕິບັດໜ້າວຽກຕົ້ນຕໍ ດັ່ງລຸ່ມນີ້ :

- ປັບປຸງ, ຄົ້ນຄ້ວາ ແລະຈັດແບ່ງປະເພດບໍລິສັດທ່ອງທ່ຽວໃຫ້ຖືກຕ້ອງຕາມກົດໝາຍວ່າ ດ້ວຍການທ່ອງທ່ຽວທີ່ໄດ້ປະກາດໃຊ້ໃນມໍ່ໆມານີ້,
- ປັບປຸງ,ຄົ້ນຄ້ວາ ແລະແບ່ງປະເພດພະນັກງານນຳທ່ຽວໃຫ້ແທດເໝາະກັບສະພາບການ ຂະຫຍາຍຕົວຂອງທຸລະກິດທ່ອງທ່ຽວໃນປັດຈຸບັນ,

- ປັບປຸງ ແລະສ້າງຕັ້ງກຸ່ມທຸລະກິດບໍລິການທ່ອງທ່ຽວຢູ່ໃນທ້ອງຖິ່ນໃຫ້ເຂັ້ມແຂງ ມີຄວາມສາ ມາດໃນ ການເຕົ້າໂຮມ ແລະ ມີແຜນການເຄື່ອນໄຫວໂຄສະນາ-ສົ່ງເສີມການທ່ອງທ່ຽວຢ່າງຄັກແນ່.
- ປະສານສົມທົບກັບເຈົ້າໜ້າທີ່ຕໍາຫລວດທ່ອງທ່ຽວໃນການກວດກາ,ຕັກເຕືອນ ແລະ ປະຕິ ບັດມາດຕາ ການຕໍ່ບັນດາຫົວໜ່ວຍທີ່ກະທໍາຜິດຕາມກົລະນີໜັກເບົາ,
- ສ້າງຕັ້ງກຸ່ມພະນັກງານນໍາທ່ຽວທີ່ບໍ່ສັງກັດໃນບໍລິສັດເພື່ອຄຸ້ມຄອງ,ເກັບກໍາ ແລະຊຸກຍູ້ ໃຫ້ ເຄື່ອນໄຫວ ຖືກ ຕ້ອງຕາມລະບຽບການວາງອອກ,
- ປະສານສົມທົບກັບສະມາຄົມທຸລະກິດທ່ອງທ່ຽວ ແລກປ່ຽນຂໍ້ມູນກ່ຽວກັບການເຄື່ອນໄຫວ ຂອງທຸລະກິດ ແລະພ້ອມກັນຊຸກຍູ້ໃຫ້ທຸລະກິດເຫລົ່ານັ້ນເຄື່ອນໄຫວຢູ່ພາຍໃຕ້ລະບຽບການ.

<u>ໂຄງການທີ 3</u>: **ການຄຸ້ມຄອງທຸລະກິດສະຖານທີ່ພັກແຮມ - ຮ້ານອາຫານ** :

ເພື່ອເຮັດໃຫ້ລະບົບການບໍລິການສະຖານທີ່ພັກແຮມ-ຮ້ານອາຫານຢູ່ໃນ ສປປລາວ ມີມາດ ຕະຖານໃກ້ ຄຽງ ແລະ ສອດຄ່ອງກັບລະບົບສາກົນ, ເຮັດໃຫ້ຜູ້ຊົມໃຊ້ມີທາງເລືອກໃນການໃຊ້ບໍລິການ ສະຖານທີ່ພັກ ແຮມ ແລະ ຮ້ານອາຫານ ແລະເພື່ອປົກປ້ອງສິດຜົນປະໂຫຍດຂອງທຸລະກິດ ອີງການທ່ອງທ່ຽວແຫ່ງຊາດ ຈະຕ້ອງ ໄດ້ສຸມ ໃສ່ໜ້າ ວຽກຕົ້ນຕໍດັ່ງນີ້ :

- ຈັດລະດັບຂອງສະຖານທີ່ພັກແຮມ ເຊັ່ນ : ໂຮງແຮມ, ເຮືອນພັກ, ລີສອດ ແລະອື່ນໆ,
- ຈັດລະດັບ ພັດຕະຄານ ແລະຮ້ານອາຫານ,
- ປັບປຸງການບໍລິການຂອງພະນັກງານຢູ່ໃນສະຖານທີ່ພັກແຮມ, ພັດຕະຄານ ແລະ ຮ້ານ ອາຫານ,
- ປະສານສົມທົບກັບເຈົ້າໜ້າທີ່ຕໍາຫລວດທ່ອງທ່ຽວໃນການຕິດຕາມ,ເກັບກໍາສະຖິຕິຈໍາ ນວນ ຜູ້ທີ່ເຂົ້າມາ ພັກເຊົາ. ກວດກາ ແລະປະຕິບັດມາດຕາການຕໍ່ຜູ້ລະເມີດລະບຽບ ຫລັກການ ຫລື ສວຍໃຊ້ສະຖານ ທີ່ດັ່ງ ກ່າວເຄື່ອນ ໄຫວຜິດຕໍ່ຮີດຄອງປະເພນີອັນດີງາມຂອງຊາດ,
- ປະສານສົມທົບກັບສະມາຄົມທຸລະກິດໂຮງແຮມ-ຮ້ານອາຫານລາວ ຊຸກຍູ້ໃຫ້ບັນດາຫົວ ໜ່ວຍທຸລະກິດ ເຄື່ອນໄຫວຖືກຕ້ອງ,
- ເກັບກໍາ ແລະປັບປຸງສະຖິຕິໂຮງແຮມ,ເຮືອນພັກ,ຮ້ານອາຫານ ເປັນປົກກະຕິ ເພື່ອເປັນຂໍ້ ມູນໃນການ ຄຸ້ມຄອງ ແລະກວດກາຂອງຫົວໜ່ວຍທຸລະກິດເຫລົ່ານັ້ນ,

<u>ໂຄງການທີ 5</u> : **ການຄຸ້ມຄອງສະຖານທີ່ທ່ອງທ່ຽວ** :

ເພື່ອເຮັດໃຫ້ການຄຸ້ມຄອງ ແລະພັດທະນາແຫລ່ງທ່ອງທ່ຽວເຂົ້າສູ່ຄວາມເປັນລະບຽບ,ບໍ່ທໍາ ລາຍສະພາບ

ແວດລ້ອມທຳມະຊາດ ແລະມີແຜນການໃນການພັດທະນາສອດຄ່ອງກັບແຜນຍຸດຕະສາດການທ່ອງທ່ຽວ

ລາວ ພວກເຮົາຈະຕ້ອງໄດ້ເອົາໃຈໃສ່ຕໍ່ໜ້າວຽກລຸ່ມນີ້ :

- ຈັດລະດັບປະເພດແຫລ່ງທ່ອງທ່ຽວໃຫ້ລະອຽດ ແລະ ຊັດເຈນ,
- ກຳນົດໃຫ້ມີລະບຽບການສະເພາະໃນແຕ່ລະແຫລ່ງທ່ອງທ່ຽວ, ມີການສະຫລຸບລາຍງານການເຄື່ອນໄຫວ

ໃຫ້ແກ່ອົງການທ່ອງທ່ຽວແຫ່ງຊາດ ແລະພະແນກ/ຫ້ອງການທ່ອງທ່ຽວແຂວງ, ນະຄອນຫລວງຕາມການ

ແບ່ງຄວາມຮັບຜິດຊອບຢ່າງເປັນປົກກະຕິ,

- ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຕິດຕາມ,ກວດກາການເຄື່ອນໄຫວເປັນປົກກະຕິ,

<u>ໂຄງການທີ 6</u> : **ການຄຸ້ມຄອງ ແລະສົ່ງເສີມການລົງທຶນການທ່ອງທ່ຽວພາຍໃນ ແລະຕ່າງປະເທດ:**

ເພື່ອເປັນການຊຸກຍູ້ໃຫ້ນັກລົງທຶນທັງພາຍໃນ ແລະຕ່າງປະເທດມີຄວາມສົນໃຈລົງທຶນໃນຂະແໜງການ

ທ່ອງທ່ຽວ ໃຫ້ນັບມື້ນັບຫລາຍຂຶ້ນ, ສ້າງວຽກເຮັດງານທຳໃຫ້ແກ່ສັງຄົມ ແລະປະກອບສ່ວນເຂົ້າໃນການ

ແກ້ໄຂ ຄວາມຍາກຈົນຂອງປະຊາຊົນຈະຕ້ອງໄດ້ເອົາໃຈໃສ່ດັ່ງນີ້ :

- ຕິດຕາມ ແລະເກັບກຳນະໂຍບາຍກ່ຽວກັບການທ່ອງທ່ຽວເພື່ອເປັນທິດທາງໃນການເຄື່ອນໄຫວໂຄສະນາ,
- ຈັດຕັ້ງເຜີຍແຜ່ນະໂຍບາຍກ່ຽວກັບການພັດທະນາ ແລະສົ່ງເສີມການທ່ອງທ່ຽວຂອງ ລາວ ຢ່າງກວ້າງຂວາງ ດ້ວຍຫລາຍຮູບແບບ ເພື່ອສ້າງຄວາມເຊື່ອໝັ້ນ ໃຫ້ແກ່ນັກລົງທຶນ ທີ່ມີຈຸດປະສົງ ຈະລົງທຶນໃນຂະແໜງ ການທ່ອງທ່ຽວ,
- ເຜີຍແຜ່ກົດໝາຍວ່າດ້ວຍການທ່ອງທ່ຽວໃນຂອບເຂດທົ່ວປະເທດ ແລະຢູ່ເວທີສາກົນ ,
- ເກັບກຳ,ສັງລວມບັນດາການລົງທຶນຂອງພາຍໃນ ແລະຕ່າງປະເທດໃນຂະແໜງການ ທ່ອງທ່ຽວເພື່ອເປັນຂໍ້ມູນໃນການຄົ້ນຄວ້າການລົງທຶນໃນຂັ້ນຕໍ່ໄປ.

### 4.3.5 <u>ແຜນງານພັດທະນາບຸກຄະລາກອນ</u>

ອົງການທ່ອງທ່ຽວແຫ່ງຊາດ ເພີ້ມທະວີການປະສານສົມທົບກັບ ຄະນະກຳມະການແຜນການ ແລະການລົງທຶນ, ກະຊວງສຶກສາ,ກະຊວງການຕ່າງປະເທດ, ກະຊວງແຮງງານ-ສະຫວັດດີການສັງຄົມ, ສະມາຄົມ ໂຮງແຮມ-ຮ້ານອາຫານ, ສະມາຄົມທຸລະກິດທ່ອງທ່ຽວ ເພື່ອສ້າງໂຄງການບຳລຸງ ພະນັກງານໃຫ້ແກ່ຂະແໜງການທ່ອງທ່ຽວ ຕາມທິດ ດັ່ງນີ້ :

- ເລັ່ງລັດສ້າງຄູຝຶກດ້ານວິຊາຕ່າງໆ ກ່ຽວກັບວຽກງານທ່ອງທ່ຽວ ແລະ ໂຮງແຮມ ໃນໄລຍະສັ້ນ ເຊັ່ນ : ວິຊາຄຸ້ມຄອງບໍລິຫານ, ຄຸ້ມຄອງທຸລະກິດ, ເຕັກນິກການນຳທ່ຽວ,ບໍລິການໂຮງແຮມ-ເຮືອນພັກ ແລະ ຮ້ານອາຫານ, ການປ້ອງກັນ, ພາສາຕ່າງປະເທດ... ດ້ວຍ ຫຼາຍຮູບການທີ່ສອດຄ່ອງ ແນໃສ່ສາມາດ ນຳໃຊ້ຄວາມຮູ້ດັ່ງກ່າວ ເຂົ້າໃນການພັດທະນາວຽກງານ ທ່ອງທ່ຽວໄດ້ໂດຍໄວ.

- ຍາດແຍ່ງທຶນຊ່ວຍເຫຼືອຈາກປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນ ເພື່ອສ້າງສູນຝຶກອົບຮົມ ວິຊາຊີບທ່ອງທ່ຽວ ແລະ ໂຮງແຮມ ເພື່ອຝຶກອົບຮົມກໍ່ສ້າງ ພະນັກງານ, ລັດຖະກອນ ເປັນປົກກະຕິ ແລະ ສະໜອງໃຫ້ແກ່ຫົວໜ່ວຍທຸລະກິດບໍລິການຕ່າງໆ ໃນທົ່ວປະເທດ ຢ່າງພຽງພໍກັບຄວາມຕ້ອງການໃນແຕ່ ລະໄລຍະ.

- ສົ່ງນັກສຶກສາຈຳນວນໜຶ່ງ ໄປຮໍ່າຮຽນໄລຍະຍາວ ກ່ຽວກັບວິຊາສະເພາະດັ່ງກ່າວ ໃນຕ່າງປະເທດ ເພື່ອອະນາຄົດອັນຍາວນານ.

- ສົ່ງພະນັກງານຂັ້ນນຳ,ພະນັກງານຄຸ້ມຄອງໄປທັດສະນະສຶກສາ ແລກປ່ຽນບົດຮຽນກັບຕ່າງປະເທດ.

- ພັດທະນາບຸກຄະລາກອນໃນຂະແໜງການທ່ອງທ່ຽວເປັນຕົ້ນ: ພະນັກງານນຳພາ,ພະນັກງານຄຸ້ມຄອງ ແລະ ພະນັກງານວິຊາການທຸກລະດັບຢູ່ພາຍໃນ ແລະ ຕ່າງປະເທດ ໃຫ້ມີຄວາມຮູ້ ທາງດ້ານວິຊາ ສະເພາະຄຸ້ມຄອງໂຮງແຮມ-ທ່ອງທ່ຽວແລະພາສາຕ່າງປະເທດ ແລະ ຮັບປະກັນປະລິມານພຽງພໍກັບ ການຂະຫຍາຍ ຕົວ ຂອງວຽກງານທ່ອງທ່ຽວ ໃນສະເພາະໜ້າ ແລະ ຍາວນານ.

- ປະສານສົມທົບກັບກະຊວງສຶກສາທິການເພື່ອປັບປຸງຫລັກສູດ ກ່ຽວກັບການທ່ອງທ່ຽວ ໃຫ້ເປັນ ມາດ ຕະຖານອັນແນ່ນອນເພື່ອສ້າງຂະແໜງການຢູ່ມະຫາວິທະຍາໄລແຫ່ງຊາດ ແລະ ໂຮງຮຽນວິຊາຊີບທີ່ມີ ຢູ່ແລ້ວໃສ່ ພັດທະນາບຸກຄະລາກອນ ໃນຂະແໜງການທ່ອງທ່ຽວ.

✶ <u>ແຜນງານລະອຽດຂອງວຽກງານການພັດທະນາບຸກຄະລາກອນ</u>

ເພື່ອປະຕິບັດຕາມແຜນງານຍຸດທະສາດການທ່ອງທ່ຽວໃຫ້ປະສົບຜົນສຳເລັດຈະຕ້ອງໄດ້ເອົາໃຈ ໃສ່ຕໍ່ບັນດາແຜນງານລະອຽດດັ່ງຕໍ່ໄປນີ້ :

<u>ໂຄງການທີ່</u> 1 : **ປະກອບອຸປະກອນຮັບໃຊ້ໃນການສອນ**

- ປະກອບອຸປະກອນທີ່ທັນສະໄໝເປັນຕົ້ນແມ່ນ ເຄື່ອງສາຍ LCD , ເຄື່ອງຄອມພິວເຕີ, ເຄື່ອງສາຍແຜ່ນ ໃສ ລະບົບສີຄາດຄະເນຈະປະຕິບັດໃຫ້ໄດ້ໃນປີ 2006.

<u>ໂຄງການທີ່</u> 2 : **ການຝຶກອົບຮົມຄວາມຮູ້ພື້ນຖານກ່ຽວກັບການນຳທ່ຽວ,ການບໍລິການໂຮງແຮມ, ເຮືອນພັກ ແລະ ຮ້ານອາຫານ.**

- ຈັດຕັ້ງຝຶກອົບຮົມພະນັກງານນຳທ່ຽວທົ່ວປະເທດ 2 ຄັ້ງຕໍ່ປີເພື່ອຍົກລະດັບຄວາມຮູ້ພື້ນຖານຂອງພະນັກ ງານນຳທ່ຽວລະດັບຊາດ ແລະ ລະດັບທ້ອງຖິ່ນໃຫ້ໄດ້ມາດຕະຖານທາງດ້ານການບໍລິການ, ການນຳທ່ຽວ ເພື່ອຕອບສະໜອງກັບຈຳນວນການເພີ່ມຂື້ນຂອງນັກທ່ອງທ່ຽວທີ່ນັບມື້ນັບຫລາຍຂື້ນ. ສູ້ຊົນໃຫ້ໄດ້ 80 ຄົນ ຕໍ່ປີ ແລະ ປະຕິບັດເປັນປົກກະຕິແຕ່ນີ້ເຖິງ ປີ 2020 .

- ຈັດຕັ້ງຝຶກອົບຮົມພະນັກງານບໍລິການໂຮງແຮມ, ເຮືອນພັກ ແລະ ຮ້ານອາຫານໃຫ້ບັນດາແຂວງ, ນະຄອນຫລວງເພື່ອຍົກລະດັບຄວາມຮູ້ພື້ນຖານທາງດ້ານການບໍລິການໃຫ້ໄດ້ມາດຕະຖານຢ່າງນ້ອຍ 500 ຄົນຕໍ່ປີ ແລະ ປະຕິບັດເປັນປົກກະຕິແຕ່ນີ້ເຖິງ ປີ 2020 .
- ຈັດຕັ້ງຊຸດອົບຮົມ ແລະ ສຳມະນາສຳລັບຄູຝຶກປີໜຶ່ງໃຫ້ໄດ້ 10-20 ຄົນຕໍ່ຄັ້ງ/ປີ ແລະ ປະຕິບັດເປັນປົກກະຕິແຕ່ນີ້ເຖິງ ປີ 2020

<u>ໂຄງການທີ 3</u> : **ການພັດທະນາຫຼັກສູດວິຊາຮຽນໃນຂະແໜງການທ່ອງທ່ຽວ.**

- ຮ່ວມມືກັບກະຊວງສຶກສາທິການ, ມະຫາວິທະຍາໄລແຫ່ງຊາດ, ສະຖາບັນການສຶກສາທັງພາກລັດ ແລະ ເອກກະຊົນ, ສະມາຄົມທຸລະກິດທ່ອງທ່ຽວລາວ, ສະມາຄົມທຸລະກິດໂຮງແຮມ-ຮ້ານອາຫານເພື່ອວາງແຜນປັບປຸງແລະພັດທະນາຫລັກສູດການສິດສອນ ທາງດ້ານວິຊາການ ທ່ອງທ່ຽວໃນລະດັບວິຊາຊີບທີ່ຊຳນານງານ, ລະດັບປະລິນຍາໂທ ແລະ ລະດັບປະລິນຍາເອກ ຄາດຄະເນຈະປະຕິບັດໄດ້ແຕ່ປີ 2010 - 2020.

<u>ໂຄງການທີ 4</u> : **ການຮ່ວມມືກັບອົງການຈັດຕັ້ງສາກົນ**

- ປະສານສົມທົບກັບ ອົງການໄຈວາຍສ໌, ສູນອາຊຽນຍີ່ປຸ່ນ ອີຢູອາຊຽນ, ແອກແມັກ, ເອັດເອັນວີ, ດີອີດີ, ໂຄງການຊ່ວຍເຫຼືອຂອງລັດຖະບານແບນຊີກເພື່ອຈັດຕັ້ງການຝຶກອົບຮົມ ແລະ ການສຳມະນາໃນຫົວຂໍ້ຕ່າງໆທີ່ກ່ຽວພັນກັບວຽກງານທ່ອງທ່ຽວ ແລະ ປະຕິບັດເປັນປົກກະຕິແຕ່ນີ້ເຖິງ ປີ 2020.
- ດຳເນີນການລົງສຳຫລວດເກັບກຳຂໍ້ມູນ ແລະ ປະເມີນຜົນການຈັດຕັ້ງປະຕິບັດການຢູ່ບັນດາແຂວງຕ່າງໆເພື່ອຈັດຝຶກອົບຮົບໃຫ້ໄດ້ປີລະຄັ້ງ ແລະ ປະຕິບັດເປັນປົກກະຕິແຕ່ນີ້ຫາປີ 2020 .

<u>ໂຄງການທີ 5</u> : **ສ້າງຕັ້ງສູນຝຶກອົບຮົມວິຊາການທ່ອງທ່ຽວ ແລະ ໂຮງແຮມ.**

- ຄົ້ນຄ້ວາຊອກຫາແຫຼ່ງທຶນ ແລະ ຂຽນໂຄງການຂໍການຊ່ວຍເຫຼືຈາກຕ່າງປະເທດເພື່ອສ້າງສູນຝຶກອົບຮົມວິຊາການທ່ອງທ່ຽວ ແລະ ໂຮງແຮມ
- ປະສານສົມທົບກັບຫ້ອງການທ່ອງທ່ຽວນະຄອນຫຼວງວຽງຈັນຄົ້ນຄ້ວາຊອກຫາສະຖານທີ່ສ້າງສູນຝຶກອົບຮົມວິຊາການທ່ອງທ່ຽວ ແລະ ໂຮງແຮມ.

<u>ໂຄງການທີ 6</u> : ລວບລວມເອກະສານຄົ້ນຄ້ວາການຮຽນການສອນ.

- ເກັບກຳ, ລວບລວມຂໍ້ມູນເອກະສານ, ປື້ມຕຳລາຕ່າງໆກ້າວໄປເຖິງການສ້າງເປັນ ຫໍສະມຸດເພື່ອຮັບໃຊ້ເຂົ້າໃນການຄົ້ນຄວ້າ, ການຮ່ຳຮຽນ ແລະ ການສິດສອນໄປພ້ອມໆກັນ
- ສ້າງແຜນການຮຽນການສອນວິຊາການທ່ອງທ່ຽວ ແລະ ໂຮງແຮມໃນລະດັບຕ່າງໆເຊັ່ນ : ການຝຶກອົບຮົມໄລຍະສັ້ນ, ກາງ , ການສຶກສາລະດັບຊັ້ນຕົ້ນ, ຊັ້ນກາງ ແລະ ຊັ້ນສູງ.

### 4.3.6 <u>ແຜນງານການຮ່ວມມືສາກົນ :</u>

ເພີ່ມທະວີການພົວພັນ ແລະ ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນແນໃສ່ຍາດແຍ່ງ ການຊ່ວຍເຫຼືອດ້ານທຶນຮອນ ແລະ ວິຊາການ ເຂົ້າໃສ່ໃນການພັດທະນາ ແລະ

ສົ່ງເສີມການທ່ອງທ່ຽວ, ການພັດທະນາບຸກຄະລາກອນຂອງຂະແໜງການທ່ອງທ່ຽວ. ຮ່ວມກັນເພື່ອສົ່ງເສີມ ແລະ ຂະຫຍາຍ ຕະຫຼາດທ່ອງທ່ຽວ ໃຫ້ນັບມື້ນັບກວ້າງຂວາງອອກ ໂດຍຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ, ໂດຍ ສະເພາະ ກັບບັນດາປະເທດຂົງເຂດອາຊີ-ປາຊີຟິກ, ອາຊຽນ, ອະນຸພາກພື້ນແມ່ນ້ຳຂອງ ແລະ ປະເທດເພື່ອນບ້ານ ທີ່ມີຊາຍແດນຕິດຈອດກັບລາວ ຊຶ່ງໄດ້ມີສັນຍາຮ່ວມມືດ້ານການທ່ອງທ່ຽວນຳກັນ. ນອກຈາກນັ້ນກໍເອົາໃຈໃສ່ປະສານກັບອົງການຈັດຕັ້ງສາກົນ.

<u>ໂຄງການທີ</u> 1 : **ການຮ່ວມມືກັບອົງການຈັດຕັ້ງສາກົນ**

ຮ່ວມມືກັບອົງການທ່ອງທ່ຽວໂລກ(WTO), ອົງການ ພາຕາ(PATA), ອົງການພັດທະນາ ປະເທດເນເທີແລນ SNV, ອົງການ ພັດທະນາປະເທດເຢຍລະມັນ DED, ທະນາຄານພັດທະນາອາຊີ ADB , ທະນາຄານໂລກ Wold Bank, ທະນາຄານພົວພັນຕ່າງປະເທດຂອງຍີປຸ່ນ JBIC, ອົງການໄຈກາປະເທດຍີ່ປຸ່ນ JICA ແລະ ອົງການຈັດຕັ້ງອື່ນໆ ເພື່ອຍາດແຍ່ງທຶນຮອນ ແລະ ວິຊາການເຂົ້າໃສ່ການພັດທະນາ ແລະ ສົ່ງເສີມການ ທ່ອງທ່ຽວ.

<u>ໂຄງການທີ</u> 2 : **ການຮ່ວມມືສອງຝ່າຍ, ສາມຝ່າຍ ແລະ ຫຼາຍຝ່າຍ**

ຈັດຕັ້ງການຮ່ວມມືກັບບັນດາປະເທດໃກ້ຄຽງໃຫ້ນັບມື້ນັບດີຂຶ້ນ, ໂດຍສະເພາະກັບບັນດາປະເທດອາຊຽນ,ປະເທດໃນອານຸພາກພື້ນແມ່ນ້ຳຂອງ, ເຮັດໃຫ້ການທ່ອງທ່ຽວຂອງປະເທດເຮົາເຊື່ອມຕໍ່ເຂົ້າກັບຫວຽດນາມ, ຈີນ, ກຳປູເຈຍ, ໄທ,ມຽນມາໄດ້ເປັນຢ່າງດີ.

### 4.3.7 <u>ແຜນງານສົ່ງເສີມການລົງທຶນ</u>

ເພື່ອຕອບສະໜອງແຜນນະໂຍບາຍເປົ້າໝາຍທີ່ກຳນົດໄວ້ໂດຍອີງໃສ່ເງື່ອນໄຂ ແລະ ສະພາບພາວະຄວາມເປັນຈິງຂອງລາວ ທາງດ້ານການພັດທະນາພື້ນຖານໂຄງລ່າງເສດຖະກິດ ແລະ ອື່ນໆ, ການລົງທຶນ ເຂົ້າໃນຂະແໜງການທ່ອງທ່ຽວ ແລະ ອຸດສາຫະກຳທ່ອງທ່ຽວແມ່ນຄວາມຈຳເປັນພາວະວິໄສເຊັ່ນດຽວ ກັນຊຶ່ງໃນນີ້ອາດແຍກອອກເປັນ 3 ພາກສ່ວນດັ່ງນີ້ :

- ພາກລັດລົງທຶນ.
- ພາກເອກກະຊົນລົງທຶນ.
- ພາກລັດ ແລະ ພາກເອກກະຊົນລົງທຶນຮ່ວມກັນ.

#### 1. <u>ພາກລັດລົງທຶນ</u>

ພາກລັດລົງທຶນເຫັນວ່າມີຢ່າງຫລວງຫລາຍຢູ່ແລ້ວ ໂດຍສະເພາະໃນດ້ານການພັດທະນາ ພື້ນຖານໂຄງລ່າງ ເສດຖະກິດແຫ່ງຊາດແຕ່ໃນນີ້ ແມ່ນຢາກເວົ້າເຖິງການລົງທຶນພັດທະນາຊັບພະຍາກອນມະນຸດ ໃນຂະແໜງການໂຮງແຮມ-ທ່ອງທ່ຽວຄື : ສ້າງສູນຝຶກອົບຮົມກໍ່ສ້າງພະນັກງານໂຮງແຮມ ແລະ ທ່ອງ ທ່ຽວເພື່ອຕອບສະໜອງ ແລະ ຍົກລະດັບການບໍລິການຂອງຫົວໜ່ວຍທຸລະກິດ ບໍລິການຕ່າງໆ

ໃຫ້ມີຄຸນ ນະພາບສູງຂື້ນເລື້ອຍໆ ເປັນຕົ້ນໃຫ້ມີຄວາມໜັກແໜ້ນທາງດ້ານການເມືອງ. ແລະ ຍົກລະດັບວິຊາການໃຫ້ເປັນມືອາຊີບ.

2. ພາກເອກກະຊົນ

ພາກສ່ວນເອກະຊົນນີ້ມີພາກສ່ວນພາຍໃນ ແລະ ຕ່າງປະເທດ ແລະ ການລົງທຶນ ນັ້ນຂື້ນກັບນະໂຍບາຍສົ່ງເສີມຂອງລັດຖະບານ ແລະ ສ່ວນໃຫຍ່ ແມ່ນຜູ້ດຳເນີນທຸລະກິດການບໍລິການ ໃນຂະແໜງການຕ່າງໆເຊັ່ນ : ຮ້ານອາຫານກິນດື່ມບັນເທີງ, ກິລາ, ໂຮງແຮມ, ເຮືອນພັກ, ເຮືອທ່ອງທ່ຽວ, ສິ່ງຂອງທີ່ລະນຶກການບໍລິການທ່ອງທ່ຽວ ແລະ ອື່ນໆ ໂດຍມີການກຳນົດແຈ້ງ ລັກສະນະ ແລະ ເນື້ອໃນ.

ຊຸກຍູ້ໃຫ້ມີນະໂຍບາຍເຮືອນທີ 2 (Second house) ສຳລັບນັກທ່ອງທ່ຽວໄດ້ມາພັກແຮມ ແລະ ໃຊ້ຈ່າຍຢູ່ປະເທດເຮົາຫລາຍຂື້ນ.

ຊຸກຍູ້ໃຫ້ມີການພັດທະນາເຮືອນພັກຕາກອາກາດ, ເຮືອນພັກຜູ້ເຖົ້າຕ່າງປະເທດ.

ແຕ່ຢ່າງໃດກໍຕາມການລົງທຶນຂອງເອກະຊົນມາຮອດປັດຈຸບັນກໍມີການຂະຫຍາຍຕົວໃນທຸກດ້ານ ແຕ່ເຫັນວ່າຍັງບໍ່ທັນພຽງພໍ ເປັນຕົ້ນທາງດ້ານໂຮງແຮມທີ່ໄດ້ມາດຕະຖານ ແນໃສ່ຮອງຮັບນັກທ່ອງທ່ຽວໃນ ສະເພາະໜ້າ ແລະ ຍາວນານ.

ນອກຈາກການລົງທຶນ ໃນຂະແໜງໂຮງແຮມ-ເຮືອນພັກແລ້ວ ເຫັນວ່າພາກສ່ວນເອກະຊົນຍັງມີຄວາມສາມາດລົງທຶນໃນຂະແໜງການບໍລິການ ແລະ ອື່ນໆ ຕາມກໍລະນີ ແລະ ເງື່ອນໄຂ ນະໂຍບາຍສົ່ງເສີມຂອງລັດຖະບານດ້ວຍໄມ້ວັດເສດຖະກິດ, ການເງິນ, ພາສີອາກອນ ແລະ ອື່ນໆ.

3. ພາກລັດ ແລະ ເອກກະຊົນລົງທຶນຮ່ວມກັນ

ຊຸກຍູ້ ແລະ ສົ່ງເສີມໃຫ້ພາກລັດ ແລະ ເອກກະຊົນໄດ້ມີການລົງທຶນຮ່ວມກັນຕາມເງື່ອນໄຂຄວາມອາດສາມາດບົນພື້ນຖານລະບຽບການຂອງແຕ່ລະຂະແໜງການ ແລະ ຮັບປະກັນໃຫ້ທຸກຝ່າຍໄດ້ຮັບຜົນປະໂຫຍດນຳກັນ.

## ພາກທີ່ III

## ມາດຕະການຈັດຕັ້ງປະຕິບັດ

## ແຜນຍຸດທະສາດພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ 2006-2020

- ອີງໃສ່ມະຕິຂອງກອງປະຊຸມ ຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 11 ສະໄໝ V ໄດ້ກຳນົດເອົາ

ວຽກ ງານບໍລິການ ແລະ ການທ່ອງທ່ຽວ ເປັນໜຶ່ງໃນ 8 ແຜນງານບຸລິມາສິດ ເພື່ອພັດທະນາເສດຖະກິດສັງຄົມ ຂອງປະເທດຊາດ ໃນສະເພາະໜ້າ ແລະ ຍາວນານ.

- ອີງໃສ່ມະຕິ 4 ສະໄໝ VII ຂອງຄະນະບໍລິຫານງານສູນກາງພັກ ໄດ້ຊີ້ນຳຂະແໜງການທ່ອງທ່ຽວ : '' ຄວນເອົາໃຈໃສ່ ເຮັດໃຫ້ດີກວ່າເກົ່າ ໃນການລົງທຶນພັດທະນາແຫລ່ງທ່ອງທ່ຽວ, ພັດທະນາບຸກຄະລາກອນໃນຂະແໜງການທ່ອງທ່ຽວ, ປັບປຸງກົນໄກການຄຸ້ມ ຄອງການທ່ອງທ່ຽວ ໃຫ້ເໝາະສົມ ແລະ ຄ່ອງຕົວ. ຂະແໜງການທີ່ກ່ຽວຂ້ອງ ແລະ ທ້ອງຖິ່ນຕ່າງໆ ຕ້ອງມີແຜນພັດທະນາການ ທ່ອງທ່ຽວໃຫ້ລະອຽດ, ເໝາະສົມກັບສະພາບການຕົວຈິງ '' .

ໃນສະເພາະໜ້າ ແລະ ຍາວນານ ບັນດາວຽກງານພັດທະນາການທ່ອງທ່ຽວ ແລະ ອຸດສາຫະກຳທ່ອງທ່ຽວ ຈະຕ້ອງເອົາໃຈໃສ່ປັບປຸງ, ສົ່ງເສີມ ແລະ ຊຸກຍູ້ ເພື່ອບັນລຸເປົ້າໝາຍຂອງແຜນການພັດທະນາເສດຖະກິດ-ສັງຄົມ ເວົ້າລວມ ແລະ ແຜນການພັດທະນາການທ່ອງທ່ຽວ ແລະ ອຸດສາຫະກຳທ່ອງທ່ຽວເວົ້າສະເພາະມີດັ່ງນີ້ :

- ເຊື່ອມຊຶມ ແລະ ປູກຈິດສຳນຶກກ່ຽວກັບນະໂຍບາຍ ການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ ໃຫ້ແກ່ ທຸກພາກສ່ວນໄດ້ຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງເພື່ອເຮັດໃຫ້ການທ່ອງທ່ຽວຂອງລາວ ເຮົາກາຍເປັນຂະ ແໜງການເສດຖະກິດທີ່ສຳຄັນ ແລະ ເປັນອຸດສາຫະກຳທ່ອງທ່ຽວທີ່ທັນສະໄໝ.
- ປະສານສົມທົບກັບບັນດາກະຊວງ,ອົງການແລະຂະແໜງການກ່ຽວຂ້ອງ,ເພື່ອຂະຫຍາຍພື້ນຖານວັດຖຸເຕັກນິກແລະພື້ນຖານໂຄງລ່າງຕອບສະໜອງຄວາມຕ້ອງການຂອງການພັດທະນາການທ່ອງທ່ຽວໃນສະເພາະໜ້າ ແລະ ຍາວນານ :
- ກຳນົດເຂດຈຸດສຸມທີ່ພົ້ນເດັ່ນໃນການພັດທະນາການທ່ອງທ່ຽວເພື່ອດຶງດູດການລົງທຶນຂອງພາຍໃນ ແລະ ຕ່າງປະເທດ ສ້າງເປັນສູນການທ່ອງທ່ຽວຂຶ້ນໃນເຂດເຫຼົ່ານັ້ນ ເຊິ່ງປະກອບດ້ວຍ ພື້ນຖານວັດຖຸເຕັກນິກ ແລະ ຜະລິດຕະພັນຕ່າງໆ ທີ່ມີສີສັນອັນເປັນເອກະລັກ ແລະ ຈັບອົກຈັບໃຈ.
- ຈັດຕັ້ງ ແລະ ດຳເນີນການກວດກາປະເມີນຜົນກ່ຽວກັບ ການຈັດຕັ້ງປະຕິບັດແຜນຍຸດທະສາດການທ່ອງທ່ຽວ ແລະ ປະເມີນຜົນເພື່ອປັບປຸງການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວໃຫ້ສອດຄ່ອງຕາມແນວທາງນະໂຍ ບາຍຂອງພັກ ທີ່ກຳນົດໄວ້.
- ຜັນຂະຫຍາຍເນື້ອໃນຍຸດຕະສາດ ການພັດທະນາການທ່ອງທ່ຽວ ເປັນແຜນງານລະອຽດແຕ່ລະດ້ານເພື່ອເປັນທິດນຳໃນການຈັດຕັ້ງປະຕິບັດ.

## ພາກທີ IV

## ແຜນການ 5 ປີ ແຕ່ 2006-2010

### I. ທິດທາງລວມ :

ເພື່ອເຮັດໃຫ້ການປະຕິບັດບັນດານະໂຍບາຍ ແລະ ແຜນຍຸດທະສາດການທ່ອງທ່ຽວ ໃຫ້ປະສົບຜົນສຳເລັດຫລືເປັນຮູບປະທຳນັ້ນແມ່ນຮຽກຮ້ອງໃຫ້ມີຄວາມພະຍາຍາມໃນການຈັດຕັ້ງປະຕິບັດຕາມທິດນຳດັ່ງນີ້ :

- ການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວຂອງປະເທດເຮົາຕ້ອງສອດຄ່ອງກັບຄວາມອາດສາມາດຮອງຮັບຕົວຈິງຂອງພວກເຮົາ, ພັດທະນາພາກເໜືອ, ພາກກາງ, ພາກໃຕ້ໃຫ້ກາຍເປັນ ວົງຈອນການທ່ອງທ່ຽວທາງດ້ານທຳມະຊາດ,ວັດທະນະທຳ,ປະຫັວດສາດທີ່ດຶງດູດ,ສາມາດເຊື່ອມຕໍ່ກັນພາຍໃນປະເທດແລະເຊື່ອມຕໍ່ກັບປະເທດໃກ້ຄຽງປັບປຸງຄຸນນະພາບ ການບໍລິການແນໃສ່ ຮັກສາພາບພົດ ແລະ ຊື່ສຽງຂອງປະເທດພວກເຮົາ.

- ສົ່ງເສີມການທ່ອງທ່ຽວແບບອະນຸລັກປະຊາຊົນມີສ່ວນຮ່ວມໃຫ້ຫລາຍຂື້ນໃນຂອບເຂດທົ່ວປະເທດເພື່ອ ປະກອບສ່ວນເຂົ້າໃນການລຸດຜ່ອນຄວາມຍາກຈົນຂອງປະຊາຊົນ.

- ສ້າງເງື່ອນໄຂອຳນວຍຄວາມສະດວກໃນການເຂົ້າ-ອອກປະເທດ ແລະ ການເດີນທາງທ່ອງທ່ຽວພາຍໃນປະເທດເພື່ອສົ່ງເສີມການທ່ອງທ່ຽວເຊື່ອມຕໍ່ກັບບັນດາປະເທດໃກ້ຄຽງແນໃສ່ສ້າງໃຫ້ ສປປ ລາວກາຍເປັນປະເທດບໍລິການທ່ອງທ່ຽວເຊື່ອມຕໍ່ ແລະ ທາງຜ່ານ.

- ປູກຈິດສຳນຶກວຽກງານທ່ອງທ່ຽວໃຫ້ແກ່ພະນັກງານ ລັດຖະກອນ ປະຊາຊົນ ແລະ ສັງຄົມໃນ ທົ່ວປະເທດ ແນໃສ່ເຂົ້າຮ່ວມຢ່າງຕັ້ງໜ້າເຂົ້າໃນການພັດທະນາ ແລະສົ່ງເສີມການທ່ອງທ່ຽວ.

- ຄຸ້ມຄອງ ແລະກວດການດຳເນີນທຸລະກິດໃຫ້ເຂົ້າສູ່ລະບຽບຫລັກການ,ເປັນລະບົບ ແລະເຄື່ອນໄຫວຢ່າງມີປະສິດຕິຜົນ.

- ສະກັດກັ້ນບັນດາການກະທຳ ຫລືການເຄື່ອນໄຫວຕ່າງໆທີ່ເປັນການລະເມີດຕໍ່ລະບຽບຫລັກການ ກໍ່ຄືແຜນຍຸດຕະສາດການທ່ອງທ່ຽວຂອງ ສປປ ລາວ.

1. <u>ແຜນງານການຈັດຕັ້ງ-ພະນັກງານ</u>

- ປັບປຸງກົງຈັກການຈັດຕັ້ງພ້ອມທັງພັດທະນາບຸກຄະລາກອນຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນໃຫ້ມີ ຄວາມເຂັ້ມແຂງ ສາມາດນຳພາຄຸ້ມຄອງ ແລະ ກວດກາການເຄື່ອນໄຫວຂອງຫົວໜ່ວຍທຸລະກິດ ໃນຂະແໜງການທ່ອງທ່ຽວຕາມການແບ່ງຂັ້ນຄຸ້ມຄອງ ແລະ ມີຄວາມຮັບຜິດຊອບ.

- ສົ່ງພະນັກງານຂັ້ນນຳ,ພະນັກງານຄຸ້ມຄອງໄປທັດສະນະສຶກສາ ແລະປ່ຽນບົດຮຽນກັບຕ່າງປະເທດ. ພັດທະນາບຸກຄະລາກອນ ໃນຂະແໜງການທ່ອງທ່ຽວເປັນຕົ້ນ: ພະນັກງານນຳພາ, ພະນັກງານຄຸ້ມຄອງ ແລະ ພະນັກງານວິຊາການທຸກລະດັບ ຢູ່ພາຍໃນ ແລະ ຕ່າງປະເທດ.

- ຫັນລົງຮາກຖານເພື່ອຊ່ວຍເຫຼືອບັນດາແຂວງ ແລະ ເມືອງກ່ຽວກັບການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ.

2 . <u>ແຜນງານ ການສ້າງແຜນ ແລະ ການພັດທະນາແຫລ່ງທ່ອງທ່ຽວ</u>

- ກວດກາ, ປະເມີນຜົນຄືນ ບັນດາແຫລ່ງທ່ອງທ່ຽວທີ່ໄດ້ຮັບການພັດທະນາແນໃສ່ຮັບປະກັນປະສິດທິຜົນທາງດ້ານເສດຖະກິດ, ການປົກປັກຮັກສາສິ່ງແວດລ້ອມທຳມະຊາດ ແລະ ວັດທະນະທຳເພື່ອການພັດທະນາແບບຍືນຍົງ.

- ປະສານສົມທົບກັບຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງເພື່ອຟື້ນຟູບູລະນະບັນດາແຫລ່ງທ່ອງທ່ຽວ ທີ່ຊຸດໂຊມ ຫລື ມີການພັດທະນາທີ່ບໍ່ຖືກຕາມຫລັກວິຊາການ.

- ສືບຕໍ່ສຳຫລວດແຫລ່ງທ່ອງທ່ຽວໃໝ່ ທີ່ຍັງບໍ່ທັນໄດ້ມີການສຳຫລວດ ເພື່ອຈັດບູລິມະສິດໃນການພັດທະນາ ການທ່ອງທ່ຽວແບບຍືນຍົງ.

- ພັດທະນາວົງຈອນການທ່ອງທ່ຽວໃນແຕ່ລະເຂດແຄ້ວນໃຫ້ມີການເຊື່ອມຕໍ່ກັນຫລາຍຂຶ້ນເປັນຕົ້ນ :

✶ <u>ພາກເໜືອ :</u>

- ວົງຈອນທ່ອງທ່ຽວ ແຂວງ ຫລວງນ້ຳທາ-ບໍ່ແກ້ວ - ຕາມເສັ້ນທາງອາ 3 .
- ວົງຈອນທ່ອງທ່ຽວ ແຂວງ ຫລວງນ້ຳທາ-ອຸດົມໄຊ-ຫລວງພະບາງ.
- ວົງຈອນທ່ອງທ່ຽວ ຕາມລຳແມ່ນ້ຳຂອງຕອນເໜືອ ບໍ່ແກ້ວ-ຫລວງນ້ຳທາໄປຍັງ ປະເທດຈີນຕອນໃຕ້ .
- ວົງຈອນທ່ອງທ່ຽວ ຕາມລຳແມ່ນ້ຳຂອງ ບໍ່ແກ້ວ-ອຸດົມໄຊ-ຫລວງພະບາງ.
- ວົງຈອນທ່ອງທ່ຽວ ຫລວງພະບາງ-ຊຽງຂວາງ-ຫົວພັນ.
- ວົງຈອນທ່ອງທ່ຽວ ໄຊຍະບູລີ-ຫລວງພະບາງ-ອຸດົມໄຊ.
- ຈັດຕັ້ງປະຕິບັດແຜນແມ່ບົດພັດທະນາການທ່ອງທ່ຽວປະຫວັດສາດຢູ່ແຂວງຫົວພັນ.
- ປະສານສົມທົບກັບຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງພັດທະນາພື້ນຖານໂຄງລ່າງ ເຊື່ອມຕໍ່ບັນດາ ແຂວງພາກເໜືອ ເປັນຕົ້ນ : ຖະໜົນຫົນທາງ, ສະໜາມບິນ ແລະ ອື່ນໆ.

✶ <u>ພາກກາງ :</u>

- ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງປັບປຸງແຫລ່ງທ່ອງທ່ຽວທີ່ມີຢູ່ແລ້ວຄື : ຢູ່ນະຄອນຫລວງວຽງຈັນໃຫ້ມີມາດຕະຖານ ແລະ ຄຸນນະພາບດີຂຶ້ນ ແລະ ພັດທະນາເພີ່ມເຕີມບາງແຫ່ງທີ່ມີເງື່ອນໄຂ.

- ສົ່ງເສີມການພັດທະນາແຫລ່ງທ່ອງທ່ຽວຢູ່ເຂດເມືອງວັງວຽງ, ອ່າງນ້ຳງື່ມ ແລະ ພູເຂົາຄວາຍ ໃຫ້ເປັນແຫລ່ງທ່ອງທ່ຽວທຳມະຊາດທີ່ສົມບູນແບບ.

- ສົ່ງເສີມການທ່ອງທ່ຽວຕາມເສັ້ນທາງເລກ8, ເລກ 12 ແລະ ເລກ 9 ເຊື່ອມຕໍ່ການທ່ອງທ່ຽວກັບປະເທດຫວຽດ ນາມ ແລະ ໄທ....

- ວາງແຜນພັດທະນາແຫລ່ງທ່ອງທ່ຽວທຳມະຊາດເຂດປ່າສະຫງວນແຫ່ງຊາດພູຫີນປູນແຂວງຄຳມ່ວນ, ປ່າສະຫງວນແຫ່ງຊາດດົງພູວຽງ ແລະ ພູຊ້າງແຫ່ ແຂວງສະຫວັນນະເຂດ

- ປະສານສົມທົບກັບຂະແໜງການ ແລະ ແຂວງທີ່ກ່ຽວຂ້ອງເພື່ອປັບປຸງບູລະນະແຫລ່ງທ່ອງທ່ຽວທີ່ມີຢູ່ແລ້ວໃຫ້ດີຂຶ້ນ.

- ພັດທະນາຈຸດບໍລິການທ່ອງທ່ຽວ ຕາມເສັ້ນທາງເລກ9 ໂດຍນຳໃຊ້ທຶນຊ່ວຍເຫລືອລ້າ ຂອງອົງການໄຈກາ.

★ **ພາກໃຕ້ :**

- ວາງແຜນພັດທະນາການທ່ອງທ່ຽວທຳມະຊາດຄອນພະເພັງ, ຫຼີ່ຜີ ເຂດມະຫານະທີສີພັນດອນ, ເຂດພູພຽງບໍລະເວນ, ວັດພູຈຳປາສັກ ແຂວງຈຳປາສັກ ເຂດຕາດເລາະ, ເຊເສັດ ແຂວງ ສາລະວັນ, ເຂດໜອງໄກໂອກ ແຂວງ ອັດຕະປືເປັນຕົ້ນ.

- ພັດທະນາການທ່ອງທ່ຽວແບບອະນຸລັກປະຊາຊົນມີສ່ວນຮ່ວມຢູ່ 4 ແຂວງພາກໃຕ້ ໂດຍສະເພາະເຂດປ່າສະຫງວນແຫ່ງຊາດເຊປຽນ, ດົງຫົວສາວ ແຂວງ ຈຳປາສັກ, ພູຊຽງທອງ ແລະ ເຊຊັບ ແຂວງ ສາລະວັນ, ດົງອຳພານ ແຂວງອັດຕະປື ແລະ ຢູ່ແຂວງ ເຊກອງ.

- ພັດທະນາວົງຈອນທ່ອງທ່ຽວເຊື່ອມຕໍ່ 4 ແຂວງພາກໃຕ້ກັບປະເທດຫວຽດນາມ,ກຳປູເຈຍ ແລະ ໄທ ໃນກອບການຮ່ວມມື ສາມຫລ່ຽມພັດທະນາ ແລະ ສາມຫລ່ຽມມໍລະກົດ.

3. **ແຜນງານໂຄສະນາ ແລະ ສົ່ງເສີມການທ່ອງທ່ຽວ.**

ເພື່ອຈະສ້າງໃຫ້ປະເທດເຮົາກາຍ ເປັນແຫລ່ງທ່ອງທ່ຽວທີ່ນັກທ່ອງທ່ຽວສາກົນ ໄດ້ຮູ້ຈັກຢ່າງກວ້າງຂວາງ ແລະ ກາຍເປັນຈຸດປາຍທາງຂອງການທ່ອງທ່ຽວທີ່ແທ້ຈິງນັ້ນ,ຈະຕ້ອງໄດ້ບັນລຸບັນດາວຽກງານດັ່ງຕໍ່ໄປນີ້ :

- ສ້າງຕັ້ງສະພາສົ່ງເສີມການຕະຫລາດການທ່ອງທ່ຽວຂື້ນລະຫວ່າງພາກລັດ ແລະ ພາກທຸລະກິດເພື່ອສ້າງ ຄວາມເຂັ້ມແຂງໃນການໂຄສະນາ ແລະ ເລືອກເຟັ້ນຕະຫລາດທີ່ມີເປົ້າໝາຍ.

- ເຂົ້າຮ່ວມງານວາງສະແດງການທ່ອງທ່ຽວຂອງພາກພື້ນ ແລະ ຂອງໂລກ ໃນຕະຫລາດເປົ້າໝາຍຢ່າງຕໍ່ເນື່ອງ.

- ສຶກສາ ວິໄຈຕະຫລາດການທ່ອງທ່ຽວ ເພື່ອຂະຫຍາຍ ແລະ ເປີດກວ້າງຕະຫລາດ.

- ຊຸກຍູ້,ສົ່ງເສີມ,ສ້າງ ແລະ ປັບປຸງ ເວບໄຊ,ອິນເຕີແນັດໃນ ການສະໜອງຂໍ້ມູນຂ່າວສານການທ່ອງທ່ຽວຂອງອົງການທ່ອງທ່ຽວແຫ່ງຊາດ , ຫ້ອງການທ່ອງທ່ຽວແຂວງ ແລະບັນດາຫົວໜ່ວຍທຸລະກິດບໍລິການໃນຂະແໜງການທ່ອງທ່ຽວ.

- ສົ່ງເສີມ ແລະ ສ້າງກິດຈະກຳ ເພື່ອການທ່ອງທ່ຽວ, ໂດຍສະເພາະງານບຸນປະເພນີຕ່າງໆ ຂອງປະຊາຊົນລາວບັນດາເຜົ່າ.

- ພົວພັນປະສານສົມທົບ ແລະ ຮ່ວມມື ຈາກບັນດາສະຖານທູດລາວ ປະຈຳຢູ່ຕ່າງປະເທດ ເພື່ອດຳເນີນການໂຄສະນາການທ່ອງທ່ຽວລາວ.

- ເປັນເຈົ້າການພົວພັນ ກັບບັນດາບໍລິສັດການບິນ ເພື່ອຮ່ວມມືໃນການໂຄສະນາການທ່ອງທ່ຽວ; ອຳນວຍຄວາມສະດວກໃຫ້ນັກຂ່າວດ້ານການທ່ອງທ່ຽວຕ່າງປະເທດເຂົ້າມາຖ່າຍທຳສາລະຄະດີ ທ່ອງທ່ຽວ ຈັດຕັ້ງການມາທັດສະນະບັນດາແຫລ່ງທ່ອງທ່ຽວຂອງລາວ( Fam Trip ) ໃຫ້ແກ່ ສື່ມວນຊົນ ແລະ ບໍລິສັດທ່ອງທ່ຽວຕ່າງປະເທດ ໃນຕະຫລາດທີ່ເປັນເປົ້າໝາຍ.

- ຊຸກຍູ້ ການເປີດສາຍການບິນໂດຍກົງ ຈາກຕ່າງປະເທດໃນຕະຫລາດການທ່ອງທ່ຽວເປົ້າໝາຍຕົ້ນຕໍ.

- ຄົ້ນຄວ້ານະໂຍບາຍການຍົກເວັ້ນວິຊາສໍາລັບບາງຕະຫລາດທີ່ເປັນເປົ້າໝາຍ.

- ຊຸກຍູ້ ນະໂຍບາຍເຮືອນພັກທີ 2 (Second house) ສໍາລັບນັກທ່ອງທ່ຽວໄດ້ມາພັກແຮມ ແລະ ໃຊ້ຈ່າຍຢູ່ປະເທດເຮົາໃນໄລຍະຍາວ.

- ຊຸກຍູ້ການພັດທະນາບ້ານພັກຕາກອາກາດ, ເຮືອນພັກຜູ້ເຖົ້າຕ່າງປະເທດ.

4. <u>ແຜນງານຄຸ້ມຄອງທຸລະກິດການທ່ອງທ່ຽວ</u>

- ເລັ່ງລັດປັບປຸງລະບຽບການແລະຂໍ້ກໍານົດທີ່ມີຢູ່ໃນປັດຈຸບັນໃຫ້ສອດຄ່ອງກັບສະພາບ ການຕົວຈິງ ແລະສ້າງລະບຽບການໃຫມ່ທີ່ຈໍາເປັນເພື່ອຄຸ້ມຄອງທຸລະກິດບໍລິການທ່ອງ ທ່ຽວເຊັ່ນ :

- ຂໍ້ກໍານົດວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງຫ້ອງການທ່ອງທ່ຽວປະຈໍາເມືອງ.
- ຂໍ້ກໍານົດກ່ຽວກັບການຈັດລະດັບສະຖານທີ່ພັກແຮມ ເຊັ່ນ :ໂຮງແຮມ,ເຮືອນພັກ....
- ຂໍ້ກໍານົດກ່ຽວກັບການຄຸ້ມຄອງແຫລ່ງທ່ອງທ່ຽວ.
- ຂໍ້ກໍານົດກ່ຽວກັບການຄຸ້ມຄອງພັດຕະຄານ-ຮ້ານອາຫານ.
- ຂໍ້ກໍານົດກ່ຽວກັບການຄຸ້ມຄອງນັກທ່ອງທ່ຽວຊາຍແດນ
- ຂໍ້ກໍານົດກ່ຽວກັບການເສຍພັນທະເຂົ້າກອງທຶນສົ່ງເສີມການທ່ອງທ່ຽວ ຂອງຫົວໜ່ວຍທຸລະກິດໃນຂະແໜງການບໍລິການທ່ອງທ່ຽວ.

- ເລັ່ງລັດປັບປຸງ, ແບ່ງປະເພດ ແລະ ສ້າງຕັ້ງ ບັນດາຫົວໜ່ວຍທຸລະກິດບໍລິການທ່ອງທ່ຽວໃຫ້ເຄື່ອນໄຫວຖືກຕ້ອງ, ສອດຄ່ອງກັບກົດໝາຍ, ລະບຽບການກ່ຽວກັບຂອງການທ່ອງທ່ຽວເພື່ອ ສະດວກໃນການ ແບ່ງ ຄວາມຮັບຜິດຊອບ.

- ປັບປຸງ ແລະ ແບ່ງປະເພດພະນັກງານນໍາທ່ຽວໃຫ້ສອດຄ່ອງກັບລະບຽບການ ແລະ ຄວາມສາມາດຕົວຈິງຂອງເຂົາເຈົ້າເພື່ອສະດວກໃນ ການກວດກາ ແລະ ຄຸ້ມຄອງພະນັກງານນໍາທ່ຽວໃນທົ່ວປະເທດ.

- ຈັດຕັ້ງການເຜີຍແຜ່ ກົດໝາຍວ່າດ້ວຍການທ່ອງທ່ຽວ ແລະ ດໍາລັດຈັດຕັ້ງປະຕິບັດ ໃນທົ່ວປະເທດເພື່ອເຮັດໃຫ້ສັງຄົມມີຄວາມເຂົ້າໃຈໃນການຈັດຕັ້ງປະຕິບັດ.

- ຊຸກຍູ້ ແລະປະສານງານກັບຂະແໜງການທີ່ກ່ຽວຂ້ອງປັບປຸງ,ຊອກຫາເງື່ອນໄຂເພື່ອເປີດດ່ານເພີ່ມອີກພ້ອມທັງ ຍົກລະດັບການບໍລິການ ຢູ່ຕາມດ່ານສາກົນເຂົ້າ-ອອກເມືອງ ໃຫ້ມີຄວາມສະດວກ ແລະ ວ່ອງໄວ ດ້ວຍອັດທະຍາໃສທີ່ດີ ແລະເປັນທີ່ປະທັບໃຈຂອງນັກທ່ອງທ່ຽວ.

- ຊຸກຍູ້ ແລະ ປະສານງານກັນຢ່າງກົມກຽວກັບບັນດາຂະແໜງການຕ່າງໆ ທັງພາກລັດ ແລະເອກະຊົນຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອອໍານວຍຄວາມສະດວກ ແລະ ສ້າງເງື່ອນໄຂດຶງດູດ ນັກທ່ອງທ່ຽວໃຫ້ເຂົ້າມາປະເທດເຮົາເພີ່ມຂຶ້ນ.

- ຈັດຕັ້ງ,ປັບປຸງ ສະມາຄົມທຸລະກິດໃນຂະແໜງການທ່ອງທ່ຽວເຊັ່ນ : ສະມາຄົມທຸລະກິດ ທ່ອງທ່ຽວ, ສະມາຄົທຸລະກິດໂຮງແຮມ-ຮ້ານອາຫານລາວ, ສະມາຄົມຂົນສົ່ງທ່ອງທ່ຽວ..... ໃຫ້ມີການເຄື່ອນໄຫວຢ່າງ ຕັ້ງໜ້າເຂົ້າໃນການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວຂອງລາວ.

5. ແຜນງານພັດທະນາບຸກຄະລາກອນ

- ເລັ່ງລັດສ້າງຄູຝຶກດ້ານວິຊາຕ່າງໆ ກ່ຽວກັບວຽກງານທ່ອງທ່ຽວ ແລະ ໂຮງແຮມ ໃນໄລຍະສັ້ນເຊັ່ນ : ວິຊາຄຸ້ມຄອງບໍລິຫານ, ຄຸ້ມຄອງທຸລະກິດ, ເຕັກນິກການນຳທ່ຽວ ແລະ ອື່ນໆ ດ້ວຍຫຼາຍຮູບການທີ່ສອດຄ່ອງ ແນໃສ່ ເພື່ອນຳເອົາຄວາມຮູ້ດັ່ງກ່າວ ເຂົ້າໃນການພັດທະນາວຽກງານທ່ອງທ່ຽວ.

- ຍາດແຍ່ງທຶນຊ່ວຍເຫຼືອຈາກປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນເພື່ອສ້າງສູນຝຶກອົບຮົມວິຊາຊີບທ່ອງທ່ຽວ ແລະ ໂຮງແຮມ ເພື່ອອົບຮົມກໍ່ສ້າງພະນັກງານ ລັດຖະກອນ ແລະ ທັງສະໜອງໃຫ້ ແກ່ຫົວໜ່ວຍທຸລະກິດ ບໍລິການຕ່າງໆໃນທົ່ວປະເທດ ຕາມຄວາມຕ້ອງການຂອງ ວຽກງານທ່ອງທ່ຽວ ໃນແຕ່ລະໄລຍະ.

- ສົ່ງນັກສຶກສາຈຳນວນໜຶ່ງ ໄປຮ່ຳຮຽນໄລຍະຍາວກ່ຽວກັບວິຊາສະເພາະດັ່ງກ່າວ ໃນຕ່າງປະເທດ ເພື່ອອະນາຄົດອັນຍາວນານ.

- ປັບປຸງ, ສ້າງ ແລະ ກຳນົດຫລັກສູດ ກ່ຽວກັບການບໍລິການທ່ອງທ່ຽວ ໃຫ້ເປັນມາດຕະຖານ ອັນແນ່ນອນເພື່ອ ນຳໃຊ້ ເຂົ້າໃນການຮຽນການສອນ ແລະ ພັດທະນາບຸກຄະລາກອນ ໃນຂະແໜງການທ່ອງທ່ຽວ.

- ສົມທົບກັບສະຖາບັນສຶກສາທັງພາກລັດ ແລະເອກະຊົນ,ແນໃສ່ປັບປຸງຄຸນະພາບການສິດສອນ.

6. ແຜນງານຮ່ວມມືກັບສາກົນ

- ເພີ້ມທະວີການພົວພັນ ແລະ ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນເພື່ອຍາດແຍ່ງ ການຊ່ວຍ ເຫລືອດ້ານທຶນຮອນ ແລະ ວິຊາການເຂົ້າໃສ່ການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ, ການພັດທະນາບຸກຄະລາກອນຂອງຂະແໜງການທ່ອງທ່ຽວ.

- ສືບຕໍ່ຈັດຕັ້ງປະຕິບັດບັນດາໂຄງການ ແລະ ແຜນງານທີ່ໄດ້ມີ ຂໍ້ຕົກລົງຮ່ວມກັນໃນກອບການຮ່ວມມື : ອາຊຽນ, ອະນຸພາກພື້ນແມ່ນ້ຳຂອງ, ສາມຫລ່ຽມພັດທະນາ, ສາມຫລ່ຽມນໍລະກົດ, ແລວເສດຖະກິດຕາເວັນອອກ-ຕາເວັນຕົກ, ແລວເສດຖະກິດເໜືອໃຕ້ ແລະ ກອບຮ່ວມມືສອງຝ່າຍກັບປະເທດອື່ນໆ.

- ສືບຕໍ່ ແລະ ເອົາໃຈໃສ່ປະສານສົມທົບກັບອົງການຈັດຕັ້ງສາກົນເພື່ອສ້າງໂຄງການ ແລະ ຊອກແຫລ່ງທຶນພັດທະນາ ແລະ ສົ່ງເສີມການທ່ອງທ່ຽວເປັນຕົ້ນ : ອົງການທ່ອງທ່ຽວໂລກ, ອົງການ SNV , ອົງການພັດເຢຍລະມັນ, ອົງການໄຈກາ, ອົງການພັດທະນາປະເທດຝຣັ່ງ, ອົງການພັດທະນາປະເທດ ນິວຊີແລນ, ທະນາຄານພັດທະນາອາຊີ, ທະນາຄານໂລກ ແລະ ອົງການຈັດຕັ້ງສາກົນອື່ນໆ.

7. ແຜນງານສົ່ງເສີມການລົງທຶນ

7.1 ການລົງທຶນຂອງລັດ

ປະສານສົມທົບກັບຄະນະກຳມະການແຜນການ ແລະ ການລົງທຶນ ແລະພາກສ່ວນທີ່ກ່ຽວຂ້ອງຕ່າງໆ ເພື່ອກຳນົດບຸລິມະສິດການລົງທຶນກໍ່ສ້າງພື້ນຖານໂຄງລ່າງ ເພື່ອການທ່ອງທ່ຽວເປັນຕົ້ນ ຖະໜົນ

ທຶນ ທາງເຊື່ອມຕໍ່ລະຫວ່າງແຂວງ, ເສັ້ນທາງເຂົ້າແຫລ່ງທ່ອງທ່ຽວ, ເສັ້ນທາງເຊື່ອມຕໍ່ລະຫວ່າງປະເທດ, ການປັບປຸງ ແລະ ກໍ່ສ້າງສະໜາມບິນ, ກໍ່ສ້າງທ່າເຮືອ ແລະ ລະບົບການຂົນສົ່ງທາງນ້ຳໃນພື້ນທີ່ງ ມີການທ່ອງທ່ຽວມີການຂະຫຍາຍຕົວສູງ, ຂະຫຍາຍເຄືອຄ່າຍໂທລະຄົມມະນາຄົມ, ໄຟຟ້າ, ນ້ຳປະປາ ແລະ ອື່ນໆ ທີ່ເອກະຊົນບໍ່ສາມາດລົງທຶນໄດ້.

## 7.2. ການລົງທຶນຂອງພາກເອກກະຊົນ

ປະສານສົມທົບກັບຄະນະກຳມະການແຜນການ ແລະ ການລົງທຶນ ແລະ ພາກສ່ວນທີ່ກ່ຽວຂ້ອງຕ່າງໆເພື່ອສົ່ງເສີມໃຫ້ມີການລົງທຶນ ຂອງພາກສ່ວນເອກະຊົນ ໃນການສ້າງສິ່ງຮອງຮັບ ການທ່ອງທ່ຽວ ເຊັ່ນ : ໂຮງແຮມ, ເຮືອນພັກ, ຣີສອດ, ຮ້ານອາຫານ, ການຂົນສົ່ງ, ສະຖານທີ່ທ່ອງທ່ຽວ, ການຜະລິດເຄື່ອງຫັດຖະກຳ, ກະສິກຳ ແລະ ອື່ນໆ.

## II. ຄາດໝາຍສູ້ຊົນຮອດປີ 2010 .

ເພື່ອເຮັດໃຫ້ແຜນການດັ່ງກ່າວໄດ້ຮັບຜົນສຳເລັດຕາມທີ່ໄດ້ກຳນົດໄວ້ ອົງການທ່ອງທ່ຽວແຫ່ງຊາດຈະຕ້ອງອອກແຮງປະຕິບັດໃຫ້ໄດ້ຕາມຄາດໝາຍສູ້ຊົນດັ່ງລຸ່ມນີ້ :

- ປັບປຸງກົງຈັກການຈັດຕັ້ງ ແລະ ກົນໄກການເຮັດວຽກໃຫ້ສອດຄ່ອງກັບສະພາບການໃນປັດຈຸບັນ, ຖືກຕ້ອງຕາມລະບຽບກົດໝາຍ, ຍົກລະດັບ ຫ້ອງການທ່ອງທ່ຽວແຂວງໃຫ້ເປັນພະແນກ ແລະ ສ້າງຕັ້ງຫ້ອງການທ່ອງທ່ຽວຂັ້ນເມືອງຂຶ້ນຢູ່ໃນບ່ອນທີ່ມີການທ່ອງທ່ຽວຂະຫຍາຍຕົວ.
- ຊຸກຍູ້ ແລະ ປະສານສົມທົບກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງໃນການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວໃນຂອບເຂດທົ່ວປະເທດ.ປຶກສາຫາລືພ້ອມກັນແກ້ໄຂ ຂໍ້ຫຍຸ້ງຍາກທີ່ເປັນອຸປະສັກ ໃນການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ.
- ປັບປຸງນະໂຍບາຍ ແລະ ລະບຽບການກ່ຽວກັບການຄຸ້ມຄອງ ດ່ານເຂົ້າ-ອອກໃຫ້ລະອຽດ, ຈະແຈ້ງເພື່ອ ອຳນວຍຄວາມສະດວກໃນການເຂົ້າ-ອອກຂອງນັກທອ່ງທ່ຽວ, ກຳນົດເງື່ອນໄຂໃນການເປີດດ່ານສາກົນ ແຫ່ງໃໝ່ທີ່ມີທ່າແຮງດ້ານການທ່ອງທ່ຽວ, ມີຂະແໜງການທີ່ຮັບຜິດຊອບດ່ານຢ່າງຈະແຈ້ງ, ການເກັບ ຄ່າທຳນຽມກໍໃຫ້ເປັນເອກກະພາບກັນ ແລະ ມີ ຄວາມໂປ່ງໃສ່.
- ຄົ້ນຄວ້າຍາດແຍ່ງທຶນຮອນ ເພື່ອພັດທະນາໂຄງການທ່ອງທ່ຽວແບບອະນຸລັກປະຊາຊົນມີສ່ວນຮ່ວມສູ້ຊົນຮອດປີ 2010 ໃຫ້ຂະຫຍາຍການພັດທະນາໄປທົ່ວທຸກແຂວງ, ສ່ວນແຂວງທີ່ມີການພັດທະນາແລ້ວກໍຕ້ອງຂະຫຍາຍອອກສູ່ຫລາຍໆແຫ່ງຕື່ມອີກ.
- ຈັດປະເພດ ແລະ ຂຶ້ນບັນຊີ ບັນດາແຫລ່ງທ່ອງທ່ຽວທີ່ສຳຫລວດແລ້ວ ແລະ ທີ່ຈະສືບຕໍ່ສຳຫລວດໃນໄລຍະ ແຕ່ 2006-2010 ນີ້.
- ສ້າງແຜນແມ່ບົດກ່ຽວກັບການພັດທະນາການທ່ອງທ່ຽວເປັນເຂດແຄ້ວນໃຫ້ສຳເລັດໃນປີ 2006.
- ສ້າງແຜນແມ່ບົດກ່ຽວກັບການພັດທະນາແຫລ່ງທ່ອງທ່ຽວ ບັນດາແຂວງໃນຂອບເຂດທົ່ວປະເທດໃຫ້ສຳເລັດໃນປີ 2007.

- ສູ້ຊົນຮອດປີ 2010 ໃຫ້ສາມາດດຶງດູດນັກທ່ອງທ່ຽວເຂົ້າມາ ສປປ ລາວ ໃຫ້ໄດ້ 1,6 ລ້ານຄົນ, ສ້າງລາຍຮັບໃຫ້ໄດ້ 250 ລ້ານໂດລາສະຫະລັດ.

- ວິໄຈ ແລະ ຈັດບູລິມະສິດການພັດທະນາບັນດາແຫລ່ງທ່ອງທ່ຽວ ທີ່ຜ່ານການສຳຫລວດແລ້ວຕາມເງື່ອນໄຂເຫມາະສົມຂອງແຕ່ລະແຫລ່ງ ສູ້ຊົນຮອດປີ 2010 ໃຫ້ມີແຫລ່ງທ່ອງທ່ຽວທີ່ເປີດບໍລິການນຳໃຊ້ເຖິງ 600 ແຫ່ງ.

- ສົ່ງເສີມການລົງທຶນ ແລະ ສ້າງສະຖານທີ່ພັກແຮມຮອດປີ 2010 ໃຫ້ໄດ້ 20.000 ຫ້ອງນອນ.

- ຊຸກຍູ້ ແລະ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການພັດທະນາພື້ນຖານໂຄງລ່າງຕ່າງໆ ເປັນຕົ້ນ : ຖະໜົນຫົນທາງຕາມແລວ ເສດຖະກິດ, ສະໜາມບິນ ແລະ ອື່ນໆ.

- ສົມທົບກັບທ້ອງຖິ່ນໃນການຄຸ້ມຄອງຕາມຂະແໜງການທ່ອງທ່ຽວ ແລະສົ່ງເສີມໃຫ້ ພາກສ່ວນທຸລະກິດເຂົ້າຮ່ວມຢ່າງຕັ້ງໜ້າເຂົ້າໃນການພັດທະນາ ການທ່ອງທ່ຽວ.

ລັດຖະມົນຕີ,

ປະທານອົງການທ່ອງທ່ຽວແຫ່ງຊາດ